ແຜນຈັດປະສົບການ

# ທຳມະຊາດອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ແຜນຈັດປະສົບການ ທຳມະຊາດອ້ອມຕົວເຮົາ ຊັ້ນອະນຸບານສຶກສາປີທີ 3 2016

# ແຜນຈັດປະສົບການ

# ທຳມະຊາດອ້ອມຕົວເຮົາ

# ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ພູມະລີ ແສງຈັນນະວົງ
ສຸດດາພອນ ແກ້ວບົວສະໄໝ
ມະນີວອນ ອາດຜາສຸກ
ບົວວອນ ພົງລັດສະໝີ
ລັດສະໝີ ນາມເມືອງ
ຄຳມະລີ ໃຈວິມານ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ແສງມະນີ ສຸພັນທະລີບ
ຈຸນລາ ເຂັມທອງ
ວຽງແກ້ວ ພົມມະຈັກ

ເຂົ້າໜ້າໂດຍ: ດວງມາລາ ນາກບຸນຕາ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---====000====----

7498-

ກະຊວງສຶກສາທິການ ແລະ ກິລາ　　　　　　　　ເລກທີ　　ສສກ.ສວສ

ນະຄອນຫຼວງວຽງຈັນ, ວັນທີ 09 DEC 2015

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປື້ມປະກອບການຮຽນ-ການສອນ**

**ສຳລັບຊັ້ນອະນຸບານສຶກສາ ປີທີ 3**

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປື້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 3 ສະບັບປະຕິຮູບ ໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ລີຕູ ບົວປາວ

# ຄໍານໍາ

ແຜນການຈັດປະສົບການສະບັບນີ້ຮຽບຮຽງຂຶ້ນ ເພື່ອເປັນບ່ອນອີງນໍາໃຊ້ເຂົ້າໃນການວາງແຜນ ການສອນ ແລະ ໃຫ້ຄູສອນນໍາໃຊ້ໃນການແຕ່ງບົດສອນຄວບຄູ່ກັບປຶ້ມແນະນໍາກິດຈະກໍາການຮຽນ-ການສອນ ໂດຍໃຫ້ແທດເໝາະກັບພັດທະນາການຂອງເດັກອະນຸບານອາຍຸ 5 ປີ ຕາມຄວາມຕ້ອງການຮຽນຮູ້ຂອງເຂົາເຈົ້າ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

ເນື້ອໃນຄວາມຮູ້ທີ່ກໍານົດໃນກິດຈະກໍາການຫຼິ້ນ ແລະ ຮຽນຮູ້ແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກໍາການຫຼິ້ນ ແລະ ຮຽນຮູ້ໃນແຕ່ລະວັນປະກອບມີກິດຈະກໍາເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການສຶກສາ; ທັງນີ້ກໍ ເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບດ້ານການຮຽນຂອງເດັກອະນຸບານປີທີ 3 (ອາຍຸ 5 ປີ) ໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ, ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາກ່ອນເຂົ້າຮຽນໃນຊັ້ນປະຖົມ.

ແຜນການຈັດປະສົບການສະບັບນີ້ ເນັ້ນໜັກການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນໂດຍຍຶດຫຼັກການສໍາຄັນດັ່ງນີ້:

1. ເດັກນ້ອຍໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທໍາມະຊາດຂອງເດັກນ້ອຍ.
2. ເດັກນ້ອຍໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຢ່າງອິດສະຫຼະຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລໍາດັບໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມຕາມຄວາມສົນໃຈ.
3. ການຈັດກິດຈະກໍາການຮຽນຮູ້ ແມ່ນໃຫ້ເດັກໄດ້ປະຕິບັດຕົວຈິງໃນລັກສະນະຂອງການຮຽນແບບຕັ້ງໜ້າ ຫຼື ເອົາເດັກນ້ອຍເປັນໃຈກາງ, ເພື່ອເປີດໂອກາດໃຫ້ເດັກນ້ອຍໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ດ້ວຍຕົນເອງໂດຍຜ່ານການຫຼິ້ນທີ່ເບີກບານມ່ວນຊື່ນສອດຄ່ອງກັບທໍາມະຊາດຂອງເດັກນ້ອຍແຕ່ລະຄົນທີ່ມີຄວາມແຕກຕ່າງກັນໃນການຫຼິ້ນ ແລະ ການຮຽນຮູ້ໃນແຕ່ລະກິດຈະກໍາຄື: ກິດຈະກໍາເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການສຶກສາ.
4. ການຈັດປະສົບການໄດ້ເນັ້ນໜັກເນື້ອໃນທີ່ເດັກຄວນຮຽນຮູ້ຈາກສັງຄົມ, ວັດທະນະທໍາ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໂດຍຄໍານຶງເຖິງຄວາມແຕກຕ່າງຂອງເດັກແຕ່ລະຄົນ.

ນອກນັ້ນ ໃນແຜນການຈັດປະສົບການສະບັບນີ້ຍັງໄດ້ແນະນໍາການຈັດຫ້ອງ, ທັກສະທີ່ຄວນພັດທະນາເພື່ອໃຫ້ສອດຄ່ອງກັບພັດທະນາການຂອງເດັກອາຍຸ 5 ປີ ແລະ ການຈັດປະສົບການໃນໜ່ວຍການສອນໃຫ້ຄູໄດ້ນໍາໄປໃຊ້ໃນການຈັດການຮຽນ-ການສອນຂອງຕົນ. ເປັນທີ່ແນ່ນອນວ່າ ເອກະສານສະບັບນີ້ປາສະຈາກຄວາມຂາດຕົກບົກຜ່ອງບໍ່ໄດ້ ຄະນະຮຽບຮຽງ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາມີຄວາມຍິນດີຕ້ອນຮັບທຸກຄໍາຄິດເຫັນທີ່ສ້າງສັນຈາກຜູ້ຊົມໃຊ້ ເພື່ອປັບປຸງໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


ໜ້າ

**ຈຸດປະສົງລວມ** ........ 1-6

**ຈຸດປະສົງສຳລັບອາທິດທີ 1** ........ 7-9

**1. ທຳມະຊາດອ້ອມຕົວເຮົາ, ອາທິດທີ 1: ມື້ທີ 1**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ ........ 10

ກິດຈະກຳວົງມົນ: ສິ່ງທີ່ມີຊີວິດ ........ 11

ກິດຈະກຳສິລະປະສ້າງສັນ: ຕັດ-ຕິດເຈ້ຍເປັນຮູບພາບດອກໄມ້ ........ 12

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແມວຈັບໜູ ........ 13

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຕິກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ) ........ 14

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ. ........ 15

**2. ທຳມະຊາດອ້ອມຕົວເຮົາ, ອາທິດທີ 1: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບການນັບ ........ 16

ກິດຈະກຳວົງມົນ: ສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ ........ 17

ກິດຈະກຳສິລະປະສ້າງສັນ: ແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ ........ 18

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນມັດຕາທວາຍສຽງ ຮ້ອງຂອງສັດ: ........ 19

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ ........ 20

ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດທຳມະຊາດ ແລະ ມຸມສິລະປະສ້າງສັນ ........ 21

**3. ທຳມະຊາດອ້ອມຕົວເຮົາ, ອາທິດທີ 1: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ສິ່ງທີ່ມີຊີວິດ ........ 22

ກິດຈະກຳວົງມົນ: ການຈະເລີນເຕີບໃຫຍ່ຂອງຄົນ ແລະ ສັດ ........ 23

ກິດຈະກຳສິລະປະສ້າງສັນ: ແຕ້ມຮູບພາບໄກ່ຕາມຮອຍຈ້ຳ ........ 24

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ. ........ 25

ກິດຈະກຳເກມການສຶກສາ: : ເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ. ........ 26

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເກມການສຶກສາ. ........ 27

**4. ທຳມະຊາດອ້ອມຕົວເຮົາ, ອາທິດທີ 1: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ:ເຄື່ອນໄຫວເປັນຜູ້ນຳ ແລະ ຜູ້ປະຕິບັດຕາມທີ່ນາຍຄູກຳນົດ ........ 28

ກິດຈະກຳວົງມົນ: ກິດຈະກຳວົງມົນ: ຕົ້ນຖົ່ວ ແລະ ຜັກບົ້ງ ........ 29

ກິດຈະກຳສິລະປະສ້າງສັນ: ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້ ........ 30

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້. ........ 31

ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ ........ 32

ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດທຳມະຊາດ ແລະ ມຸມບົດບາດສົມມຸດ. ........ 33

**5. ທຳມະຊາດອ້ອມຕົວເຮົາ, ອາທິດທີ 1: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ: ........ 34

ກິດຈະກຳວົງມົນ: ການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ ........ 35

ກິດຈະກຳສິລະປະສ້າງສັນ: ສານລາຍຍັດສະຫຼັບສີແດງ, ຂາວ ແລະ ຟ້າ ........ 36

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນຜອງຊາຍ ໃສ່ກະປ໋ອງ. ........ 37

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ ... 38
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ. ... 39
**ຈຸດປະສົງສຳລັບອາທິດທີ 2:** . ... 40-42

**6. ທຳມະຊາດອ້ອມຕົວເຮົາ, ອາທິດທີ 2: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຕາມຄຳສັ່ງຕາມນາຍຄູແນະນຳ ... 43
ກິດຈະກຳວົງມົນ: ສິ່ງທີ່ບໍ່ມີຊີວິດ ... 44
ກິດຈະກຳສິລະປະສ້າງສັນ: ແຕ້ມຮູບພາບແມ່ນ້ຳຕາມແບບ ... 45
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ. ... 46
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ ... 47
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ ... 48

**7. ທຳມະຊາດອ້ອມຕົວເຮົາ, ອາທິດທີ 2: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມຕາມຈິນຕະນາການ ... 49
ກິດຈະກຳວົງມົນ: ປະເພດ ແລະ ລັກສະນະຂອງດິນ ... 50
ກິດຈະກຳສິລະປະສ້າງສັນ: ໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ ... 51
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນເຊື່ອງຕຸກກະຕາ. ... 52
ກິດຈະກຳເກມການສຶກສາ: ເກມບວກຮູບພາບກ້ອນສີ່ແຈຈຳນວນ 1-5 ... 53
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມວິທະຍາສາດທຳມະຊາດ ... 54

**8. ທຳມະຊາດອ້ອມຕົວເຮົາ, ອາທິດທີ 2: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດລຳເດີນ ດິນດີ ... 55
ກິດຈະກຳວົງມົນ: ຄຸນປະໂຫຍດ ແລະ ການປົກປັກຮັກສາດິນ ... 56
ກິດຈະກຳສິລະປະສ້າງສັນ:ປັ້ນດິນເປັນຮູບຄົກ ແລະ ສາກ ... 57
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນສິ່ງດອກໄມ້. ... 58
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ ... 59
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ. ... 60

**9. ໜ່ວຍຕົວຂອງຂ້ອຍ, ອາທິດທີ 2: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຕາມຄຳສັ່ງຕາມນາຍຄູແນະນຳ ... 61
ກິດຈະກຳວົງມົນ: ຫີນ ... 62
ກິດຈະກຳສິລະປະສ້າງສັນ:ແຕ້ມຮູບພາບຖ້ວຍ ແລະ ຈອກ ຕາມຮອຍຈ້ຳ ... 63
ກິດຈະກຳການຫຼິ້ນກາງແຈ້ງ: ການຫຼິ້ນດິນຊາຍ: ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ. ... 64
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ ... 65
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ ... 66

**10. ທຳມະຊາດອ້ອມຕົວເຮົາ, ອາທິດທີ 2: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມຕາມນາຍຄູກຳນົດ ... 67
ກິດຈະກຳວົງມົນ: ນ້ຳ ... 68
ກິດຈະກຳສິລະປະສ້າງສັນ: ຂີດຂຽນສະຫຼະ ຸ ຕາມຄຳສັບ ... 69
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ. ... 70
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ ... 71
ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດທຳມະຊາດ ແລະ ມຸມອ່ານ. ... 72
**ຈຸດປະສົງສຳລັບອາທິດທີ 3:** . ... 73-74

**11.ທຳມະຊາດອ້ອມຕົວເຮົາ, ອາທິດທີ 3: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳສີພັນດອນນ້ຳ ......... 75

ກິດຈະກຳວົງມົນ: ກາງເວັນ ......... **76**

ກິດຈະກຳສິລະປະສ້າງສັນ: ແຕ້ມ ແລະ ທາສີຮູບພາບດວງອາທິດ ......... 77

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນໂພງພາງຕາບອດ. ......... 78

ກິດຈະກຳເກມການສຶກສາ: ເກມລຽນຈັບຄູ່ທີ່ຄືກັບຮູບພາບໂມງທີ່ມີເວລາຄືກັນ. ......... 79

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ ......... 80

**12. ທຳມະຊາດອ້ອມຕົວເຮົາ, ອາທິດທີ 3: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງໃນການ ປະຕິບັດຕົນໃນຕອນເຊົ້າ, ສວຍ: ......... 81

ກິດຈະກຳວົງມົນ: ການປະຕິບັດຕົນໃນແຕ່ລະຊ່ວງເວລາ ......... 82

ກິດຈະກຳສິລະປະສ້າງສັນ: ຈີກຮູບພາບດວງອາທິດຕາມຮອຍຈ້ຳ ......... 83

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງອັນນົກເຂົ້າຮັງ. ......... 84

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັບຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ ......... 85

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ. ......... 86

**13.ທຳມະຊາດອ້ອມຕົວເຮົາ, ອາທິດທີ 3: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ ......... 87

ກິດຈະກຳວົງມົນ: ກາງຄືນ ......... 88

ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳ ......... 89

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຫຼັງຕິດກັນ. ......... 90

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັບຕົວເລກແຕ່ 1-15 ......... 91

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ ......... 92

**14.ທຳມະຊາດອ້ອມຕົວເຮົາ, ອາທິດທີ 3: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງກາງຄືນ ......... 93

ກິດຈະກຳວົງມົນ: ວັນໃນໜຶ່ງອາທິດ ......... 94

ກິດຈະກຳສິລະປະສ້າງສັນ: ຮ້ອຍກະດຸມສະຫຼັບສີ ......... 95

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຕັ່ງວິເສດ. ......... 96

ກິດຈະກຳເກມການສຶກສາ: ເກມຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ ......... 97

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ. ......... 98

**15.ທຳມະຊາດອ້ອມຕົວເຮົາ, ອາທິດທີ 3: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບ ບົດເພງ ວັນໃນໜຶ່ງອາທິດ ......... 99

ກິດຈະກຳວົງມົນ: ເດືອນໃນໜຶ່ງປີ ......... 100

ກິດຈະກຳສິລະປະສ້າງສັນ: ເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ ......... 101

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງອັນຍ່າງສາມຂາ. ......... 102

ກິດຈະກຳເກມການສຶກສາ: ເກມຈັບຄູ່ຊື່ເດືອນກັບຕົວເລກ 1-12 ......... 103

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ. ......... 104

**ຈຸດປະສົງສຳລັບອາທິດທີ 4:** ......... 105-106

**16.ທຳມະຊາດອ້ອມຕົວເຮົາ, ອາທິດທີ 4: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ......... 107

ກິດຈະກຳວົງມົນ: ລະດູການໃນປະເທດລາວ ........ 108
ກິດຈະກຳສິລະປະສ້າງສັນ:ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ ........ 109
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນເສືອໄລ່ໝູ. ........ 110
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ ........ 111
ກິດຈະກຳການຫຼິ້ນຕາມມຸມ: ສິລະປະສ້າງສັນ ແລະ ມຸມເກມການສຶກສາ ........ 112
**17.ທຳມະຊາດອ້ອມຕົວເຮົາ, ອາທິດທີ 4: ມື້ທີ 2**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ
ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ ........ 113
ກິດຈະກຳວົງມົນ: ລັກສະນະອາກາດ ........ 114
ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 14 ຕາມຮອຍຈ້ຳ ........ 115
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນກັນຢຽບພາກປຸມເປົ້າ. ........ 116
ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ ........ 117
ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດທຳມະຊາດ ແລະ ມຸມສິລະປະສ້າງສັນ. ........ 118
**18.ທຳມະຊາດອ້ອມຕົວເຮົາ, ອາທິດທີ 4: ມື້ທີ 3**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ
ຄຸນປະໂຫຍດຂອງລະດູຝົນ ........ 119
ກິດຈະກຳວົງວົນ: ລະດູຝົນ ........ 120
ກິດຈະກຳສິລະປະສ້າງສັນ: ຈີກ-ຕິດຮູບພາບຕົ້ນໄມ້ ........ 121
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນຊາຍ: ຮ່ອນຊາຍ. ........ 122
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ ........ 123
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ ........ 124
**19.ທຳມະຊາດອ້ອມຕົວເຮົາ, ອາທິດທີ 4: ມື້ທີ 4**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຕາມຄຳສັ່ງຕາມນາຍຄູແນະນຳ ........ 125
ກິດຈະກຳວົງມົນ: ລະດູແລ້ງ ........ 126
ກິດຈະກຳສິລະປະສ້າງສັນ: ຂຽນຄຳສັບທີ່ປະສົມສະຫຼະ× ........ 127
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ. ........ 128
ກິດຈະກຳເກມການສຶກສາ: ເກມຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ. ........ 129
ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ. ........ 130
**20.ທຳມະຊາດອ້ອມຕົວເຮົາ, ອາທິດທີ 4: ມື້ທີ 5**
ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມນາຍຄູກຳນົດ: ........ 131
ກິດຈະກຳວົງມົນ: ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ ........ 132
ກິດຈະກຳສິລະປະສ້າງສັນ: ຕັດ-ຕິດຮູບພາບເສື້ອກັນໜາວ ........ 133
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ. ........ 134
ກິດຈະກຳເກມການສຶກສາ: ເກມຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບ ........ 135
ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ. ........ 136
ເອກກະສານອ້າງອີງ ........ 137

# ຈຸດປະສົງລວມ

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ, ເລື່ອງທີ່ນາຍຄູເລົ່າ, ບົດເພງຢ່າງມ່ວນຊື່ນ.
4. ສະແດງທ່າທາງຕາມນາຍຄູອອກແບບຢ່າງປະກອບການນັບໄດ້ຖືກຕ້ອງ.
5. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງ, ບົດລຳສີພັນດອນໄດ້ຖືກຕ້ອງ.
6. ສະແດງທ່າງເປັນຜູ້ນຳ ແລະ ຜູ້ປະຕິບັດຕາມນາຍຄູກຳນົດໄດ້ຖືກຕ້ອງ.
7. ສະແດງທ່າທາງຕາມສຽງສັນຍານເຄາະ ກະປ໋ອງໄດ້ຖືກຕ້ອງ.
8. ປອດໄພໃນເວລາສະແດງທ່າທາງ.
9. ອົດທົນໃນເວລາສະແດງທ່າທາງ.
10. ເວົ້າຄຳສຸພາບກັບໝູ່ເພື່ອນ.
11. ມ່ວນຊື່ນໃນເວລາສະແດງທ່າທາງ.
12. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
13. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
14. ກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

1. ບອກຊື່ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດໄດ້ຖືກຕ້ອງ.
2. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ, ອ່ານຄຳສັບທີ່ມີ ແລະ ບໍ່ມີ ວັນນະຍຸດ ່, ້ ໄດ້ຊັດເຈນ.
3. ນັບຈຳນວນຮູບພາບ1-10ໄດ້ຖືກຕ້ອງ.
4. ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.
5. ບອກສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
6. ບອກການເຕີບໃຫຍ່ຂອງຄົນ, ສັດ, ຕົ້ນຖົ່ວ ແລະ ຜັກບົ້ງໄດ້ຖືກຕ້ອງ.
7. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
8. ເລົ່າຄຳຄ່ອງ, ຮ້ອງເພງ, ເວົ້າຄຳສັບ, ປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ເພງ, ນິທານໄດ້ຊັດເຈນ.
9. ອ່ານຕົວເລກຕາມລຳດັບແຕ່ 0-9 ໄດ້ຖືກຕ້ອງ.
10. ບອກການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
11. ບອກຮູບສີ່ແຈ, ວົງມົນໄດ້ຖືກຕ້ອງ.
12. ບອກປະເພດ ແລະ ລັກສະນະຂອງດິນໄດ້ຖືກຕ້ອງ.
13. ບອກຄຸນປະໂຫຍດ ແລະ ການປົກປັກຮັກສາດິນໄດ້ຖືກຕ້ອງ.
14. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
15. ບອກລັກສະນະ ແລະ ຄຸນປະໂຫຍດຂອງຫີນໄດ້ຖືກຕ້ອງ.
16. ສັງເກດ ແລະ ອ່ານຕົວເລກໃນເງິນໄດ້ຖືກຕ້ອງ.
17. ບອກການປ່ຽນແປງສະພາບ ແລະ ບອກປະໂຫຍດຂອງນ້ຳໄດ້ຖືກຕ້ອງ.
18. ປະຕິບັດຕົວຈິງໃນການທົດລອງການປ່ຽນແປງສະພາບຂອງນ້ຳ.
19. ບອກເວລາກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນໄດ້ຖືກຕ້ອງ.
20. ອ່ານຕົວເລກອາຣັບຈາກໂມງ 1-12.
21. ບອກການປະຕິບັດຕົນໃນລະດູແລ້ງ, ລະດູຝົນ, ໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງ ໄດ້ຖືກຕ້ອງ.
22. ບອກຊ່ວງເວລາກາງຄືນ ແລະ ການປະຕິບັດຕົນໄດ້ຖືກຕ້ອງ.
23. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
24. ປະຕິບັດຕົນໃນເວລາກາງຄືນ, ໃນລະດູແລ້ງ ແລະ ລະດູຝົນ.
24. ບອກຊື່ວັນໃນ 1 ອາທິດ ແລະ ກິດຈະກຳໃນມື້ວານ, ມື້ນີ້, ມື້ອື່ນໄດ້ຖືກຕ້ອງ.
26. ຮ້ອງເພງປະກອບທ່າທາງດ້ວຍຄວາມມ່ວນຊື່ນ.
27. ບອກຊື່ວັນໃນໜຶ່ງອາທິດ, ວັນເຂົ້າຮຽນ, ວັນພັກຮຽນ, ເດືອນໃນ 1 ປີ, ເດືອນທີ່ເຂົ້າຮຽນ, ເດືອນພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນໄດ້ຖືກຕ້ອງ.
28. ນັບຊື່ເດືອນໃນໜຶ່ງປີໄດ້ຖືກຕ້ອງ.
29. ບອກລະດູການ, ລັກສະນະອາກາດໃນລະດູແລ້ງ ແລະ ລະດູຝົນໃນປະເທດລາວໄດ້ຖືກຕ້ອງ.
30. ບອກຄຸນປະໂຫຍດ, ຜົນສະທ້ອນຂອງລະດູຝົນ ແລະ ລະດູແລ້ງໄດ້ຖືກຕ້ອງ.

# ກິດຈະກຳສິລະປະສ້າງສັນ

1. ບອກຊື່ຮູບພາບ ແລະ ບອກຂັ້ນຕອນໃນການຕັດ-ຕິດເຈ້ຍເປັນຮູບພາບດອກໄມ້, ສານລາຍອັດສະຫຼັບສີຂາວ, ແດງ ແລະ ຟ້າ. ການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ, ການແຕ້ມຮູບພາບໄກ່ຕາມຮອຍຈ້ຳ, ການຕິດແກ່ນ ພືດໃສ່ຮູບພາບຕົ້ນໄມ້, ການແຕ້ມຮູບພາບແມ່ນ້ຳຕາມແບບ, ການໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ, ການປັ້ນດິນເປັນຮູບຄົກ ແລະ ສາກ; ການແຕ້ມຮູບພາບຖ້ວຍ ແລະ ຈອກຕາມຮອຍຈ້ຳ; ການແຕ້ມ ແລະ ທາສີຮູບພາບດວງອາທິດ, ການຈີກຮູບພາບດວງອາທິດຕາມຮອຍຈ້ຳ, ການເປົ່າສີໃຫ້ເປັນຮູບພາບຕ່າງໆ ຕາມຈິນຕະນາການ, ການຮ້ອຍກະດຸມສະຫຼັບສີ, ການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮ້ອຍຈ້ຳ, ການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ, ການຂີດຂຽນຕົວເລກ 14 ຕາມຮອຍຈ້ຳ, ການຈີກ-ຕິດຮູບພາບຕົ້ນໄມ້ ແລະ ການຕັດ-ຕິດຮູບພາບເສື້ອກັນໜາວໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໃຫ້ຄ່ອງແຄ້ວ.
3. ມີຄວາມອົດທົນໃນການຕັດ-ຕິດຮູບພາບດອກໄມ້, ການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ, ການແຕ້ມຮູບພາບ ໄກ່ຕາມຮອຍຈ້ຳ, ການແຕ້ມຮູບພາບແມ່ນ້ຳຕາມແບບ, ການແຕ້ມຮູບພາບຖ້ວຍ, ຈອກຕາມຮອຍຈ້ຳ, ການຂີດຂຽນສະຫຼະ ູx ຕາມຄຳສັບ ທີ່ມີຢູ່ໃນປະໂຫຍກສັ້ນຕາມຮອຍຈ້ຳ, ການແຕ້ມຮູບພາບດວງອາທິດ, ຈີກຮູບພາບດວງອາທິດ, ການຂຽນຕົວເລກ 14 ຕາມຮອຍຈ້ຳ, ການຂີດຂຽນສະຫຼະ ູx ຕາມຄຳສັບໃຫ້ສຳເລັດ ແລະ ຈົບງາມ.
4. ແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ, ແຕ້ມຮູບໄກ່ນ້ອຍຕາມຮອຍຈ້ຳໃຫ້ສະອາດຈົບງາມ ແລະ ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້ໃຫ້ສະອາດຈົບງາມ.
5. ສານລາຍອັດສະຫຼັບສີຂາວ, ແດງ ແລະ ຟ້າໄດ້ຖືກຕ້ອງ.
6. ແບ່ງປັນດິນປັ້ນ ແລະ ສໍສີໃຫ້ໝູ່ເພື່ອນ.
7. ແຕ້ມຮູບພາບແມ່ນ້ຳຕາມແບບ, ປັ້ນດິນເປັນຮູບຄົກ ແລະ ສາກໃຫ້ມີຄວາມຄ້າຍຄື.
8. ໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ, ແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳໃຫ້ສະອາດຈົບງາມ.
9. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການໂຮຍດິນຊາຍ.
10. ສັງເກດສະຫຼະ ູx ຕາມຄຳສັບ ຕົວເລກ ແລະ ຈື່ຈຳຕົວເລກຢູ່ໃນໂມງ.
11. ຂີດຂຽນສະຫຼະ ູx ຕາມຄຳສັບ. ຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳ ແລະ ຮ້ອຍກະດຸມສະຫຼັບສີໄດ້ຖືກຕ້ອງ.
12. ແຕ້ມ, ທາສີຮູບພາບດວງອາທິດ, ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກ ເປົ່າສີເປັນຮູບພາບຕາມຈິນຕະນາການ, ໃຫ້ຈົບງາມ ແລະ ຢູ່ໃນຂອບ.
13. ເຝິກປະສາດສຳພັນລະຫວ່າງມື ກັບຕາໃຫ້ຄ່ອງແຄ້ວ.
14. ມີຄວາມລະມັດລະວັງໃນເວລາເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ, ໃນເວລາໃຊ້ມີດຕັດ ແລະ ກາວ.
15. ພັດທະນາແນວຄິດສ້າງສັນໃນການຮ້ອຍກະດຸມສະຫຼັບສີ.
16. ຂີດຂຽນຕົວເລກ 14 ຕາມຮອຍຈ້ຳໃຫ້ສະອາດຈົບງາມ.
17. ຈີກ-ຕິດຮູບພາບຕົ້ນໄມ້, ຂີດຂຽນສະຫຼະ ູx ຕາມຄຳສັບ, ຕັດ-ຕິດຮູບພາບ ເສື້ອກັນໜາວ ໃຫ້ສະອາດຈົບງາມ.
18. ເຝິກສາມະທິໃນການຈີກ-ຕິດຮູບພາບຕົ້ນໄມ້.
19. ມີຄວາມອົດທົນສານລາຍອັດສະຫຼັບສີ.

# ກິດຈະກຳການຫຼິ້ນກາງແຈ້ງ

1. ບອກຂັ້ນຕອນ ແລະ ກະຕິກາຫຼິ້ນແບບຫຼິ້ນແມວຈັບໜູ, ຫຼິ້ນແບບຫຼິ້ນມັດຕາທວຍສຽງຮ້ອງ ຂອງສັດ: ສຽງໄກ່, ສຽງແບ້ ແລະ ສຽງຄວາຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ຫຼິ້ນແບບຫຼິ້ນລີງຍາດຕົ້ນໄມ້, ຫຼິ້ນດິນຊາຍ: ຫຼິ້ນຜອງຊາຍໃສ່ກະປອງ, ຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ, ຫຼິ້ນແບບຫຼິ້ນເຊື່ອງຕຸກກະຕາ, ຫຼິ້ນແບບຫຼິ້ນປ່ຽນສິ່ງດອກໄມ້, ຫຼິ້ນດິນຊາຍ: ຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ, ຫຼິ້ນແບບຫຼິ້ນ ແຂ່ງຂັນເຕັ້ນຂ້າມຫ້ວຍ, ຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ, ຫຼິ້ນແບບຫຼິ້ນຫຼັງຕິດກັນ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ, ຫຼິ້ນແບບຫຼິ້ນ ເສືອໄລ່ໝູ, ຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າ, ຫຼິ້ນຊາຍ: ຮ່ອນດິນຊາຍ ແລະ ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.
2. ຫຼິ້ນແບບຫຼິ້ນແມວຈັບໜູ, ຫຼິ້ນແບບຫຼິ້ນມັດຕາທວຍສຽງຮ້ອງຂອງສັດ: ສຽງໄກ່, ສຽງແບ້ ແລະ ສຽງຄວາຍ; ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ຫຼິ້ນແບບຫຼິ້ນລີງຍາດຕົ້ນໄມ້, ຫຼິ້ນດິນຊາຍ: ຫຼິ້ນຜອງຊາຍໃສ່ກະປອງ, ຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ, ຫຼິ້ນເຊື່ອງຕຸກກະຕາ, ຫຼິ້ນແບບຫຼິ້ນປ່ຽນ ສິ່ງດອກໄມ, ຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ, ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ, ຫຼິ້ນແບບຫຼິ້ນຫຼັງຕິດກັນ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ, ຫຼິ້ນແບບຫຼິ້ນເສືອໄລ່ໝູ, ຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າ, ແບບຫຼິ້ນຮ່ອນດິນຊາຍ, ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
5. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
6. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
7. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
8. ເຝິກຄວາມທ່ຽງຂອງມື.
9. ມີມາລະຍາດທີ່ດີໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

1. ບອກຊື່ເກມ, ພະຍັນຊະນະ, ສະຫຼະ, ຄຳສັບ, ຕົວເລກຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ), ຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ, ຈັບຄູ່ທີ່ກັບຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ, ຈັບຄູ່ທີ່ຄືກັບຮູບພາບໂມງທີ່ມີເວລາຄືກັນ, ຈັບຄືທີ່ຄືກັບຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ, ຈັບຄູ່ທີ່ຄືກັບຮູບພາບ ທີ່ຄືກັບຮູບພາບເຄື່ອງປ້ອງກັນອາກາດໜາວ, ຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງລະດູຝົນ, ຈັບຄູ່ທີ່ຄືກັບຕົພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ ຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ບໍ່ມີຊີ ວິດໄດ້ຖືກຕ້ອງ.
3. ບວກຮູບພາບກ້ອນສີ່ແຈຈຳນວນ 1-5 ໄດ້ຖືກຕ້ອງ
4. ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ຮູບພາບການຈະເລີນເຕີບໃຫຍ່ຂອງພືດໄດ້ຖືກຕ້ອງ
5. ຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວໄດ້ຖືກຕ້ອງ.
6. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
7. ຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ກັບຄົນ
8. ຈັບຄູ່ຊື່ວັນກັບສີປະຈຳວັນໃນ 1 ອາທິດໄດ້ຖືກຕ້ອງ
9. ຈັບຄູ່ຊື່ເດືອນກັບຕົວເລກ 1-12 ໄດ້ຖືກຕ້ອງ
10. ຈັບຄູ່ພະຍັນຊະນະ ແລະ ສະຫຼະໄດ້ຖືກຕ້ອງ
11. ອົດທົນໃນເວລາຫຼິ້ນເກມ
12. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
12. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
14. ແບ່ງປັນເກມໃຫ້ໝູ່ເພື່ອນ.
15. ເກັບມ້ຽນເກມ

## ກິດຈະກຳການຫຼິ້ນຕາມມຸມ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ, ພິມຮູບຕົ້ນໄມ້ໃສ່ອ່າງດິນຊາຍ, ແຕ້ມຮູບຕາມຈິນຕະນາການໃສ່ອ່າງຊາຍ, ຕໍ່ບູ້ອກເປັນຮູບຕ່າງໆຕາມຈິນຕະນາການ, ພິມຝາມືໃສ່ອ່າງດິນຊາຍ, ຂຽນສະຫຼະໃສ່ອ່າງດິນຊາຍຢ່າງມ່ວນຊື່ນ.
3. ຕັດເຈ້ຍເປັນຮູບວົງມົນ ແລະ ຮູບສີ່ແຈຕິດເປັນຮູບດອກໄມ້, ຮ້ອຍສິ່ງຕ່າງໆຕາມຈິນຕະນາການ, ແຕ້ມຮູບພາບຕາມແບບ, ສານລາຍອັດສະຫຼັບສີ, ຕິດແກ່ນພືດໃສ່ຮູບພາບ ຕົ້ນໄມ້, ແຕ້ມຮູບແມ່ນ້ຳຕາມແບບ, ປັ້ນດິນເປັນຮູບຄົກ, ສາກ, ໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ, ແຕ້ມຮູບ ພາບຖ້ວຍ, ຈອກຕາມແບບ, ແຕ້ມ, ທາສີຮູບພາບດວງອາທິດ, ຂຽນສະຫຼະ: x າ, x ິ, x ີ, x ະ ຕາມແບບ, ຂຽນຕົວເລກໃສ່ຮູບພາບໂມງ, ຈີກຮູບພາບດວງອາທິດຕາມຮອຍຈຳ, ເປົ່າສີເປັນຮູບຕ່າງໆ ຕາມຈິນຕະນາການ, ຮ້ອຍກະດູມສະຫຼັບກັນຕາມສີ, ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ, ເປົ່າສີເປັນຮູບພາບຕ່າງໆຕາມ ຈິນຕະນາການ, ຂຽນຕົວເລອາຣັບແຕ່ 0-9, ຕັດຕິດຮູບເສື້ອກັນໜາວໄດ້ຖືກຕ້ອງ.
4. ອ່ານຄຳສັບໃນຮູບພາບ, ອ່ານອອກສຽງຄຳສັບທີ່ມີສະຫຼະ x ຸ, ອ່ານຄຳສັບທີ່ມີສະຫຼະ x ູ ແລະ ຕົວສະກົດ, ອ່ານຕາມຮູບພາບໃນປຶ້ມນິທານ, ອ່ານເປັນປະໂຫຍກທີມີສະຫຼະ x າ, x ິ, x ີ, x ຸ, x ະ, ອ່ານຕາມຮູບພາບ,

ອ່ານຊື່ ເດືອນໃນໜຶ່ງປີ, ອ່ານອອກສຽງຄໍາສັບທີ່ມີສະຫຼະ ໂ-ະ, ໂ- ຕາມຕາຕະລາງນັບຮູບພາບບັນທັດ, ສໍດໍາ, ຢາງລຶບ ແລະ ບອຈໍານວນ 12 13 16 ອັນ.

5. ຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ ແລະ ຊາວສວນ, ຫຼິ້ນເປັນນາຍຄູ, ຫຼິ້ນເປັນຕົວລະຄອນໃນບົດເລື່ອງນິທານ, ຫຼິ້ນເປັນແມ່ເປັນລູກ, ເປັນອ້າຍ ແລະ ເອື້ອຍ, ເປັນຊາວນາ, ເປັນທ່ານໝໍນ້ອຍຢ່າງມ່ວນຊື່ນ.
6. ລຽນລໍາດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ; ລຽນລໍາດັບຮູບພາບປະກົດການກ່ອນຝົນຈະຕົກ; ຈັບຄູ່ຮູບພາບອາຫານທີ່ມີຄວາມຈໍາເປັນຕໍ່ກັບຄົນ, ສັດ, ພືດ; ຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ; ຈັບຄູ່ທີ່ຄືກັນຮູບພາບຂອງສິ່ງທີ່ບໍ່ມີຊີວິດບວກຮູບພາບກ້ອນສີ່ແຈຈໍານວນແຕ່ 1-5; ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ; ຈັບຄູ່ຮູບພາບກັບຕົວພະຍັນຊະນະ; ຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ; ຈັບຄູ່ຊື່ເດືອນກັບຕົວເລກ 1-12; ຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ; ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນໄດ້ຖືກຕ້ອງ.
7. ທົດລອງເປົ່າລົມໃສ່ປູມເປົ້າແລ້ວປ່ອຍລົມອອກ, ທົດລອງການຈົມຟູຂອງວັດຖຸ, ທົດລອງກ້າແກ່ນໝາກຖົ່ວ, ແລະ ແກ່ນຜັກບົ້ງ, ທົດລອງຖອກນໍ້າໃສ່ດິນໜຽວ, ດິນຊາຍ, ສັງເກດການຈະເລີນເຕີບໃຫ່ຍຂອງຕົ້ນຖົ້ວ ແລະ ຜັກບົ້ງ, ທົດລອງຊັກຜ້າເຊັດໜ້າ ທົດລອງເອົາມືຈຸ່ມລົງນໍ້າເຢັນ, ນໍ້າອຸ່ນປູກຕົ້ນໝາກຖົ່ວ ແລະ ຜັກບົ້ງໄດ້ຖືກຕ້ອງ.
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກໍານົດໄວ້.
9. ເວົ້າຄໍາທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
12. ມີມາລະຍາດທີ່ດີກັບໝູ່ເພື່ອນໃນເວລາຫຼິ້ນ.
13. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

# ຈຸດປະສົງສຳລັບອາທິດທີ 1

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມນາຍຄູອອກແບບຍ່າງປະກອບການນັບໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ, ບົດຄຳຄ່ອງໄດ້ຖືກຕ້ອງ.
4. ສະແດງທ່າງເປັນຜູ້ນຳ ແລະ ຜູ້ປະຕິບັດຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
5. ປອດໄພໃນເວລາສະແດງທ່າທາງ.
6. ອົດທົນໃນເວລາສະແດງທ່າທາງ.
7. ເວົ້າຄຳສຸພາບກັບໝູ່ເພື່ອນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
2. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.
3. ນັບຈຳນວນຮູບພາບ1-10ໄດ້ຖືກຕ້ອງ.
4. ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.
5. ບອກສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
6. ບອກການເຕີບໃຫຍ່ຂອງຄົນ, ສັດ, ຕົ້ນຖົ່ວ ແລະ ຜັກບົ້ງໄດ້ຖືກຕ້ອງ.
7. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
8. ເລົ່າຄຳຄ່ອງ, ຮ້ອງເພງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ເພງ, ນິທານໄດ້ຊັດເຈນ.
9. ອ່ານຕົວເລກຕາມລຳດັບແຕ່ 0-9ໄດ້ຖືກຕ້ອງ.
10. ບອກການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
11. ບອກຮູບສີ່ແຈ, ວົງມົນໄດ້ຖືກຕ້ອງ.

# ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ຮູບພາບ ແລະ ບອກຂັ້ນຕອນໃນການຕັດ-ຕິດເຈ້ຍເປັນຮູບພາບດອກໄມ້, ສານລາຍອັດສະຫຼັບສີຂາວ, ແດງ ແລະ ຟ້າ. ການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈໍ້າ, ການແຕ້ມຮູບພາບໄກ່ຕາມຮອຍຈໍ້າ, ການຕິດ ແກ່ນພືດໃສ່ຮູບພາບຕົ້ນໄມ້ໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໃຫ້ຄ່ອງແຄ້ວ.
3. ມີຄວາມອົດທົນໃນການຕັດ-ຕິດຮູບພາບດອກໄມ້, ການສານລາຍອັດສະຫຼັບສີ, ການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈໍ້າ, ການແຕ້ມ ຮູບພາບໄກ່ຕາມຮອຍຈໍ້າໃຫ້ສຳເລັດ.
4. ແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈໍ້າ, ແຕ້ມຮູບໄກ່ນ້ອຍຕາມຮອຍຈໍ້າໃຫ້ສະອາດຈົບງາມ ແລະ ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້ໃຫ້ສະອາດຈົບງາມ.
5. ສານລາຍອັດສະຫຼັບສີຂາວ, ແດງ ແລະ ຟ້າໄດ້ຖືກຕ້ອງ

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍ ສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາຫຼິ້ນແບບຫຼິ້ນແມວຈັບໜູ, ຫຼິ້ນແບບຫຼິ້ນມັດຕາທວຍສຽງຮ້ອງຂອງສັດ: ສຽງໄກ່, ສຽງແບ້ ແລະ ສຽງຄວາຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ຫຼິ້ນແບບຫຼິ້ນລີງຍາດຕົ້ນໄມ້ ແລະ ຫຼິ້ນດິນຊາຍ: ຫຼິ້ນຜອງຊາຍໃສ່ກະປອງ.
2. ຫຼິ້ນແບບຫຼິ້ນແມວຈັບໜູ, ຫຼິ້ນແບບຫຼິ້ນມັດຕາທວຍສຽງຮ້ອງຂອງສັດ: ສຽງໄກ່, ສຽງແບ້ ແລະ ສຽງຄວາຍ, ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ຫຼິ້ນແບບຫຼິ້ນລີງຍາດຕົ້ນໄມ້, ຫຼິ້ນດິນຊາຍ: ຫຼິ້ນຜອງຊາຍໃສ່ກະປອງໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ອົດທົນໃນເວລາຫຼິ້ນແບບຫຼິ້ນ
5. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
6. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ), ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ກັບຄົນ, ສັດ, ພືດ; ຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
3. ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ, ລຽນລຳດັບຮູບພາບການຈະເລີນເຕີຍໃຫຍ່ຂອງພືດໄດ້ຖືກຕ້ອງ.
4. ອົດທົນໃນເວລາຫຼິ້ນເກມ
5. ແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດິນຕີ, ພິມຮູບຕົ້ນໄມ້ໃສ່ອ່າງດິນຊາຍ.
3. ຕັດເຈ້ຍເປັນຮູບວົງມົນ ແລະ ຮູບສີ່ແຈຕິດເປັນຮູບດອກໄມ້, ຮ້ອຍສິ່ງຕ່າງໆຕາມຈິນຕະນາການ, ຕັດເຈ້ຍເປັນຮູບວົງມົນ ແລະ ຮູບສີ່ແຈຕິດເປັນຮູບດອກໄມ້, ສານລັຍອັດສະຫຼັບສີ, ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້ໄດ້ຖືກຕ້ອງ.
4. ອ່ານຄຳສັບໃນຮູບພາບ, ອ່ານອອກສຽງຄຳສັບທີ່ມີສະ ູ, ອ່ານຄຳສັບທີ່ມີສະຫຼະ ູ ແລະ ຕົວສະກົດ, ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ ແລະ ຊາວສວນຢ່າງມ່ວນຊື່ນ .
6. ຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ກັບຄົນ, ສັດ, ພືດ; ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດໄດ້ຖືກຕ້ອງ
7. ທົດລອງເປົ່າລົມໃສ່ປູມເປົ້າແລ້ວປ່ອຍລົມອອກ, ທົດລອງການຈົມຟູຂອງວັດຖຸ, ທົດລອງກ້າແກ່ນໝາກຖົ່ວ, ແລະ ແກ່ນຜັກບົ້ງໄດ້ຖືກຕ້ອງ.
8. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
9. ເກັບມ້ຽນເຄື່ອງໃຫ້ຖືກບ່ອນທີ່ກຳນົດໄວ້.
10. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.
11. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ.

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

- ການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ:
- ເວົ້າຄຳວ່າເດັກນ້ອຍໃຫ້ສະແດງທ່າທາງຄານ.
- ເວົ້າຄຳວ່າຜູ້ເຖົ້າໃຫ້ສະແດງທ່າທາງຍ່າງຜູ້ເຖົ້າ.
- ເວົ້າຄຳວ່ານົກໃຫ້ສະແດງທ່າທາງນົກບິນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍ ແລະ ທ່າວາແຂນອອກສູງພຽງກັບບ່າໄຫຼ່, ເອົາມືທັງສອງເບື້ອງໄຂ່ວກັນຢູ່ທາງໜ້າ.
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກ ໄລຍະ 3 ແມັດ ເບື້ອງຊ້າຍ-ຂວາ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູຂາ, ເອົາມືທັງສອງຄົ່ມພື້ນທາງຫຼັງ, ພ້ອມທັງສັ່ນຂາຊ້າໆ
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ສິ່ງທີ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ສິ່ງທີ່ມີຊີວິດໄດ້ຖືກຕ້ອງ ແລະ ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.
2. ຮ້ອງເພງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດເພງໄດ້ຊັດເຈນ.
3. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.
4. ນັບຈຳນວນຮູບພາບ 1-10 ໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ສິ່ງທີ່ມີຊີວິດປະກອບມີຄົນ, ສັດ ແລະ ພືດ.
- ຄົນ: ເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ເຖົ້າ (ແມ່ຍິງ, ຜູ້ຊາຍ).
- ສັດ: ສັດປີກ, ສັດນ້ຳ ແລະ ສັດບົກ.
- ພືດ: ຫຍ້າ, ຕົ້ນດອກໄມ້, ຕົ້ນໄມ້.

2. ການຮ້ອງເພງ ສິ່ງທີ່ມີຊີວິດ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດເພງ:
- ຄຳສັບ: ຄົນ, ສັດ, ພືດ, ຊີວິດ, ສັດບົກ, ສັດນ້ຳ.
- ປະໂຫຍກ: ຄົນສັດພືດເປັນສິ່ງທີ່ມີຊີວິດ, ຊີວິດເປັນຂອງມີຄ່າ, ທຸກຊີວິດສຸກຂີຈະມີຄວາມຍືນຍົງ.

3. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ຄົນຍ່າງ (ຄ), ຕົ້ນດອກໄມ້ (ຕ), ແບ້ກິນຫຍ້າ (ບ), ກົບ(ກ), ນົກບິນ (ນ).
4. ນັບຈຳນວນຮູບພາບແຕ່1-10.

### III. ສື່ການຮຽນ-ການສອນ

1. ຫຍ້າ, ຕົ້ນດອກໄມ້, ຮູບພາບ: ງົວ, ໄກ່, ປາ 1-10; ບົດເພງ ສິ່ງທີ່ມີຊີວິດ ເບິ່ງໃນປຶ້ມຄູ່ມືຄູ.
2. ບັດຄຳສັບ: ຄົນຍ່າງ , ຕົ້ນດອກໄມ້, ແບ້ກິນຫຍ້າ, ກົບ, ນົກບິນ;

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດເພງ.
2. ໃຫ້ເດັກນ້ອຍສັງເກດ ຕົ້ນຫຍ້າ, ຕົ້ນດອກໄມ້, ຮູບພາບ: ຄົນ, ງົວ, ໄກ່, ປາ, ສົນທະນາກ່ຽວກັບສິ່ງທີ່ມີຊີວິດ.
3. ນາຍຄູພາເດັກນ້ອຍອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ.
4. ໃຫ້ເດັກນ້ອຍນັບຈຳນວນຮູບພາບສັດແຕ່ 1-10.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ສິ່ງທີ່ທີ່ມີຊີວິດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ສິ່ງທີ່ມີຊີວິດ.
2. ຄວາມຊັດເຈນໃນການຮ້ອງເພງ, ເວົ້າເປັນຄຳສັບ ແລະ ເປັນ ປະໂຫຍກຕາມເນື້ອໃນບົດເພງ.
3. ຄວາມຊັດເຈນໃນການອ່ານອອກສຽງ ພະຍັນຊະນະຕົ້ນຕາມຄຳສັບ.
4. ຄວາມຖືກຕ້ອງນັບຈຳນວນຮູບພາບ 1-10.
5. ການອະນຸລັກຮັກສາສິ່ງແວດລ້ອມ

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ-ຕິດເຈ້ຍເປັນຮູບພາບດອກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຕັດ-ຕິດເຈ້ຍເປັນຮູບພາບດອກໄມ້ໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໃຫ້ຄ່ອງແຄ້ວ.
3. ມີຄວາມອົດທົນໃນການຕັດ-ຕິດຮູບພາບດອກໄມ້ໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການຕັດເຈ້ຍເປັນຮູບວົງມົນ, ຮູບສີ່ແຈແລ້ວຕິດເປັນຮູບພາບດອກໄມ້

### III. ສື່ການຮຽນ-ການສອນ

1. ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
2. ມີດຕັດປາຍມົນ, ເຈ້ຍສີ, ເຈ້ຍຂາວ, ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
3. ເຈ້ຍແບບຮູບດອກໄມ້ທີ່ຕິດແລ້ວ.
4. ບົດເພງ ສິ່ງທີ່ມີຊີວິດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສິ່ງທີ່ມີຊີວິດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດເຈ້ຍແບບຮູບດອກໄມ້ທີ່ຕິດແລ້ວ, ສົນທະນາກ່ຽວກັບບັນດາຮູບທີ່ເອົາມາຕິດເປັນຮູບດອກໄມ້ ແລະ ຂັ້ນຕອນການຕັດ-ຕິດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ-ຕິດເຈ້ຍເປັນຮູບພາບດອກໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການຕັດ-ຕິດຮູບພາບດອກໄມ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ  ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕັດ-ຕິດເຈ້ຍເປັນຮູບພາບດອກໄມ້.
2. ຄວາມຄ່ອງແຄ້ວໃນການຕັດ-ຕິດເຈ້ຍເປັນຮູບພາບດອກໄມ້.
3. ຄວາມອົດທົນໃນການຕັດ-ຕິດຮູບພາບດອກໄມ້ໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແມວຈັບໜູ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແມວຈັບໜູໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແມວຈັບໜູໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແມວຈັບໜູ.

### III. ສື່ການຮຽນ-ການສອນ

1. ກະແຊັກ ແລະ ກອງ.
2. ບົດເພງ ສິ່ງທີ່ມີຊີວິດ.
3. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສິ່ງທີ່ມີຊີວິດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແມວຈັບໜູ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແມວຈັບໜູ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແມວຈັບໜູ.
5. ສຶກສາອົບຮົມເດັກນ້ອຍ: ລະມັດລະວັງໃນເວລາຫຼິ້ນ, ບໍ່ຍູ້ກັນລົ້ມ. ລົບຫຼີກໃຫ້ດີເພື່ອບໍ່ໃຫ້ແມວຈັບກິນໄດ້.
6. ໃຫ້ເດັກນ້ອຍເອົາມືຄ້ຳແອວປິດໄປຂ້າງຊາຍ-ຂ້າງຂວາຊ້າໆ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແມວຈັບໜູ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ)

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ) ໄດ້ຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ): ເດັກນ້ອຍ, ຊາວໜຸ່ມ, ຜູ້ເຖົ້າ, ແມງກະເບື້ອ, ປາ, ນົກ, ຄວາຍ, ຕົ້ນຜັກ, ຕົ້ນດອກໄມ້.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບຄົນ, ສັດ, ພືດ: ເດັກນ້ອຍ, ຊາວໜຸ່ມ, ຜູ້ເຖົ້າ, ແມງກະເບື້ອ, ປາ, ນົກ, ຄວາຍ, ງົວ, ປາໄກ່, ຕົ້ນຜັກ, ຕົ້ນດອກໄມ້, ຕົ້ນໄມ້. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບການສະຫຼອງວັນບຸນເດັກນ້ອຍ: ເດັກນ້ອຍຮ້ອງເພງ, ຟ້ອນລຳວົງ, ເຕະບານ, ຮັບຂອງຂວັນ, ກວດສຸຂະພາບ, ໄປທ່ຽວສວນສັດ.
3. ບົດເພງ ສິ່ງທີ່ມີຊີວິດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສິ່ງທີ່ມີຊີວິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເກັບມ້ຽນແຜ່ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບຮູບເລຂາຄະນິດທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັດຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ).
3. ການເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ ແລະ ພິມຮູບຢ່າງມ່ວນຊື່ນ.
3. ຕັດ, ຕິດເຈ້ຍເປັນຮູບດອກໄມ້ ແລະ ຮ້ອຍສິ່ງຕ່າງໆຕາມຈິນຕະນາການ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ສັ່ນກະແຊັກ, ຕີລະນາດ ແລະ ເປົ່າແຄນ ແລະ ການພິມຮູບຕົ້ນໄມ້ໃສ່ອ່າງດິນຊາຍ.
3. ການຕັດເຈ້ຍຮູບວົງມົນ ແລະ ຮູບສີ່ແຈແລ້ວຕິດເປັນຮູບດອກໄມ້ ແລະ ຮ້ອຍສິ່ງຕ່າງໆຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີຂອງຈິງ ຫຼື ຈຳລອງ: ກອງ, ກະແຊັກ, ລະນາດ, ແຄນ, ແບບພິມຮູບຕົ້ນໄມ້. ແລະ ອ່າງດິນຊາຍ.
2. ມຸມສິລະປະສ້າງສັນ: ມີດຕັດປາຍມົນ, ກາວ, ເຈ້ຍສີແບບຮູບດອກໄມ້, ໝາກຕຸ້ມ, ໄມ້ປ່ອງ, ທໍ່ຢາງ ແລະ ອື່ນໆ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດເພງ ສິ່ງທີ່ມີຊີວິດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ສິ່ງທີ່ມີຊີວິດປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອເດັກນ້ອຍ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ພິມຮູບໃສ່ອ່າງດິນ
3. ຄວາມຖືກຕ້ອງໃນການຕັດ, ຕິດເຈ້ຍເປັນຮູບດອກໄມ້ ແລະ ຮ້ອຍສິ່ງຕ່າງໆຕາມຈິນຕະນາການ
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບການນັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບຢ່າງປະກອບການນັບໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບຢ່າງປະກອບການນັບ 1-15.

### III. ສື່ການຮຽນ-ການສອນ

1. ຮູບພາບສັດ ແລະ ຕົ້ນໄມ້ 1-10.
2. ທ່າຫັດກາຍະບໍລິຫານມື ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແອວ: ທ່າໝູນຄໍ່ມື, ທ່າເບັດແອວໄປເບື້ອງຊ້າຍ-ຂວາ.
2. ໃຫ້ເດັກນ້ອຍເຕັ້ນເຂົ້າວົງມົນ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບຢ່າງປະກອບການນັບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄໍ່ພື້ນທາງຫຼັງເງີຍໜ້າຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບຢ່າງປະກອບການນັບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບຢ່າງປະກອບການນັບ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
2. ຟັງນິທານ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານໄດ້ຊັດເຈນ.
3. ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### II. ເນື້ອໃນຕົ້ນຕໍ

1. ສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ ຄົນ, ສັດ ແລະ ພືດ.
- ສິ່ງທີ່ຈຳເປັນຕໍ່ຄົນ: ອາຫານ, ນ້ຳ, ອາກາດ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດ ແລະ ທີ່ຢູ່ອາໄສ.
- ສິ່ງທີ່ຈຳເປັນຕໍ່ສັດ: ອາຫານ, ນ້ຳ, ອາກາດ.
- ສິ່ງທີ່ຈຳເປັນຕໍ່ພືດ: ດິນ, ອາຫານ, ນ້ຳ, ອາກາດ.

2. ການຟັງນິທານເລື່ອງ ສິ່ງທີ່ຂ້ອຍຕ້ອງການ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານ.
- ຄຳສັບ: ພືດ, ດິນ, ນ້ຳ, ອາກາດ, ອາຫານ, ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໄສ, ຢາປົວພະຍາດ.
- ປະໂຫຍກ: ຄົນຕ້ອງການອາຫານ, ຄົນຕ້ອງການຢາປົວພະຍາດ, ຄົນຕ້ອງການເຄື່ອງນຸ່ງຫົ່ມ, ຄົນຕ້ອງການ ພືດ, ດິນ, ນ້ຳ, ອາກາດ, ອາຫານຂອງພືດ ແມ່ນດິນນ້ຳອາກາດ, ສິ່ງທີ່ຈຳເປັນຕໍ່ສິ່ງທີ່ມີຊີວິດກໍຄືອາຫານ, ນ້ຳ, ອາກາດ.

### III. ສື່ການຮຽນ-ການສອນ

1. ອາຫານ, ເຄື່ອງນຸ່ງຫົ່ມ, ຢາ, ນ້ຳ, ດິນ.
2. ບົດນິທານ ສິ່ງທີ່ຂ້ອຍຕ້ອງການ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ເດັກນ້ອຍຕ້ອງການ.
2. ນາຍຄູເລົ່ານິທານ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດອາຫານ, ເຄື່ອງນຸ່ງຫົ່ມ, ຢາ, ນ້ຳ, ດິນ, ສົນທະນາກ່ຽວກັບສິ່ງທີ່ຈຳເປັນຕໍ່ຄົນ, ສັດ ແລະ ພືດ.
4. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບສິ່ງທີ່ຈຳເປັນຕໍ່ສິ່ງທີ່ມີຊີວິດ.
5. ສຶກສາອົບຮົມເດັກນ້ອຍ: ໃຫ້ມີຄວາມສາມັກຄີຮັກແພງກັນ ແລະ ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ.
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານ.
3. ການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ຮູບພາບ ແລະ ຂັ້ນຕອນການແຕ້ມຮູບພາບເສື້ອແຂນສັນຕາມຮອຍຈ້ຳໄດ້ຖືກຕ້ອງ .
2. ແຕ້ມຮູ້ບເສື້ອແຂນສັ້ນຕາມຮອຍຈ້ຳສະອາດຈົບງາມ.
3. ມີຄວາມອົດທົນໃນການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບເສື້ອແຂນສັນຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີໄມ້, ເຈ້ຍຮູບພາບເສື້ອຕາມຮອຍຈ້ຳ.
2. ເຈ້ຍແບບຮູບພາບເສື້ອແຂນສັ້ນທີ່ແຕ້ມແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍແກວ່ງແຂນ ແລະ ເບັດນິ້ວມືເທື່ອລະນິ້ວ.
2. ໃຫ້ເດັກນ້ອຍສັງເກດຮູບພາບເສື້ອແຂນສັ້ນທີ່ແຕ້ມແລ້ວ, ສົນທະນາກ່ຽວກັບຊື່ຮູບພາບ ແລະ ຂັ້ນຕອນການແຕ້ມຮູບພາບເສື້ອ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການເກັບຮັກສາເຄື່ອງໃຊ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ຮູບພາບ ແລະ ຂັ້ນຕອນການແຕ້ມຮູບພາບເສື້ອແຂນສັນຕາມຮອຍຈ້ຳ.
2. ຄວາມສະອາດຈົບງາມໃນການແຕ້ມຮູ້ບເສື້ອແຂນສັ້ນຕາມຮອຍຈ້ຳ.
3. ຄວາມອົດທົນໃນການແຕ້ມຮູບພາບເສື້ອແຂນສັ້ນຕາມຮອຍຈ້ຳໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນມັດຕາທວາຍສຽງຮ້ອງຂອງສັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນມັດຕາທວາຍສຽງຮ້ອງຂອງສັດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນມັດຕາທວາຍສຽງຮ້ອງຂອງສັດໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນມັດຕາທວາຍ ສຽງຮ້ອງຂອງສັດ: ສຽງໄກ່, ສຽງແບ້ ແລະ ສຽງຄວາຍ

### III. ສື່ການຮຽນ-ການສອນ

1. ຜ້າແພ 1 ຜືນ, ໜວກໂຕໄກ່, ຄວາຍ ແລະ ແບ້.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນຂໍ້ມື ແລະ ໝູນເອິ້ງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນມັດຕາທວາຍສຽງຮ້ອງຂອງສັດ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນມັດຕາທວາຍສຽງຮ້ອງຂອງສັດ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4 . ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນມັດຕາທວາຍສຽງຮ້ອງຂອງສັດ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຈື່ຈຳ ແລະ ຟັງສຽງ, ຫຼັງຈາກຫຼິ້ນ ແລ້ວລ້າງມື, ຕີນ ໃຫ້ສະອາດ ແລະ ຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເຮັດທ່າທາງໄກ່ພືປີກຂຶ້ນ-ລົງຊ້າໆ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນມັດຕາທວາຍສຽງຮ້ອງຂອງສັດ
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ, ສັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດໄດ້ຖືກຕ້ອງ.
3. ອົດທົນໃນເວລາໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ: ຄົນກັບເຂົ້າ, ປາ, ໄຂ່, ຜັກ; ງົວ, ຄວາຍ, ແບ້; ກະຕ່າຍກັບຫຍ້າ, ດອກໄມ້, ຕົ້ນພ້າວຕົ້ນມ່ວງກັບນໍ້າ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບສິ່ງທີ່ມີຊີວິດ (ຄົນ, ພືດ, ສັດ) ເດັກນ້ອຍ, ຊາວໜຸ່ມ, ຜູ້ເຖົ້າ; ແມງກະເບື້ອ, ນົກ, ຄວາຍ, ງົວ, ປາ, ໄກ່, ຕົ້ນດອກໄມ້, ຕົ້ນໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ ຄົນ, ສັດ ແລະ ພືດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ທົດລອງປູມເປົ້າ, ກ້ອນຫີນ ແລະ ໃບໄມ້ແຫ້ງໄດ້ຖືກຕ້ອງ.
3. ແຕ້ມຮູບພາບຕາມແບບ ແລະ ຕັດເຈ້ຍໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ ແລະ ມຸມສິລະປະສ້າງສັນ.
2. ການສັງເກດ ແລະ ທົດລອງເປົ່າລົມເຂົ້າປູມເປົ້າແລ້ວປ່ອຍລົມອອກ, ການສັງເກດ ແລະ ທົດລອງການຈົມ-ຟູ ຂອງວັດຖຸ: ກ້ອນຫີນ ແລະ ໃບໄມ້ແຫ້ງ.
3. ການແຕ້ມຮູບພາບເສື້ອແຂນສັ້ນຕາມແບບ, ຕັດເຈ້ຍຮູບວົງມົນ ແລະ ຮູບສີ່ແຈຕິດເປັນຮູບດອກໄມ້.

### III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ປູມເປົ້າ, ຊາມນ້ຳ, ກ້ອນຫີນ ແລະ ໃບໄມ້ແຫ້ງ.
2 ມຸມສິລະປະສ້າງສັນ: ສໍດຳ ຫຼື ສໍສີໄມ້, ມີດຕັດປາຍມົນ, ກາວ, ເຈ້ຍແບບຮູບພາບເສື້ອແຂນສັ້ນ, ເຈ້ຍຮູບວົງມົນ, ຮູບສີ່ແຈ, ເຈ້ຍຂາວ ແລະ ເຈ້ຍແບບຮູບດອກໄມ້.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ຈຳເປັນຕໍ່ກັບສິ່ງທີ່ມີຊີວິດ ຄົນ, ສັດ ແລະ ພືດ.
2. ນາຍຄູແນະນຳວິທີຫຼິ້ນ ແລະ ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ວິທີ ຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການທົດລອງປູມເປົ້າ, ກ້ອນຫີນ ແລະ ໃບໄມ້ແຫ້ງໄດ້.
3. ຄວາມຖືກຕ້ອງໃນການແຕ້ມຮູບພາບຕາມແບບ ແລະ ຕັດ, ຕິດເຈ້ຍເປັນຮູບດອກໄມ້.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ສິ່ງທີ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ສິ່ງທີ່ມີຊີວິດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ສິ່ງທີ່ມີຊີວິດ.
3. ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າກົ້ມຫົວລົງ, ເງີຍຫົວຂຶ້ນ ແລະ ທ່າໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນຊິກແຊັກໄລຍະ 10 ແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍ່າງຊ້າໆເຮັດທ່າທາງເກັບຂີ້ເຫຍື້ອ
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການຈະເລີນເຕີບໃຫຍ່ຂອງຄົນ ແລະ ສັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການເຕີບໃຫຍ່ຂອງຄົນ ແລະ ສັດໄດ້ຖືກຕ້ອງ.
2. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
3. ເວົ້າເປັນຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ການເຕີບໃຫຍ່ຂອງຄົນ ແລະ ສັດ.
- ການເຕີບໃຫຍ່ຂອງຄົນ: ເດັກເກີດໃໝ່, ເໝບ, ຄານ, ນັ່ງ, ຢືນ, ຍ່າງ ແລະ ແລ່ນ (ເດັກນ້ອຍ, ຜູ້ໃຫຍ່).
- ການເຕີບໃຫຍ່ຂອງສັດ: ໄກ່ (ໄຂ່, ໄກ່ນ້ອຍ,ໄກ່ໃຫຍ່).
- ການເຕີບໃຫຍ່ຂອງສັດ: ກົບ (ວົງຈອນຊີວິດຂອງກົບ: ໄຂ່, ຮວກ, ກົບນ້ອຍ, ກົບໃຫຍ່).
2. ການຟັງນິທານເລື່ອງ ຂ້ອຍແມ່ນໃຜ.
3. ການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ:
- ຄຳສັບ: ເດັກເກີດໃໝ່, ເໝບ, ຄານ, ນັ່ງ, ຢືນ, ຍ່າງ ແລະ ແລ່ນ.
- ປະໂຫຍກ: ໄກ່ໄຂ່, ໄກ່ຟັກໄຂ່, ໄຂ່ກົບເປັນມົນໃສ, ຮວກມີຫາງ ແລະ ມີ 2 ຂາຫຼັງ, ຮວກເຕີບໃຫຍ່ ເປັນກົບນ້ອຍ, ກົບມີ 4 ຂາ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ການຈະເລີນເຕີບໃຫຍ່ຂອງຄົນ, ວົງຈອນຊີວິດຂອງໄກ່ ແລະ ກົບ.
2. ບົດນິທານເລື່ອງ ຂ້ອຍແມ່ນໃຜ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ຈຳເປັນຕໍ່ສິ່ງທີ່ມີຊີວິດ.
2. ນາຍຄູເລົ່ານິທານ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ວົງຈອນຊີວິດຂອງໄກ່ ແລະ ກົບ, ສົນທະນາກ່ຽວກັບການຈະເລີນເຕີບໃຫຍ່ຂອງຄົນ ແລະ ສັດ.
4. ນາຍຄູພາເດັກນ້ອຍເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຈະເລີນເຕີບໃຫຍ່ຂອງຄົນ ແລະ ສັດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຟັງນິທານ ແລະ ຄວາມເມດຕາກະລຸນາຕໍ່ສັດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການ ເຕີບໃຫຍ່ຂອງຄົນ ແລະ ສັດ.
2. ຄວາມມ່ວນຊື່ນໃນການຟັງນິທານ.
3. ຄວາມຊັດເຈນໃນການເວົ້າເປັນຄຳ ສັບ ແລະ ປະໂຫຍກຕາມຮູບພາບ.
4. ມາລະຍາດໃນການຟັງນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບໄກ່ຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບໄກ່ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ແຕ້ມຮູບໄກ່ນ້ອຍຕາມຮອຍຈ້ຳໃຫ້ສະອາດຈົບງາມ.
3. ມີຄວາມອົດທົນໃນການແຕ້ມຮູບພາບ ໄກ່ຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບໄກ່ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີໄມ້, ເຈ້ຍຮູບພາບໄກ່ຕາມຮອຍຈ້ຳ.
2. ເຈ້ຍແບບຮູບພາບໄກ່ທີ່ແຕ້ມແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງກຳມືເຂົ້າແລ້ວແບມືອອກ.
2. ໃຫ້ເດັກນ້ອຍສັງເກດຮູບພາບໄກ່, ສົນທະນາກ່ຽວກັບຮູບຮ່າງ ແລະ ຂັ້ນຕອນການແຕ້ມຮູບພາບໄກ່.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບໄກ່ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການແຕ້ມຮູບພາບໄກ່ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບໄກ່ຕາມຮອຍຈ້ຳ.
2. ຄວາມສະອາດຈົບງາມຂອງການແຕ້ມຮູບໄກ່ນ້ອຍຕາມຮອຍຈ້ຳ.
3. ຄວາມອົດທົນໃນການແຕ້ມຮູບພາບໄກ່ຕາມຮອຍຈ້ຳໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນແຂ່ງຂັນກິນໝາກກ້ຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ.

### III. ສື່ການຮຽນ-ການສອນ

1. ໝາກຫວິດ ແລະ ໝາກກ້ຽງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເອົາມືຄ້ຳແອວບິດໄປຂ້າງຊ້າຍ ແລະ ຂ້າງຂວາ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ, ນາຍຄູຕິດຕາມ ແລະ ຊ່ວຍ ແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ອົດທົນລໍຖ້າຫຼິ້ນຕາມລຳດັບ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ເດັກນ້ອຍຢືນເອົາມືກອດເອິກຫາຍໃຈເຂົ້າ-ອອກຊ້າໆ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນກິນໝາກກ້ຽງ.
3. ຄວາມເບີກບານມ່ວນຊື່ນໃນເລວາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ: ເດັກນ້ອຍເກີດໃໝ່, ຄານ, ນັ່ງ, ຢືນ, ຍ່າງ ແລະ ຜູ້ໃຫຍ່; ໄຂ່, ໄກ່ນ້ອຍອອກຈາກໄຂ່, ໄກ່ນ້ອຍ, ໄກ່ໃຫຍ່ (ໂຕແມ່, ໂຕຜູ້).

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ: ຄົນກັບເຂົ້າ, ຊີ້ນ, ປາ, ໄຂ່ຜັກ, ງົວ, ຄວາຍ, ແບ້, ກະຕ່າຍກັບຫຍ້າ, ຕົ້ນດອກໄມ້, ຕົ້ນພ້າວ, ຕົ້ນມ່ວງກັບນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການເຕີບໃຫຍ່ຂອງຄົນ ແລະ ສັດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້ : ມຸມອ່ານ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ
2. ອ່ານຄຳສັບຕາມຮູບພາບ, ອ່ານອອກສຽງຄຳສັບທີ່ມີສະຫຼະ ູ ໄດ້ຊັດເຈນ.
3. ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນ ຕໍ່ຄົນ, ສັດໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ
2. ການສັງເກດ ແລະ ອ່ານຄຳສັບຕາມຮູບພາບ: ໄຂ່ໄກ່, ໄກ່ນ້ອຍ, ໄກ່ໃຫຍ່, ຮວກ, ກົບນ້ອຍ ແລະ ກົບໃຫຍ່ ແລະ ການອ່ານອອກສຽງຄຳສັບທີ່ມີສະຫຼະ ູ: ຄູ ຍູ ສູ ຊູ ງູ ຮູ ຫູ.
4. ການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ. ການຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ, ພືດ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ, ຮູບພາບ: ໄຂ່ໄກ່, ໄກ່ນ້ອຍ, ໄກ່ໃຫຍ່, ຮວກ, ກົບນ້ອຍ ແລະ ກົບໃຫຍ່, ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 2 (ໜ້າທີ 12) ຫຼື ເຈ້ຍຄຳສັບທີ່ມີສະຫຼະ ູ: ຄູ ຍູ ສູ ຊູ ງູ ຮູ ຫູ.
2. ມຸມເກມການສຶກສາ: ແຜ່ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ: ເດັກນ້ອຍເກີດໃໝ່, ຄານ, ນັ່ງ, ຢືນ, ຍ່າງ ແລະ ຜູ້ໃຫຍ່; ຮູບພາບໄຂ່, ໄກ່ນ້ອຍອອກຈາກໄຂ່, ໄກ່ນ້ອຍ, ໄກ່ໃຫຍ່ ແລະ ແຜ່ນເກມຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ກັບຄົນ, ພືດ, ສັດ: ຄົນກັບໄຂ່, ເຂົ້າ, ຊີ້ນ, ປາ, ຜັກ; ງົວ, ຄວາຍ, ແບ້, ກະຕ່າຍກັບຫຍ້າ; ຕົ້ນດອກໄມ້, ຕົ້ນພ້າວ, ຕົ້ນມ່ວງກັບນ້ຳ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການເຕີບໃຫຍ່ຂອງຄົນ ແລະ ສັດ.
2. ນາຍຄູແນະນຳວິທີຫຼິ້ນ ແລະ ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນການອ່ານຄຳສັບຕາມຮູບພາບ, ອ່ານອອກສຽງຄຳສັບທີ່ມີສະຫຼະ ູ.
3. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ຈັບຄູ່ຮູບພາບອາຫານທີ່ມີຄວາມຈຳເປັນຕໍ່ຄົນ, ສັດ.
4. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມທີ່ນາຍຄູກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າງເປັນຜູ້ນຳ-ຜູ້ປະຕິບັດຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
2. ເວົ້າຄຳສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າງເປັນຜູ້ນຳ-ຜູ້ປະຕິບັດຕາມທີ່ນາຍຄູກຳນົດຂຸດດິນ, ປູກຜັກ, ໃສ່ຝຸ່ນ ແລະ ຫົດນ້ຳຜັກ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າຍົກແຂນຂຶ້ນເທິງຫົວ ແລະ ທ່າໂຢ່ງໂຢ້ຂາລົງ.
2. ໃຫ້ເດັກນ້ອຍເຕັ້ນຂາດຽວໄປທາງໜ້າ ແລະ ຖອຍຫຼັງ.
3. ນາຍຄູແນະນຳ ແລະ ສາທິດສະແດງທ່າງເປັນຜູ້ນຳ-ຜູ້ປະຕິບັດຕາມທີ່ນາຍຄູກຳນົດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນສະແດງທ່າງເປັນຜູ້ນຳ-ຜູ້ປະຕິບັດຕາມທີ່ນາຍຄູກຳນົດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າງເປັນຜູ້ນຳ-ຜູ້ປະຕິບັດຕາມທີ່ນາຍຄູກຳນົດ.
2. ການເວົ້າຄຳສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ຕົ້ນຖົ່ວ ແລະ ຜັກບົ້ງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ້ງໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
3. ອ່ານຕົວເລກຕາມລຳດັບແຕ່ 0-9 ໄດ້ຖືກຕ້ອງ.
4. ປະຕິບັດຕົວຈິງໃນການກ້າແກ່ນຜັກບົ້ງ ແລະ ໝາກຖົ່ວ.

### II. ເນື້ອໃນຕົ້ນຕໍ

1. ການເຕີບໃຫຍ່ຂອງພືດ: ຕົ້ນຖົ່ວ, ຜັກບົ້ງ

- ການເຕີບໃຫຍ່ຂອງຕົ້ນຖົ່ວ: ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່, ດອກ ແລະ ໝາກ.
- ການເຕີບໃຫຍ່ຂອງຜັກບົ້ງ: ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່, ດອກ ແລະ ໝາກ.

2. ການເລົ່າຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.

- ຄຳສັບ: ຕົ້ນໝາກຖົ່ວ, ດອກໝາກຖົ່ວ, ແກ່ນໝາກຖົ່ວ, ຕົ້ນນ້ອຍ, ຕົ້ນໃຫຍ່, ຂຽວ, ງາມ, ຜັກບົ້ງ, ສີຂາວ, ສີຂຽວ, ສີດຳ, ຝັກ, ຝຸ່ນ.
- ປະໂຫຍກ: ຕົ້ນໝາກຖົ່ວມີດອກສີຂາວ, ທາງໃນໝາກຖົ່ວມີແກ່ນ, ຕັກຝຸ່ນໃສ່ໃຫ້ຕົ້ນຖົ່ວຂຽວງາມ, ຜັກບົ້ງປົ່ງລຳນ້ອຍໃບອ່ອນຂຽວງາມ.

3. ການອ່ານຕົວເລກຕາມລຳດັບແຕ່ 0-9.

### III. ສື່ການຮຽນ-ການສອນ

1. ຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບການຈະເລີນເຕີບໃຫຍ່ຂອງໝາກຖົ່ວ ແລະ ຜັກບົ້ງ; ແກ່ນໝາກຖົ່ວ, ແກ່ນຜັກບົ້ງ, ດິນ, ກະປ໋ອງ, ນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
2. ໃຫ້ເດັກນ້ອຍສັງເກດຮູບພາບການຈະເລີນເຕບໃຫຍ່ຂອງໝາກຖົ່ວ ແລະ ຜັກບົ້ງ, ສົນທະນາກ່ຽວກັບການເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ້ງ.
4. ໃຫ້ເດັກນ້ອຍອ່ານຕົວເລກຕາມລຳດັບແຕ່ 0-9.
5. ນາຍຄູພາເດັກນ້ອຍປະຕິບັດຕົວຈິງກ່ຽວກັບການກ້າແກ່ນໝາກຖົ່ວ ແລະ ຜັກບົ້ງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ການບົວລະບັດຮັກສາພືດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການ ເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ້ງ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນເປັນຄຳສັບ ແລະ ເປັນປະ ໂຫຍກ ຕາມເນື້ອໃນບົດຄຳຄ່ອງ.
3. ຄວາມຖືກຕ້ອງໃນການອ່ານຕົວເລກ ຕາມລຳດັບແຕ່ 0 - 9.
4. ການປະຕິບັດຕົວຈິງໃນການກ້າແກ່ນໝາກຖົ່ວ ແລະ ຜັກບົ້ງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຕິດແກ່ນພືດໃສ່ຮູບພາບຕົ້ນໄມ້ໄດ້ຖືກຕ້ອງ.
2. ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້ໃຫ້ສະອາດຈົບງາມ.
3. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໃຫ້ຄ່ອງແຄ້ວ.

### II. ເນື້ອໃນຕົ້ນຕໍ

ການຕິດແກ່ນພືດໃສ່ຮູບພາບຕົ້ນໄມ້.

### III. ສື່ການຮຽນ-ການສອນ

1. ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
2. ແກ່ນພືດ, ເຈ້ຍຮູບພາບຕົ້ນໄມ້ ແລະ ເຈ້ຍແບບຕິດແກ່ນພືດທີ່ຕິດແລ້ວ.
3. ບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ.

### IV. ກິດຈະກຳການຮຽນ - ການສອນ

1. ໃຫ້ເດັກນ້ອຍເລົ່າບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕົ້ນໄມ, ສົນທະນາກ່ຽວກັບສ່ວນປະກອບຂອງຕົ້ນໄມ້ ແລະ ຂັ້ນຕອນການຕິດແກ່ນພືດເປັນຮູບພາບຕົ້ນໄມ້.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕິດແກ່ນພືດໃສ່ຮູບພາບຕົ້ນໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການຕິດແກ່ນພືດໃສ່ຮູບພາບຕົ້ນໄມ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການຮັກສາຄວາມສະອາດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕິດແກ່ນພືດໃສ່ຮູບພາບຕົ້ນໄມ.
2. ຄວາມສະອາດຈົບງາມໃນການຕິດແກ່ນພືດໃສ່ຮູບພາບຕົ້ນໄມ້.
3. ຄວາມຄ່ອງແຄ້ວໃນການຕິດແກ່ນພືດໃສ່ຮູບພາບຕົ້ນໄມ້.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້.

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນລີງຍາດຕົ້ນໄມ້ໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້ໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ
2. ຕົ້ນໄມ້ນ້ອຍ, ເຊືອກ, ໄມ້ນ້ອຍສຳລັບຂີດວົງມົນ ແລະ ກະແຊັກ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ ປະກອບທ່າທາງ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້.
5. ສຶກສາອົບຮົມເດັກນ້ອຍ: ວ່ອງໄວໃນການແລ່ນ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນແລ້ວອະນາໄມ ຕີນ ແລະ ມື ໃຫ້ສະອາດ.
6. ໃຫ້ເດັກນ້ອຍນັ່ງລົງຮ້ອງເພງພ້ອມທັງຕົບມື, ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນລີງຍາດຕົ້ນໄມ້.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ.ຮູບພາບຕົ້ນຖົ່ວ: ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່; ຮູບພາບຕົ້ນກ້ວຍ: ໜໍ່ກ້ວຍປົ່ງໃບຍອດອ່ອນ, ປົ່ງ 5 ໃບ, ປົ່ງ 7 ໃບ, ເກີດປີ, ແຕກເປັນເຄືອໝາກກ້ວຍ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດແຕ່ນ້ອຍ-ໃຫຍ່ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ,ນັ່ງຄານ ສັດ: ເດັກນ້ອຍເກີດໃໝ່ ນອນ, ນັ່ງ, ຄານ, ຍ່າງ; ໄຂ່, ໄກ່ນ້ອຍອອກຈາກໄຂ່, ໄກ່ນ້ອຍ, ໄກ່ໃຫຍ່ (ໂຕແມ່, ໂຕຜູ້).
3. ບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ, ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ທົດລອງກ້າແກ່ນໝາກຖົ່ວ ແລະ ກ້າແກ່ນຜັກບົ້ງໄດ້ຖືກຕ້ອງ.
3. ຫຼິ້ນເປັນແມ່ລ້ຽງ ແລະ ຊາວ ສວນຢ່າງມ່ວນຊື່ນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ ແລະ ມຸມບົດບາດສົມມຸດ.
2. ການສັງເກດ ແລະ ທົດລອງກ້າແກ່ນໝາກຖົ່ວ ແລະ ແກ່ນຜັກບົ້ງ.
3. ການຫຼິ້ນສົມມຸດເປັນແມ່ລ້ຽງປຸງແຕ່ງອາຫານ ແລະ ເປັນຊາວສວນຂຸດດິນປູກຜັກ.

### III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ດິນສຳລັບປູກ, ໂຖ ຫຼື ກະໂປະ, ກະປ໋ອງ, ແກ່ນໝາກຖົ່ວ. ແກ່ນຜັກບົ້ງ.
2. ມຸມບົດບາດສົມມຸດ: ຊຸດເຄື່ອງຫຼິ້ນຂອງເຮືອນນ້ອຍຂອງຈິງ ຫຼື ຈຳລອງ. ເສື້ອກັນເປື້ອນ, ຜັກຈິງ ຫຼື ຈຳລອງ. ເຄື່ອງມືຊາວສວນຈຳລອງ, ຊາມນ້ຳລ້າງມື, ສະບູ, ຜ້າເຊັດມື.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນ ແລະ ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມບົດບາດສົມມຸດ
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການທົດລອງກ້າແກ່ນໝາກຖົ່ວ ແລະ ກ້າແກ່ນຜັກບົ້ງ.
3. ຄວາມມ່ວນຊື່ນໃນການຫຼິ້ນເປັນແມ່ລ້ຽງ ແລະ ຊາວສວນ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ຕົ້ນຖົ່ວ ແລະ ຜັກບົ້ງ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າແຂນຂວາໄຂ່ວແຂນຊ້າຍ, ແຂນຊ້າຍໄຂ່ວແຂນຂວາ ແລະ ທ່າໝູບຄໍ່ຕີນ.
2. ໃຫ້ເດັກນ້ອຍໂດດຢຽບຢາງສູງ 30 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄໍ່ມພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງໄດ້ຊັດເຈນ.
3. ບອກຮູບສີ່ແຈ, ວົງມົນໄດ້ຖືກຕ້ອງ.
4. ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### II. ເນື້ອໃນຕົ້ນຕໍ

1. ການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ (ຄົນ, ສັດ ແລະ ພືດ).
- ຄົນ: ຊີ້ນສັດ ແລະ ພືດເປັນອາຫານຂອງເຮົາ, ນອກຈາກນັ້ນສັດຍັງຊ່ວຍແຮງງານຂອງຄົນ (ຕົວຢ່າງ: ກິນຊີ້ນສັດ, ກິນຜັກ, ກິນເຂົ້າ, ງົວຊ່ວຍແກ່ກວຽນ, ຊ້າງຊ່ວຍລາກແກ່ໄມ້).
- ສັດ: ພືດ ແລະ ສັດເປັນອາຫານຂອງສັດ (ຕົວຢ່າງ: ງົວ, ຄວາຍ, ແບ້ກິນຫຍ້າ ແລະ ໃບໄມ້; ໄກ່, ເປັດກິນເຂົ້າເປືອກແລະ ຣຳ; ນົກກິນໝາກໄມ້ ແລະ ແມງໄມ້).
- ພືດ: ພືດອາໄສອາຫານ ແລະ ນ້ຳຈາກດິນ (ຕົວຢ່າງ: ຊາກໃບໄມ້, ຂີ້ສັດ ແລະ ຊາກສັດທີ່ເນົ່າເປື່ອຍ).
2. ການເລົ່າຄຳຄ່ອງ ອາຫານຂອງໃຜ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ:
- ຄຳສັບ: ເຂົ້າ, ຜັກ, ຊີ້ນ, ອາຫານ, ຜັກສະຫຼັດ, ພະລັງງານ, ນົກ, ດິນ.
- ປະໂຫຍກ: ນົກກິນພືດ ແລະ ສັດ, ຜັກສະຫຼັດດູດອາຫານຈາກດິນ, ອາຫານໃຫ້ພະລັງງານ.
3. ຮູບເລຂາຄະນິດ: ຮູບສີ່ແຈ, ວົງມົນ.

### III. ສື່ການຮຽນ-ການສອນ

1. ເຂົ້າ, ຜັກ, ຊີ້ນ, ຫຍ້າ; ຮູບພາບ: ຄົນກິນອາຫານ, ງົວແກ່ກວຽນ, ງົວກິນຫຍ້າ, ເປັດກິນຣຳ, ຕົ້ນໄມ້.
2. ບົດຄຳຄ່ອງ ອາຫານຂອງໃຜ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບອາຫານທີ່ເດັກນ້ອຍກິນ.
2. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດ ເຂົ້າ, ຜັກ, ຊີ້ນ; ຮູບພາບ: ຄົນກິນອາຫານ, ງົວແກ່ກວຽນ, ງົວກິນຫຍ້າ, ເປັດກິນຣຳ, ສົນທະນາກ່ຽວກັບການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ (ຄົນ, ສັດ ແລະ ພືດ).
4. ໃຫ້ເດັກນ້ອຍສັງເກດຮູບພາບສັດ ແລະ ຕົ້ນໄມ້ແລ້ວບອກອະໄວຍະວະຂອງສັດ ແລະ ສ່ວນປະກອບຂອງຕົ້ນໄມ້ທີ່ເປັນຮູບວົງມົນ ແລະ ສີ່ແຈ.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການເພິ່ງພາອາໄສເຊິ່ງກັນ ແລະ ກັນຂອງສິ່ງທີ່ມີຊີວິດ (ຄົນ).
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການເພິ່ງ ພາອາໄສເຊິ່ງກັນ ແລະ ກັນຂອງສິ່ງ ທີ່ມີຊີວິດ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກ ຕາມເນື້ອໃນຄຳຄ່ອງ.
3. ຄວາມຖືກຕ້ອງໃນການບອກຊື່ຮູບເລຂາຄະນິດ.
4. ການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ສານລາຍອັດສະຫຼັບສີ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສານລາຍອັດສະຫຼັບສີໄດ້ຖືກຕ້ອງ.
2. ສານລາຍອັດສະຫຼັບສີຂາວ, ແດງ ແລະ ຟ້າ.
3. ອົດທົນໃນເວລາສານລາຍອັດສະຫຼັບສີ.

## II. ເນື້ອໃນຕົ້ນຕໍ

ການສານລາຍອັດສະຫຼັບສີ: ຂາວ, ແດງ ແລະ ຟ້າ.

## III. ສື່ການຮຽນ-ການສອນ

1. ຕັດເຈ້ຍສີຂາວ, ສີແດງ, ສີຟ້າເປັນເສັ້ນ.
2. ມີດຕັດ, ເຈ້ຍສີແດງ, ສີຟ້າ, ສີຂາວ
3. ແບບສານ.
4. ບົດຄຳຄ່ອງ ອາຫານຂອງໃຜ.

## IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍເລົ່າບົດຄຳຄ່ອງ ອາຫານຂອງໃຜປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບແບບທີ່ສານແລ້ວ, ສົນທະນາກ່ຽວກັບແບບສານ ແລະ ຂັ້ນຕອນການສານລາຍອັດສະຫຼັບສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການສານລາຍອັດສະຫຼັບສີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນວິທີການສານລາຍອັດສະຫຼັບສີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ຄວາມສາມັກຄີໃນການເກັບມ້ຽນອຸປະກອນ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກໃນການບອກຂັ້ນຕອນການສານລາຍອັດສະຫຼັບສີ:.
2. ການສານລາຍອັດສະຫຼັບສີ:.
3. ຄວາມອົດທົນໃນການສານລາຍອັດສະຫຼັບສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຜອງຊາຍໃສ່ກະປ໋ອງ.

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນການຜອງຊາຍໃສ່ກະປ໋ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນ: ແບບຫຼິ້ນຜອງຊາຍໃສ່ກະປອງ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ໂອ, ຊາມ, ແພເຊັດມື, ກະປອງ, ຊວ້ານນ້ອຍ ແລະ ອ່າງດິນຊາຍ.
2. ກະແຊັກ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍແລ່ນຊ້າໆຕາມສຽງເຄາະ.
2. ນາຍຄູສະເໜີ ແລະ ສາທິດການຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງ. ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນດິນຊາຍ: ຫຼິ້ນຜອງຊາຍໃສ່ກະປ໋ອງ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຫວ່ານດິນໃສ່ກັນ, ຫຼິ້ນແລ້ວອະນາໄມມື, ຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ດັກນ້ອຍເຮັດທ່າທາງລົມພັດໃບໄມ້ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຜອງຊາຍໃສ່ກະປ໋ອງ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັບຂອງສິ່ງທີ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັບຂອງສິ່ງທີ່ມີຊີວິດໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັບຂອງສິ່ງທີ່ມີຊີວິດ: ຄົນດື່ມນ້ຳ, ຄົນກິນເຂົ້າ, ນົກກິນແມງໄມ້, ແບ້ກິນຫຍ້າ, ງົວແກ່ກວຽນ, ເດັກຫົດຕົ້ນໄມ້.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັບຂອງສິ່ງທີ່ມີຊີວິດ: ຄົນດື່ມນ້ຳ, ຄົນກິນເຂົ້າ, ນົກກິນແມງໄມ້, ແບ້ກິນຫຍ້າ, ງົວແກ່ກວຽນ, ເດັກຫົດຕົ້ນໄມ້ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ: ຕົ້ນຖົ່ວ, ແກ່ນ, ຕົ້ນນ້ອຍ, ຕົ້ນໃຫຍ່; ຕົ້ນກ້ວຍ, ໜໍ່ກ້ວຍ, ປົ່ງໃບຍອດອ່ອນ, ປົ່ງ 5ໃບ, ປົ່ງ 7 ໃບ, ເກີດປີ, ແຕກເປັນເຄືອໝາກກ້ວຍ.
3. ບົດຄຳຄ່ອງ ອາຫານຂອງໃຜ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ  ອາຫານຂອງໃຜ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັບຂອງສິ່ງທີ່ມີຊີວິດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບການເພິ່ງພາອາໄສກັບຂອງສິ່ງທີ່ມີຊີວິດ.
3. ຄວາມອົດທົນໃນການຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຄຳສັບທີ່ມີສະຫຼະ ູ ແລະ ຕົວສະກົດ ແລະ ຮູບພາບໃນປຶ້ມນິທານໄດ້ຖືກຕ້ອງ.
3. ສານລາຍອັດສະຫຼັບສີ ແລະ ຕິດແກ່ນພືດໄດ້ຖືກຕ້ອງ.
4. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ
2. ການສັງເກດ ແລະ ອ່ານຄຳສັບທີ່ມີສະຫຼະ ູ ແລະ ຕົວສະກົດ: ຈູງມື, ມ້າໝູບ, ຮູດຊິບ, ດູດນ້ຳ, ລູກຊິ້ນປາ ແລະ ອ່ານຕາມຮູບພາບໃນປຶ້ມນິທານເລື່ອງສິ່ງທີ່ອ້ອຍຕ້ອງການ.
3. ສານລາຍອັດສະຫຼັບສີ: ຂາວ, ແດງ ແລະ ຟ້າ ແລະ ຕິດແກ່ນພືດໃສ່ຮູບພາບຕົ້ນໄມ້.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 2(ໜ້າ 14). ປຶ້ມນິທານເລື່ອງ ສິ່ງທີ່ອ້ອຍຕ້ອງການ.
2. ມຸມສິລະປະສ້າງສັນ: ເຈ້ຍສີຂາວ, ແດງ ແລະ ຟ້າທີ່ຕັດເປັນເສັ້ນແລ້ວ, ແບບສານລາຍອັດ. ແກ່ນພືດ, ກາວ ແລະ ເຈ້ຍຮູບພາບຕົ້ນໄມ້.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ອາຫານຂອງໃຜ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ອາຫານຂອງໃຜ ປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການອ່ານຄຳສັບທີ່ມີສະຫຼະ ູ ແລະ ອ່ານຕາມຕົວສະກົດ ແລະ ຮູບພາບໃນປຶ້ມນິທານ.
3. ຄວາມຖືກຕ້ອງໃນການ ສານລາຍອັດສະຫຼັບສີ ແລະ ຕິດແກ່ນພືດ.
4. ມາລະຍາດໃນການອ່ານ ແລະ ຫຼິ້ນ.

# ຈຸດປະສົງສຳລັບອາທິດທີ 2

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
3. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
4. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
5. ສະແດງທ່າທາງຕາມການສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
6. ປອດໄພໃນເວລາສະແດງທ່າທາງ.
7. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
8. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສິ່ງທີ່ບໍ່ມີຊີວິດໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ຮ້ອງເພງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ລຳ, ຮູບພາບໄດ້ຊັດເຈນ.
3. ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ ແຫຼ່ງນ້ຳ.
4. ບອກປະເພດ ແລະ ລັກສະນະຂອງດິນໄດ້ຖືກຕ້ອງ.
5. ອ່ານຄຳສັບທີ່ມີ ແລະ ບໍ່ມີ ວັນນະຍຸດ ່, ້ ໄດ້ຊັດເຈນ.
6. ບອກຄຸນປະໂຫຍດ ແລະ ການປົກປັກຮັກສາດິນໄດ້ຖືກຕ້ອງ.
7. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
8. ບອກລັກສະນະ ແລະ ຄຸນປະໂຫຍດຂອງຫີນໄດ້ຖືກຕ້ອງ.
9. ສັງເກດ ແລະ ອ່ານຕົວເລກໃນເງິນໄດ້ຖືກຕ້ອງ.
10. ບອກການປ່ຽນແປງສະພາບ ແລະ ບອກປະໂຫຍດຂອງນ້ຳໄດ້ຖືກຕ້ອງ.
11. ປະຕິບັດຕົວຈິງໃນການທົດລອງການປ່ຽນແປງສະພາບຂອງນ້ຳ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບແມ່ນ້ຳຕາມແບບ, ການໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ, ການປັ້ນດິນເປັນຮູບຄົກ ແລະ ສາກ, ການແຕ້ມຮູບພາບຖ້ວຍ ແລະ ຈອກຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ແຕ້ມຮູບພາບແມ່ນ້ຳຕາມແບບ, ປັ້ນດິນເປັນຮູບຄົກ ແລະ ສາກໃຫ້ມີຄວາມຄ້າຍຄື.
3. ມີຄວາມອົດທົນໃນການແຕ້ມຮູບພາບແມ່ນ້ຳຕາມແບບ, ການແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳ, ການຂີດຂຽນສະຫຼະ ູ ຕາມຄຳສັບໃຫ້ສຳເລັດ.

4. ໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ, ແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳໃຫ້ສະອາດຈົບງາມ.
5. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການໂຮຍດິນຊາຍ.
6. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.
7. ບອກທິດທາງ ແລະ ການຂຽນສະຫຼະ ×ູ ຕາມຄຳສັບ.
8. ຂີດຂຽນສະຫຼະ ×ູ ຕາມຄຳສັບໃຫ້ຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ, ຫຼິ້ນແບບຫຼິ້ນເຊືອງຕຸກກະຕາ, ຫຼິ້ນແບບຫຼິ້ນປ່ຽນສິ່ງດອກໄມ້, ຫຼິ້ນດິນຊາຍ: ຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.
2. ຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ, ຫຼິ້ນແບບຫຼິ້ນເຊືອງຕຸກກະຕາ, ຫຼິ້ນແບບຫຼິ້ນປ່ຽນສິ່ງດອກໄມ້, ຫຼິ້ນດິນຊາຍ: ຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດໄດ້ຖືກຕ້ອງ.
3. ບວກຮູບພາບກ້ອນສີ່ແຈຈຳນວນ 1-5 ໄດ້ຖືກຕ້ອງ.
4. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ ໄດ້ຖືກຕ້ອງ.
5. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
6. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນໄດ້ຖືກຕ້ອງ.
6. ອົດທົນໃນເວລາຫຼິ້ນເກມ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມຮູບຕາມຈິນຕະນາການໃສ່ອ່າງຊາຍ, ຕໍ່ບ້ອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ.
3. ແຕ້ມຮູບພາບຕາມແບບ, ປັ້ນດິນເປັນຮູບໝາກກ້ຽງ, ປັ້ນດິນເປັນຮູບຄົກ, ສາກ, ໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ, ແຕ້ມຮູບພາບຖ້ວຍ, ຈອກຕາມແບບໄດ້ຖືກຕ້ອງ.
4. ອ່ານເປັນປະໂຫຍກທີ່ມີສະຫຼະ ×າ ×ີ ×ິ ×ູ ×ະ ແລະ ອ່ານຕາມຮູບພາບໄດ້ຊັດເຈນ.
5. ຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ, ຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ, ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ, ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ ຂອງພືດ; ຈັບຄູ່ທີ່ຄືກັນຕົວພະຍັນຊະນະແຕ່ ກ ເຖິງ ຮ ແລະ ຈັບຄູ່ຮູບພາບຕົວພະຍັນຊະນະແຕ່ກ ເຖິງ ຮ ໄດ້ຖືກຕ້ອງ.
6. ທົດລອງຖອກນ້ຳໃສ່ດິນໜຽວ, ດິນຊາຍ, ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ້ງ, ທົດລອງເອົາມືຈຸ່ມລົງນ້ຳເຢັນ, ນ້ຳອຸ່ນ ປູກຕົ້ນໝາກຖົ່ວ, ແລະ ຜັກບົ້ງໄດ້ຖືກຕ້ອງ.
7. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
8. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
9. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
10. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
11. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ: ແຂ້ນອນອ້າປາກ, ງູລອຍນ້ຳ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແອວ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າຢືນຂາດຽວຍົກຂາຂຶ້ນທາງໜ້າເອົາມືທັງສອງເບື້ອງຈັບໄວ້ ແລະ ທ່າຫວ່ຽງແອວໄປທາງຊ້າຍ-ຂວາ.
2. ໃຫ້ເດັກນ້ອຍເຕັ້ນຂາດຽວໄປພ້າ ແລະ ຫຼັງຕາມສຽງເຄາະ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ສິ່ງທີ່ບໍ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສິ່ງທີ່ບໍ່ມີຊີວິດໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
3. ອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### II. ເນື້ອໃນຕົ້ນຕໍ

1. ສິ່ງທີ່ບໍ່ມີຊີວິດ (ດິນ, ຫີນ ແລະ ນ້ຳ).

- ດິນ: ດິນຮ່ວນ, ດິນໜຽວ ແລະ ດິນຊາຍ.
- ຫີນ: ຫີນຢູ່ໃນແມ່ນ້ຳ, ຫີນແຮ່.
- ນ້ຳ: ນ້ຳປະປາ, ນ້ຳສ້າງ ແລະ ແມ່ນ້ຳ.

2. ການເລົ່າຄຳຄ່ອງ ດິນ, ຫີນ, ນ້ຳ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ:

- ຄຳສັບ: ດິນ ຫີນ ຊາຍ, ໜາມ, ໝໍ່, ໝໍ້, ນ້ຳປະປາ, ເຫຼື້ອມ.
- ປະໂຫຍກ: ຢູ່ບ້ານຂ້ອຍມີດິນ ຫີນ ຊາຍ, ດິນໜຽວໃຊ້ປັ້ນໝໍ້, ປູກພືດໃສ່ດິນດຳຂຽວງາມດີ, ນ້ຳໃສດີແມ່ນນ້ຳປະປາ, ຊາຍເປັນເມັດນ້ອຍເຫຼື້ອມ.

### III. ສື່ການຮຽນ-ການສອນ

1. ດິນຮ່ວນ, ດິນໜຽວ, ດິນຊາຍ, ຫີນແຮ່, ຫີນແມ່ນ້ຳ, ນ້ຳ.
2. ບົດຄຳຄ່ອງ ດິນ, ຫີນ, ນ້ຳ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ມີຊີວິດ.
2. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນ ບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດດິນຮ່ວນ, ດິນໜຽວ, ດິນຊາຍ, ຫີນແຮ່, ຫີນແມ່ນ້ຳ, ນ້ຳ, ສົນທະນາກ່ຽວກັບສິ່ງທີ່ບໍ່ມີຊີວິດ.
4. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ແລະ ເວົ້າເປັນປະໂຫຍກຕາມເນື້ອໃນຄຳຄ່ອງຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສິ່ງທີ່ບໍ່ມີຊີວິດ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບແມ່ນ້ຳຕາມແບບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບແມ່ນ້ຳຕາມແບບໄດ້ຖືກຕ້ອງ.
2. ແຕ້ມຮູບພາບແມ່ນ້ຳຕາມແບບໃຫ້ຄ້າຍຄື.
3. ມີຄວາມອົດທົນໃນການແຕ້ມຮູບພາບແມ່ນ້ຳຕາມແບບໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບແມ່ນ້ຳຕາມແບບ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີໄມ້, ຢາງລຶບ, ເຈ້ຍຂາວ.
2. ເຈ້ຍແບບຮູບພາບແມ່ນ້ຳທີ່ແຕ້ມແລ້ວ.
3. ບົດຄຳຄ່ອງ ດິນ, ຫີນ, ນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູພາເດັກນ້ອຍເລົ່າບົດຄຳຄ່ອງ ດິນ, ຫີນ, ນ້ຳ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບແມ່ນ້ຳ, ສົນທະນາກ່ຽວກັບປະໂຫຍດຂອງແມ່ນ້ຳ ແລະ ຂັ້ນຕອນການແຕ້ມຮູບແມ່ນ້ຳ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບແມ່ນ້ຳ
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການແຕ້ມຮູບພາບແມ່ນ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການອະນຸລັກຮັກສາແມ່ນ້ຳ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບແມ່ນ້ຳຕາມແບບ.
2. ຄວາມຄ້າຍຄືຂອງການແຕ້ມຮູບພາບແມ່ນ້ຳຕາມແບບ.
3. ຄວາມອົດທົນໃນການແຕ້ມຮູບພາບແມ່ນ້ຳຕາມແບບໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຮ່າຍນ້ຳໃສ່ແກ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວໄດ້ຖືກຕ້ອງ.
2. ເຝິກຄວາມທ່ຽງຂອງມື.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ແກ້ວ, ຕຸກຢາງ, ໝາກຫວິດ ແລະ  ກະແຊັກ.
2. ບົດຄຳຄ່ອງ ດິນ, ຫີນ, ນ້ຳ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ -ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ດິນ, ຫີນ, ນ້ຳ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ ແກ້ວ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ແກ້ວ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ອົດທົນລໍຖ້າຫຼິ້ນຕາມລຳດັບ, ບໍ່ຫົດນ້ຳໃສ່ກັນ, ຫຼິ້ນແລ້ວອະນາໄມຕີນ, ມື ໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກຢືນສັ່ນແຂນຊ້າງຕາມສຽງສັ່ງກະແຊັກ,  ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມທ່ຽງຂອງມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ

1. ບອກຊື່ເກມ ແລະ ຮູບພາບທີ່ມີໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ: ສິ່ງທີ່ເຮັດຈາກກ້ອນຫີນ: ໂຕະ, ຕັ່ງ, ຄົກ, ສາຍຄໍ, ຕຸ້ມຫູ, ແຫວນ; ສິ່ງທີ່ເຮັດຈາກໄມ້: ເຄື່ອງໃຊ້ໃນເຮືອນ: (ໂຕະ, ຕັ່ງ, ຕູ້, ຕຽງ), ເຄື່ອງໃຊ້ໃນຫ້ອງຮຽນ (ສໍດຳ, ປຶ້ມ, ກະດານ, ຕຸກກະຕາ) , ເຄື່ອງນຸ່ງ (ໂສ້ງ, ເສື້ອ, ສິ້ນ, ເກີບ); ສິ່ງທີ່ເຮັດຈາກດິນ: ໝໍ້, ຄົກ, ຖ້ວຍ, ບ່ວງ, ໄຫ, ເຕົ້າດອກໄມ້; ສິ່ງທີ່ເຮັດຈາກເຫຼັກ: ລົດຖີບ, ລົດຈັກ, ລົດໃຫຍ່.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ: ສິ່ງທີ່ເຮັດຈາກກ້ອນຫີນ: ໂຕະ, ຕັ່ງ, ຄົກ, ສາຍຄໍ, ຕຸ້ມຫູ, ແຫວນ; ສິ່ງທີ່ເຮັດຈາກໄມ້: ເຄື່ອງໃຊ້ໃນເຮືອນ (ໂຕະ, ຕັ່ງ, ຕູ້, ຕຽງ), ເຄື່ອງໃຊ້ໃນຫ້ອງຮຽນ (ສໍດຳ, ປຶ້ມ, ກະດານ, ຕຸກກະຕາ), ເຄື່ອງນຸ່ງ (ໂສ້ງ, ເສື້ອ, ສິ້ນ, ເກີບ); ສິ່ງທີ່ເຮັດຈາກດິນ: ໝໍ້, ຄົກ, ຖ້ວຍ, ບ່ວງ, ໄຫ, ເຕົ້າດອກໄມ້; ສິ່ງທີ່ເຮັດຈາກເຫຼັກ: ລົດຖີບ, ລົດຈັກ, ລົດໃຫຍ່. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໃສກັນຂອງສິ່ງທີ່ມີຊີວິດ.
3. ບົດຄຳຄ່ອງ ດິນ, ຫີນ, ນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ດິນ, ຫີນ, ນ້ຳ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມຮູບຕາມແບບ, ປັ້ນດິນ ເປັນຮູບໝາກກ້ຽງໄດ້ຖືກຕ້ອງ.
3. ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ
2. ແຕ້ມຮູບແມ່ນ້ຳຕາມແບບ, ປັ້ນດິນເປັນຮູບໝາກກ້ຽງ ແລະ ໝາກແອບເປີ້ນ.
3. ການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍຂາວ, ສໍດຳ ຫຼື ສໍສີໄມ້, ແບບຮູບພາບແມ່ນ້ຳດິນສຳລັບປັ້ນ, ຜ້າຮອງປັ້ນ, ຊາມນ້ຳ, ສະບູ, ຜ້າເຊັດມື.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ ແຜ່ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ແຜ່ນເກມລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ດິນ, ຫີນ, ນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ດິນ, ຫີນ, ນ້ຳ ປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການແຕ້ມຮູບຕາມແບບປັ້ນດິນເປັນຮູບໝາກກ້ຽງ
3. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງຄົນ, ສັດ ແລະ ລຽນລຳດັບຮູບພາບການຈະເລີນເຕີບໃຫຍ່ຂອງພືດ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການຢ່າງມ່ວນຊື່ນ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ: ປູກຜັກ, ໃສ່ຝຸ່ນ, ຫົດນ້ຳ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ກຳມືເຂົ້າ, ແບມືອອກ, ທ່າໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນເຕະຂາໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ເອົາມືທັງສອງເບື້ອງຄ່ຳພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມຈິນຕະນາການ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ປະເພດ ແລະ ລັກສະນະຂອງດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກປະເພດ ແລະ ລັກສະນະຂອງດິນໄດ້ຖືກຕ້ອງ.
2. ລຳເດີນ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດລຳໄດ້ຊັດເຈນ.
3. ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີ ວັນນະຍຸດ x່, x້ ໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ປະເພດ ແລະ ລັກສະນະຂອງດິນ.
- ປະເພດຂອງດິນປະກອບມີດິນຮ່ອນ, ດິນໜຽວ ແລະ ດິນຊາຍ
- ລັກສະນະຂອງດິນ: ດິນຮ່ອນ (ດິນປູກຝັງຫຼື ດິນຜຸຍຸ່) ເປັນດິນທີ່ມີເສດໃບໄມ້, ເສດສັດ, ຫີນ ແລະ ຊາຍ ປົນຢູ່ນຳ; ດິນໜຽວ (ດິນດາກ), ເປັນດິນລະອຽດ, ໜຽວ ແລະ ອົມນ້ຳໄດ້ດີ; ດິນຊາຍ: ເປັນເມັດນ້ອຍ, ເຫຼື້ອມ ແລະ ນ້ຳຜ່ານໄດ້ດີ.

2. ການລຳເດີນ ດິນດີ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດລຳ.
- ຄຳສັບ: ດິນຮ່ອນ, ດິນໜຽວ, ດິນຊາຍ, ປູກຝັງ, ລະອຽດ, ເມັດນ້ອຍ, ເຫຼື້ອມ.
- ປະໂຫຍກ: ດິນມີຫຼາຍຊະນິດ, ດິນຮ່ອນໃຊ້ປູກຝັງ, ດິນໜຽວເປັນດິນລະອຽດ, ດິນຊາຍເປັນເມັດນ້ອຍ ເຫຼື້ອມ, ເພິ່ນໃຊ້ຊາຍກໍ່ເຮືອນ.

3. ອ່ານຄຳສັບທີ່ມີ ແລະ ບໍ່ມີ ວັນນະຍຸດ x່, x້: ມາ ລີ ຊີ້ ກະ ຕ່າ; ປ້າມີບ່າ, ບາ ລີ ຖື ກະ ບະ.

### III. ສື່ການຮຽນ-ການສອນ

1. ດິນຮ່ອນ, ດິນໜຽວ, ດິນຊາຍ; ບົດລຳເດີນ ດິນດີ ເບິ່ງໃນປຶ້ມຄູ່ມືຄູ.
2. ບັດຄຳສັບ: ມາ ລີ ຊີ້ ກະ ຕ່າ; ປ້າ ມີ ບ່າ, ບາ ລີ ຖື ກະ ບະ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ບໍ່ມີຊີວິດ.
2. ນາຍຄູພາເດັກນ້ອຍລຳເດີນ, ເວົ້າເປັນຄຳສັບ ປະໂຫຍກຕາມເນື້ອໃນບົດລຳເດີນ.
3. ໃຫ້ເດັກນ້ອຍສັງເກດດິນແຕ່ລະຊະນິດ, ສົນທະນາກ່ຽວກັບລັກສະນະ ແລະ ປະເພດຂອງດິນ.
4. ນາຍຄູພາເດັກນ້ອຍອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີ ວັນນະຍຸດ x່, x້
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບລັກສະນະ ແລະ ປະເພດຂອງດິນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກປະເພດ ແລະ ລັກສະນະຂອງດິນ.
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດລຳ.
3. ຄວາມຊັດເຈນອ່ານຄຳສັບທີ່ມີ ແລະ ບໍ່ມີ ວັນນະຍຸດ x່, x້.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງໄດ້ຖືກຕ້ອງ.
2. ໂຮຍດິນຊາຍໃສ່ຮູບພາບນໍ້າສ້າງໃຫ້ສະອາດຈົບງາມ.
3. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການໂຮຍດິນຊາຍ.

### II. ເນື້ອໃນຕົ້ນຕໍ

ການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ.

### III. ສື່ການຮຽນ-ການສອນ

1. ດິນຊາຍ, ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ, ເສື້ອກັນເປື້ອນ.
2. ຊາມນໍ້າ, ຜ້າເຊັດມື ແລະ ສະບູ.
3. ເຈ້ຍຮູບພາບນໍ້າສ້າງ ແລະ ເຈ້ຍຮູບພາບນໍ້າສ້າງທີ່ໂຮຍຊາຍແລ້ວ.
4. ບົດລຳເດີນ ດິນດີ

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຳເດີນ ດິນດີ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບນໍ້າສ້າງ, ສົນທະນາກ່ຽວກັບຮູບຮ່າງຂອງນໍ້າສ້າງ ແລະ ຂັ້ນຕອນການໂຮຍດິນຊາຍໃສ່ຮູບນໍ້າສ້າງ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ຄືນກ່ຽວກັບຂັ້ນຕອນການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ຄວາມລະມັດລະວັງໃນເວລາຫຼິ້ນດິນຊາຍ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນໃນການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ.
2. ຄວາມສະອາດຈົບງາມໃນການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ.
3. ຄວາມລະມັດລະວັງໃນການໂຮຍດິນຊາຍໃສ່ຮູບພາບນໍ້າສ້າງ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນເຊືອງຕຸກກະຕາ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນເຊືອງຕຸກກະຕາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຊືອງຕຸກກະຕາໄດ້ຖືກຕ້ອງ.
3. ມີຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເຊືອງຕຸກກະຕາ.

## III. ສື່ການຮຽນ-ການສອນ

1. ຜ້າແພ ແລະ ຄຳຄ່ອງເຊືອງຕຸກກະຕາ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນຄໍ່ມື, ໝູນຫົວເຂົ່າ ແລະ ກະໂດດ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນເຊືອງຕຸກກະຕາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນເຊືອງຕຸກກະຕາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນເຊືອງຕຸກກະຕາ.
5. ສຶກສາອົບຮົມເດັກນ້ອຍ: ລະວັງບໍ່ໃຫ້ລົ້ມ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນແລ້ວລ້າງມື, ລ້າງຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍນັ່ງລົງແລ້ວເອົາມືກອດເອິກຫາຍໃຈອອກ-ເຂົ້າຊ້າໆ ຫຼັງຈາກນັ້ນ ປ່ອຍໃຫ້ເດັກ ນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນເຊືອງຕຸກກະຕາ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມບວກຮູບພາບກ້ອນສີ່ແຈຈຳນວນ 1-5

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ບວກຮູບພາບກ້ອນສີ່ແຈຈຳນວນ 1-5 ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການບວກຮູບພາບກ້ອນສີ່ແຈຈຳນວນ 1-5.

### III. ສື່ການຮຽນ-ການສອນ

1. ແຜ່ນເກມພື້ນຖານການບວກຮູບພາບກ້ອນສີ່ແຈຈຳນວນ 1-5 ພື້ນຖານການບວກຮູບພາບ; ກ້ອນສີ່ແຈຈຳນວນ 1-5 (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ
3. ບົດລຳເດີນ ດິນດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຳເດີນດິນດີ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມ.ບວກຮູບພາບກ້ອນສີ່ແຈຈຳນວນ 1-5
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການບວກຮູບພາບກ້ອນສີ່ແຈຈຳນວນ 1-5 .
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ, ມຸມວິທະຍາສາດ ແລະ ທຳມະຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມຮູບຕາມຈິນຕະນາການໃສ່ອ່າງດິນຊາຍ ແລະ ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ.
3. ທົດລອງຖອກນໍ້າໃສ່ດິນໜຽວ, ດິນຊາຍ ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນໝາກຖົ່ວ ແລະ ຜັກບົ້ງ ໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມວິທະຍາສາດ ແລະ ທຳມະຊາດ
2. ແຕ້ມຮູບຕາມຈິນຕະນາການໃສ່ອ່າງດິນຊາຍ ແລະ ຕໍ່ບຼັອກເປັນຮູບຕ່າງໆຕາມຈິນຕະນາການ.
3. ສັງເກດ ແລະ ທົດລອງຖອກນໍ້າໃສ່ດິນໜຽວ, ດິນຊາຍ , ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນໝາກຖົ່ວ ແລະ ຜັກບົ້ງ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ອ່າງດິນຊາຍ. ຊຸດບຼັອກ.
2. ມຸມວິທະຍາສາດ ແລະ ທຳມະຊາດ: ຄຸນໍ້າ, ຈອກ, ດິນໜຽວ ແລະ ດິນຊາຍ. ຕົ້ນໝາກຖົ່ວ ແລະ ຜັກບົ້ງ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.
4. ບົດລຳເຕີບ ດິນຕີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຳເຕີບ ດິນຕີປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກ ເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມວິທະຍາສາດທຳມະຊາດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມວິທະຍາສາດ ແລະ ທຳມະຊາດ. ແລະ ເກັບມ້ຽນອຸປະກອນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການແຕ້ມຮູບຕາມຈິນຕະນາການໃສ່ອ່າງດິນຊາຍ ແລະ ຕໍ່ບຼັອກ ເປັນຮູບຕ່າງໆ ຕາມຈິນຕະນາການ.
3. ຄວາມຖືກຕ້ອງໃນການທົດລອງດິນໜຽວ, ດິນຊາຍ ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນໝາກຖົ່ວ ແລະ ຜັກບົ້ງ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດລຳເດີນ ດິນດີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳເດີນຢ່າງມ່ວນຊື່ນ.
2. ມ່ວນຊື່ນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳເດີນ ດິນດີ.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ບົດລຳເດີນ ດິນດີ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານ ແຂນ ແລະ ຂາ: ທ່າຍົກແຂນຂຶ້ນເທິງຫົວ, ພັບແຂນສອກເອົ້າປາຍນິ້ວມືຈຸບ່າໄຫຼ່ ແລະ ທ່າຢືນຂາດຽວຍົກຂາຄູ້ເອົ້າໄປທາງຫຼັງເອົາມືເບື້ອງໜຶ່ງຈັບໄວ້.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍ່າງໄປ-ມາຕາມສະບາຍ
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດເພງ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຄຸນປະໂຫຍດ ແລະ ການປົກປັກຮັກສາດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄຸນປະໂຫຍດ ແລະ ການປົກປັກຮັກສາດິນໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
3. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກ ຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ຄຸນປະໂຫຍດ ແລະ ການປົກປັກຮັກສາດິນ:
- ຄຸນປະໂຫຍດຂອງດິນ: ດິນຮ່ວນ: ປູກພືດ (ເຮັດໄຮ່, ເຮັດນາ, ເຮັດສວນ); ດິນໜຽວ: ປັ້ນເຮັດເຄື່ອງໃຊ້ (ໝໍ້, ຄົກ, ຖ້ວຍ, ບ່ວງ, ເຕົ້າດອກໄມ້) ແລະ ເຄື່ອງຫຼິ້ນ (ລົດ, ສັດ, ໝາກໄມ້, ດອກໄມ້); ດິນຊາຍ: ດິນຊາຍໃຊ້ໄວ້ປະສົມກັບນ້ຳ, ຊີມັງ ແລະ ຫີນ ເພື່ອກໍ່ສ້າງເຮືອນ.
- ການປົກປັກຮັກສາດິນ: ປູກຫຍ້າ ແລະ ຕົ້ນໄມ້ໃສ່ໜ້າດິນ.
2. ການຟັງນິທານ ຂ້ອຍເກີດຈາກໃສ.
3. ການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ:
- ຄຳສັບ: ດິນຮ່ວນ, ດິນໜຽວ, ດິນຊາຍ, ໄຮ່, ນາ, ສວນ.
- ປະໂຫຍກ: ດິນຮ່ວນໃຊ້ໄວ້ປູກພືດ, ດິນໜຽວປັ້ນເຮັດເຄື່ອງໃຊ້, ຫີນໃຊ້ໄວ້ປະສົມຊີມັງເທພື້ນເຮືອນ, ເດັກນ້ອຍປູກຫຍ້າໃສ່ໜ້າດິນ.

### III. ສື່ການຮຽນ-ການສອນ

1. ຄົກ, ເຕົ້າດອກໄມ້, ຖ້ວຍ; ຮູບພາບ: ເຮືອນກໍ່, ຄົນປູກຫຍ້າ ແລະ ຕົ້ນໄມ້.
2. ປຶດນິທານເລື່ອງ ຂ້ອຍເກີດຈາກໃສ ເບິ່ງໃນປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບປະເພດຂອງດິນ.
2. ນາຍຄູເລົ່ານິທານ, ສົນທະນາກ່ຽວກັບເນື້ອໃນຂອງປຶດນິທານ.
3. ໃຫ້ເດັກນ້ອຍສັງເກດ ຄົກ, ເຕົ້າດອກໄມ້, ຖ້ວຍ; ຮູບພາບ: ເຮືອນກໍ່, ຄົນປູກຫຍ້າ ແລະ ຕົ້ນໄມ້; ສົນທະນາກ່ຽວກັບປະໂຫຍດ ແລະ ການປົກປັກຮັກສາດິນ.
4. ນາຍຄູພາເດັກນ້ອຍເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປົກປັກຮັກສາດິນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຟັງນິທານ ແລະ ການປົກປັກຮັກສາດິນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຄຸນປະ ໂຫຍດ ແລະ ການປົກປັກຮັກສາດິນ.
2. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
3. ຄວາມຊັດເຈນໃນການເວົ້າເປັນຄຳ ສັບ ແລະ ເປັນປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນເປັນຮູບຄົກ ແລະ ສາກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການປັ້ນດິນເປັນຮູບຄົກ ແລະ ສາກໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບຄົກ ແລະ ສາກໃຫ້ມີຄວາມຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບຄົກ ແລະ ສາກ.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ແຜ່ນຮອງປັ້ນ, ເສື້ອກັນເປື້ອນ, ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
3. ຮູບຄົກ ແລະ ສາກທີ່ປັ້ນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນຄໍ່ມື ແລ້ວ ເຮັດທ່າທາງຢຸບດິນ.
2. ໃຫ້ເດັກນ້ອຍສັງເກດຮູບຄົກ, ສາກທີ່ປັ້ນແລ້ວ, ສົນທະນາກ່ຽວກັບສິ່ງທີ່ເອົາມາປັ້ນ ແລະ ຂັ້ນຕອນຂອງການປັ້ນຄົກ ແລະ ສາກ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການປັ້ນດິນເປັນຮູບຄົກ ແລະ ສາກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການປັ້ນດິນເປັນຮູບຄົກ ແລະ ສາກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນເປັນຮູບຄົກ ແລະ ສາກ.
2. ຄວາມຄ້າຍຄືຂອງການປັ້ນດິນເປັນຮູບຄົກ ແລະ ສາກ.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນປ່ຽນ ສິ່ງດອກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນປ່ຽນສິ່ງດອກໄມ້ໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນສິ່ງດອກໄມ້ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນ ສິ່ງດອກໄມ້.

### III. ສື່ການຮຽນ-ການສອນ

1. ດອກໄມ້ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຍ່າງຊ້າໆຕາມສຽງເຄາະ ແລະ ຍືນດີວນິ້ວມື.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນສິ່ງດອກໄມ້.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນສິ່ງດອກໄມ້, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນສິ່ງດອກໄມ້.
5. ສຶກສາອົບຮົມເດັກນ້ອຍ: ລະມັດລະວັງບໍ່ດອກໄມ້ຕົກ, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນ ແລ້ວອະນາໄມມື, ຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍນັ່ງລົງຢຽດຂາຊື່ແລ້ວໃຊ້ສອງມືບີບຊ້າໆ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນປ່ຽນສິ່ງດອກໄມ້.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຮູບພາບ ແລະ ການອອກສຽງພະຍັນຊະນະຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະ 27 ຕົວແຕ່ ກ(ໄກ່) ເຖິງ ຮ(ເຮືອນ).

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ 27 ຕົວແຕ່ ກ(ໄກ່) ເຖິງ ຮ(ເຮືອນ) (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມພື້ນຖານການບອກຮູບພາບກ້ອນສີ່ແຈຈຳນວນ 1-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຄຸນປະໂຫຍດ ແລະ ການປົກປັກຮັກສາດິນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຮູບພາບ ແລະ ພະຍັນຊະນະທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຮູບພາບ, ພະຍັນຊະນະ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຮູບພາບ ແລະ ການອອກສຽງພະຍັນຊະນະຕົ້ນຕາມຮູບພາບ ແລະ ທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ປັ້ນດິນ ແລະ ໂຮຍດິນຊາຍໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ ແລະ ຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ
2. ປັ້ນດິນເປັນຮູບຄົກ, ສາກ ແລະ ໂຮຍດິນຊາຍໃສ່ຮູບພາບນ້ຳສ້າງ.
3. ຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ ແລະ ຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ດິນສຳລັບປັ້ນ, ຜ້າຮອງປັ້ນ, ຊາມນ້ຳ, ສະບູ, ຜ້າເຊັດມື, ດິນຊາຍ, ກາວ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ. ແຜ່ນເກມຈັບຄູ່ທີ່ຄືກັນການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາເດັກນ້ອຍກ່ຽວກັບຄຸນປະໂຫຍດ ແລະ ການປົກປັກສາດິນ.
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການປັ້ນດິນ ແລະ ໂຮຍດິນຊາຍ.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບການເພິ່ງພາອາໄສກັນຂອງສິ່ງທີ່ມີຊີວິດ ແລະ ການຈັບຄູ່ທີ່ຄືກັນຮູບພາບສິ່ງທີ່ບໍ່ມີຊີວິດ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ປູກສາລີ, ພວນດິນ, ໃສ່ຝຸ່ນ, ຫົດນ້ຳ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ລຳຄໍ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ລຳຄໍ: ໝູນລຳຄໍ ແລະ ທ່າຢືນຂາດຽວຍົກຂາຂຶ້ນທາງໜ້າ ເອົາມືທັງສອງເບື້ອງຈັບໄວ້.
2. ໃຫ້ເດັກນ້ອຍຍ່າງຮຽນແບບຍ່າງມ້າ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຂັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ຫີນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລັກສະນະ ແລະ ຄຸນປະໂຫຍດຂອງຫີນໄດ້ຖືກຕ້ອງ.
2. ສັງເກດ ແລະ ອ່ານຕົວເລກໃນເງິນໄດ້ຖືກຕ້ອງ.
3. ອະນຸລັກຮັກສາສິ່ງແວດລ້ອມ ແລະ ເງິນກີບລາວ.

### II. ເນື້ອໃນຕົ້ນຕໍ

1. ລັກສະນະ ແລະ ຄຸນປະໂຫຍດຂອງຫີນ.

- ລັກສະນະຂອງຫີນ: ຫີນມີລັກສະນະແຂງ ແລະ ມີຮູບຮ່າງທີ່ແຕກຕ່າງກັນ (ນ້ອຍ, ໃຫຍ່, ລ່ຽມ, ມົນ).
- ຄຸນປະໂຫຍດຂອງຫີນ: ໃຊ້ໄວ້ກໍ່ສ້າງ (ເຮືອນ, ຂົວ, ຫົນທາງ), ເຮັດເຄື່ອງໃຊ້ (ຖ້ວຍ, ຈອກ, ກາໂລປູເຮືອນ) ແລະ ເຄື່ອງປະດັບ (ສາຍຄໍ, ສາຍແຂນ, ແຫວນ).

2. ສັງເກດ ແລະ ອ່ານຕົວເລກໃນເງິນ: ໃບ 2000 ກີບ ແລະ ໃບ 5000 ກີບ.

### III. ສື່ການຮຽນ-ການສອນ

1. ກ້ອນຫີນ, ເງິນໃບ 200ກີບ ແລະ ໃບ 5000 ກີບ.
2. ຮູບພາບ: ຂົວ, ເຮືອນ, ຫົນທາງ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສິ່ງທີ່ບໍ່ມີຊີວິດ.
2. ໃຫ້ເດັກນ້ອຍສັງເກດກ້ອນຫີນ; ຮູບພາບ: ເຮືອນ, ຂົວ, ຫົນທາງ, ສົນທະນາກ່ຽວກັບລັກສະນະ ແລະ ຄຸນປະໂຫຍດຂອງຫີນ
3. ໃຫ້ເດັກນ້ອຍສັງເກດເງິນໃບ 2000 ແລະ 5000 ກີບ, ອ່ານຕົວເລກຈາກໃບເງິນ.
4. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບລັກສະນະ ແລະ ຄຸນປະໂຫຍດຂອງຫີນ.
5. ນາຍຄູສຶກສາອົບຮົມເດັກນ້ອຍກ່ຽວກັບການອະນຸລັກຮັກສາສິ່ງແວດລ້ອມອ້ອມຕົວ ແລະ ເງິນກີບລາວ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລັກສະນະ ແລະ ຄຸນປະໂຫຍດຂອງຫີນ.
2. ຄວາມຖືກຕ້ອງໃນການອ່ານຕົວ ເລກໃນໃບເງິນ.
3. ການອະນຸລັກຮັກສາສິ່ງແວດລ້ອມ ແລະ ເງິນກີບລາວ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບຖ້ວຍ ແລະ ຈອກ ຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບຖ້ວຍ ແລະ ຈອກຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳໃຫ້ສະອາດຈົບງາມ.
3. ມີຄວາມອົດທົນໃນການແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ຢາງລຶບ, ສໍດຳ ຫຼື ສໍສີ.
2. ເຈ້ຍຮູບພາບ: ຖ້ວຍ, ຈອກທີ່ມີຮອຍຈ້ຳ ແລະ ເຈ້ຍຮູບພາບ: ຖ້ວຍ, ຈອກທີ່ແຕ້ມແລ້ວ.
3. ບົດລຳສີພັນດອນ ນ້ຳ.

### IV. ກິດຈະກຳການຮຽນ - ການສອນ

1. ໃຫ້ເດັກນ້ອຍລຳສີພັນດອນ ນ້ຳ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບຖ້ວຍ, ຈອກ, ສົນທະນາກ່ຽວກັບຮູບຮ່າງຂອງຖ້ວຍ, ຈອກ ແລະ ຂັ້ນຕອນການປັ້ນຖ້ວຍ ແລະ ຈອກ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຮູບພາບຖ້ວຍ,ຈອກຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ຄວາມສາມັກຄີ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບຖ້ວຍ ແລະ ຈອກຕາມຮອຍຈ້ຳ.
2. ຄວາມສະອາດຈົບງາມຂອງການແຕ້ມຮູບພາບຖ້ວຍ ແລະ ຈອກຕາມຮອຍຈ້ຳ.
3. ຄວາມອົດທົນໃນການແຕ້ມຮູບພາບຖ້ວຍ ແລະ ຈອກຕາມຮອຍຈ້ຳໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນປັ້ນຊາຍເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ.
2. ຝຶກຄວາມແຂງແຮງຂອງກ້າມຊີ້ນມື.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ.

## III. ສື່ການຮຽນ-ການສອນ

1. ນ້ຳທີ່ສະອາດ, ຜ້າເຊັດມື, ບົວນ້ອຍ, ດິນຊາຍ, ເຂີງນ້ອຍສຳລັບຮ່ອນຊາຍ, ຊວ້ານນ້ອຍ, ກະໂປະ, ກະປ໋ອງ ແລະ ແມ່ພິມແບບຮູບຕ່າງໆ.
2. ບົດລຳເດີນ ດິນດີ
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍ ລຳເດີນ ດິນດີປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ: ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ຫວ່ານດິນຊາຍໃສ່ຕາກັນ, ຫຼິ້ນແລ້ວອະນາໄມມື, ຕີນໃຫ້ສະອາດ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍພູນເຂົ່າ ແລະ ບິວແອວໄປຂ້າງຊ້າຍ ແລະ ຂ້າງຂວາຊ້າໆ ຫຼັງຈາກນັ້ນແລ້ວ ໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນພະຍັນຊະນະ 27 ຕົວແຕ່ກເຖິງຮ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການອອກສຽງຕົວພະຍັນຊະນະທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ ໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະ 27 ຕົວແຕ່ ກ(ໄກ່) ເຖິງ ຮ(ເຮືອນ): ຮູບພາບໄກ່ເຖິງຮູບພາບເຮືອນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຮູບເລຂາຄະນິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນະທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວແຕ່ ກ ເຖິງ ຮ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມຮູບພາບຕາມແບບ ແລະ ປັ້ນດິນໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
2. ການແຕ້ມຮູບພາບຖ້ວຍ, ຈອກຕາມແບບ ແລະ ປັ້ນດິນເປັນຮູບຄົກ ແລະ ສາກ
3. ການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ 27 ຕົວ ກ (ໄກ່) ເຖິງ ຮ (ເຮືອນ) ແລະ ການຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍຂາວ, ສໍດຳ ຫຼື ສໍສີໄມ້. ດິນປັ້ນ, ຜ້າຮອງປັ້ນ, ຊາມນ້ຳ, ສະບູ, ຜ້າເຊັດມື, ເຈ້ຍແບບຮູບພາບຖ້ວຍ ແລະ ຈອກ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດ. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ 27 ຕົວ ແຕ່ ກ (ໄກ່) ເຖິງ ຮ(ເຮືອນ) ແລະ ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລັກສະນະ ແລະ ຄຸນປະໂຫຍດຂອງຫີນ.
2. ນາຍຄູແນະນຳວິທີຫຼິ້ນ,ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການແຕ້ມຮູບພາບຕາມແບບ ແລະ ປັ້ນດິນເປັນຮູບຄົກ ແລະ ສາກ.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ.
4. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
2. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ: ຫາຍໃຈເຂົ້າ-ຫາຍໃຈອອກ, ສູບລົມເຂົ້າຕີນລົດ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານມື ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ຕີນ: ທ່າຫັກນິ້ວມືລົງ, ຂຶ້ນເທື່ອລະນິ້ວ ແລະ ທ່າຢໍ່າເທົ້າຂຶ້ນ-ລົງ.
2. ໃຫ້ເດັກນ້ອຍຍ່າງຕາມທາງແຄບ 10 ຊັງຕີແມັດ, ຍາວ 3 ແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນຍົກແຂນວາອອກຫາຍໃຈເຂົ້າ, ເອົາແຂນລົງຫາຍໃຈອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
2. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປ່ຽນແປງສະພາບ ແລະ ບອກປະໂຫຍດຂອງນ້ຳໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການທົດລອງການປ່ຽນແປງສະພາບຂອງນ້ຳ.
3. ລຳສີພັນດອນ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດລຳໄດ້ຊັດເຈນ.
4. ອະນຸລັກຮັກສາແຫຼ່ງນ້ຳ.

### II. ເນື້ອໃນຕົ້ນຕໍ

1. ການປ່ຽນແປງສະພາບ ແລະ ປະໂຫຍດຂອງນ້ຳ.
- ການປ່ຽນແປງສະພາບຂອງນ້ຳ: ນ້ຳຮ້ອນ, ນ້ຳເຢັນ (ທົດລອງການປ່ຽນແປງສະພາບຂອງນ້ຳ).
- ຄຸນປະໂຫຍດຂອງນ້ຳ: ໃຊ້ໄວ້ອາບ, ດື່ມ, ລ້າງສິ່ງຂອງ ແລະ ຫົດຕົ້ນໄມ້.
2. ການລຳສີພັນດອນ ນ້ຳ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດລຳ.
- ຄຳສັບ: ລ້າງ, ອາບ, ດື່ມ, ນ້ຳຮ້ອນ, ນ້ຳແຂງ, ນ້ຳເຢັນ, ນ້ຳອຸ່ນ.
- ປະໂຫຍກ: ນ້ຳໃຊ້ໄວ້ລ້າງຮ່າງກາຍ, ນ້ຳໃຊ້ໄວ້ດື່ມ, ນ້ຳໃຊ້ໄວ້ອາບ, ນ້ຳປ່ຽນສະພາບເປັນນ້ຳແຂງ, ນ້ຳມີຢູ່ຫຼາຍແຫ່ງ.

### III. ສື່ການຮຽນ-ການສອນ

1. ນ້ຳ, ເຕົາໄຟ, ໝໍ້ ຫຼື ໝໍ້ໄຟຟ້າ.
2. ບົດລຳສີພັນດອນ ນ້ຳ

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບນ້ຳທີ່ເດັກນ້ອຍເຄີຍດື່ມ.
2. ນາຍຄູພາເດັກນ້ອຍລຳສີພັນນດອນ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດລຳ.
3. ນາຍຄູພາເດັກນ້ອຍປະຕິບັດຕົວຈິງກ່ຽວກັບການທົດລອງການປ່ຽນແປງສະພາບຂອງນ້ຳ, ສົນທະນາກ່ຽວກັບການປ່ຽນແປງສະພາບ ແລະ ປະໂຫຍດຂອງນ້ຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປ່ຽນແປງສະພາບ ແລະ ຄຸນປະໂຫຍດຂອງນ້ຳ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີກັນ ແລະ ການອະນຸລັກຮັກສາແຫຼ່ງນ້ຳ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປ່ຽນ ແປງສະພາບ ແລະ ປະໂຫຍດຂອງນ້ຳ.
2. ການປະຕິບັດຕົວຈິງໃນການທົດລອງ ການປ່ຽນແປງສະພາບຂອງນ້ຳ.
3. ຄວາມຊັດເຈນໃນການລຳສີພັນດອນ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກ ຕາມເນື້ອໃນບົດລຳ.
4. ອະນຸລັກຮັກສາແຫຼ່ງນ້ຳ.

# ກິດຈະກຳສີລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ×ູ ຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກທິດທາງ ແລະ ຂຽນສະຫຼະ ×ູ ຕາມຄຳສັບໄດ້ຖືກຕ້ອງ
2. ຂີດຂຽນສະຫຼະ ×ູ ຕາມຄຳສັບໃຫ້ຖືກຕ້ອງ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ×ູ ຕາມຄຳສັບໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ×ູ ຕາມຄຳສັບ: ຄູ ບູ ສູ ຊູ ຖູ ຮູ ຫູ.

### III. ສື່ການຮຽນ-ການສອນ

1. ຢາງລຶບ, ສໍດຳ ຫຼື ສໍສີ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 2 (ໜ້າ 1)  ຫຼື ເຈ້ຍສະຫຼະ ×ູ ຕາມຄຳສັບ: ຄູ ບູ ສູ ຊູ ຖູ ຮູ ຫູ
3. ເຈ້ຍຂຽນສະຫຼະ ×ູ ຕາມຄຳສັບ: ຄູ ບູ ສູ ຊູ ຖູ ຮູ ຫູ ທີ່ຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຂຽນໜັງສືເທິງກາງຫາວ.
2. ນາຍຄູພາເດັກນ້ອຍສັງເກດຄຳສັບແລ້ວໃຫ້ເດັກນ້ອຍອ່ານຄຳສັບໃນປະໂຫຍກ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ×ູ ຕາມຄຳສັບ ທີ່ມີຢູ່ໃນປະໂຫຍກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບວິທີຂີດຂຽນສະຫຼະ ×າ, ×ິ, ×ີ, ×ະ ທີ່ມີຢູ່ໃນປະໂຫຍກຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກທິດທາງ ແລະ ຂຽນສະຫຼະ ×ູ ຕາມຄຳສັບ
2. ຄວາມຖືກຕ້ອງໃນການຂີດຂຽນສະຫຼະ ×ູ ຕາມຄຳສັບ.
3. ຄວາມອົດທົນໃນການຂີດຂຽນສະຫຼະ ×ູ ຕາມຄຳສັບໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.

### III. ສື່ການຮຽນ-ການສອນ

1. ເຊືອກຟາງ ແລະ ຫວີດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນຄໍມື. ໝູນຫົວເຂົ່າ ແລະ ຢ່ຳເທົ້າ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ..
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງເຕັ້ນບໍ່ໃຫ້ລົ້ມ, ຫຼິ້ນແລ້ວອະນາໄມມື ແລະ ຕີນໃຫ້ສະອາດ.
6. ໃຫ້ເດັກນ້ອຍເຮັດທ່າທາງລົມພັດຊ້າໆ ຫັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ການອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບໄກ່ເຖິງຮູບພາບເຮືອນ; ຕົວພະຍັນຊະນະ ກ ເຖິງ ຮ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບໄກ່ເຖິງຮູບພາບເຮືອນ; ຕົວພະຍັນຊະນະ ກ ເຖິງ ຮ. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ 27 ຕົວ ແຕ່ ກ ເຖິງ ຮ.
3. ບົດລຳສີພັນດອນ ນ້ຳ

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍລຳສີພັນດອນ ນ້ຳ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຮູບພາບຕົວພະຍົນຊະນະທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຮູບພາບ ແລະ ຕົວພະຍັນຊະນະ ແລະ ການຫຼິ້ນເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບຕົວພະຍັນຊະນະ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມອ່ານ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ທົດລອງເອົາມືຈຸ່ມລົງນ້ຳອຸ່ນ, ນ້ຳເຢັນ, ປູກແກ່ນໝາກຖົ່ວ ແລະ ຜັກບົ້ງໄດ້ຖືກຕ້ອງ.
3. ອ່ານເປັນປະໂຫຍກທີ່ມີສະຫຼະ ×າ ×ິ ×ີ ×ູ ×ະ ແລະ ເວົ້າຕາມຮູບພາບໄດ້ຊັດເຈນ.
4. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

## II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ ແລະ ມຸມອ່ານ
2. ການສັງເກດ ແລະ ທົດລອງເອົາມືຈຸ່ມລົງນ້ຳອຸ່ນ, ນ້ຳເຢັນ; ປູກແກ່ນໝາກຖົ່ວ ແລະ ຜັກບົ້ງ.
3. ການອ່ານອອກສຽງເປັນປະໂຫຍກທີ່ມີສະຫຼະ ×າ ×ິ ×ີ ×ູ ×ະ ຕາມປຶ້ມບົດເຝິກຫັດພາສາລາວ ແລະ ອ່ານຕາມຮູບພາບ: ເຮືອນ, ຖ້ວຍ,ຈອກ, ສາຍຄຳຄຳ, ສາຍແຂນ,

## III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ຈອກນ້ຳອຸ່ນ, ນ້ຳເຢັນ ຫຼື ນ້ຳກ້ອນ. ກະປ໋ອງດິນ, ແກ່ນໝາກຖົ່ວ, ແກ່ນຜັກບົ້ງ.
2. ມຸມອ່ານ: ກະດານສຽນ ຫຼື ຕິດ. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 2 (ໜ້າ 6). ຮູບພາບ: ເຮືອນ, ຖ້ວຍ,ຈອກ, ສາຍຄຳຄຳ, ສາຍແຂນ ແລະ ແຫວນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດລຳສີພັນດອນ ນ້ຳ.

## IV. ກິດຈະກຳການຮຽນ - ການສອນ

1. ໃຫ້ເດັກນ້ອຍລຳສີພັນດອນ ນ້ຳ. ປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນ,ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມວິທະຍາສາດທຳມະຊາດ ແລະ ມຸມອ່ານ. .
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມວິທະຍາສາດທຳມະຊາດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການທົດລອງເອົາມືຈຸ່ມລົງ ນ້ຳອຸ່ນ, ນ້ຳເຢັນ, ປູກແກ່ນໝາກຖົ່ວ ແລະ ຜັກບົ້ງ.
3. ຄວາມຊັດເຈນໃນການອ່ານເປັນປະໂຫຍກທີ່ມີສະຫຼະ ×າ ×ິ ×ີ ×ູ ×ະ ແລະ ອ່ານຕາມຮູບພາບ.
4. ການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

# ຈຸດປະສົງສຳລັບອາທິດທີ 3

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳສີພັນດອນໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ, ບົດເພງໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
4. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
5. ອົດທົນໃນເວລາສະແດງທ່າທາງ.
6. ມ່ວນຊື່ນໃນເວລາສະແດງທ່າທາງ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
8. ກ້າສະແດງອອກໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເວລາກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນໄດ້ຖືກຕ້ອງ.
2. ອ່ານຕົວເລກອາຣັບຈາກໂມງ 1-12.
3. ບອກການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງໄດ້ຖືກຕ້ອງ.
4. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ຮູບພາບໄດ້ຊັດເຈນ.
5. ບອກຊ່ວງເວລາກາງຄືນ ແລະ ການປະຕິບັດຕົນໄດ້ຖືກຕ້ອງ.
6. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ
7. ປະຕິບັດຕົນໃນເວລາກາງຄືນ.
8. ບອກຊື່ວັນໃນ 1 ອາທິດ ແລະ ກິດຈະກຳໃນມື້ວານ, ມື້ນີ້, ມື້ອື່ນໄດ້ຖືກຕ້ອງ.
9. ຮ້ອງເພງປະກອບທ່າທາງດ້ວຍຄວາມມ່ວນຊື່ນ.
10. ບອກຊື່ວັນໃນໜຶ່ງອາທິດ, ວັນເຂົ້າຮຽນ, ວັນພັກຮຽນ, ເດືອນໃນ 1 ປີ, ເດືອນທີ່ເຂົ້າຮຽນ, ເດືອນພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນໄດ້ຖືກຕ້ອງ.
11. ນັບຊື່ເດືອນໃນໜຶ່ງປີໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການແຕ້ມ ແລະ ທາສີຮູບພາບດວງອາທິດ, ການຈີກຮູບພາບດວງອາທິດຕາມຮອຍຈ້ຳ ການເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ, ການຮ້ອຍກະດຸມສະຫຼັບສີ, ການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮ້ອຍຈ້ຳໄດ້ຖືກຕ້ອງ.
2. ແຕ້ມ, ທາສີຮູບພາບດວງອາທິດ, ເປົ່າສີເປັນຮູບພາບຕາມຈິນຕະນາການໃຫ້ສະອາດຈົບງາມ ແລະ ຢູ່ໃນຂອບ.
3. ມີຄວາມອົດທົນໃນການແຕ້ມຮູບພາບດວງອາທິດ, ຈີກຮູບພາບດວງອາທິດໃຫ້ຈົບງາມ.
4. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໃຫ້ຄ່ອງແຄ້ວ.
5. ລະມັດລະວັງໃນເວລາເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ
6. ຮ້ອຍກະດຸມສະຫຼັບສີໄດ້ຖືກຕ້ອງ.
7. ພັດທະນາແນວຄິດສ້າງສັນໃນການຮ້ອຍກະດຸມສະຫຼັບສີ.
8. ສັງເກດຕົວເລກ ແລະ ຈື່ຈຳຕົວເລກຢູ່ໃນໂມງ.
9. ຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳໃຫ້ຖືກຕ້ອງ.

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍ ສາມາດ:

1. ບອກຂັ້ນຕອນ ແລະ ກາຕິກາການຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ, ຫຼິ້ນແບບຫຼິ້ນຫຼັງຕິດກັນ, ຫຼິ້ນແບບຫຼິ້ນຕັ່ງວິເສດ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ,
2. ຫຼິ້ນແບບຫຼິ້ນໂພງພາງຕາບອດ, ຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ, ຫຼິ້ນແບບຫຼິ້ນຫຼັງຕິດກັນ, ຫຼິ້ນແບບຫຼິ້ນຕັ່ງວິເສດ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
6. ມີມາລະຍາດທີ່ດີໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຕົວເລກ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ ແລະ ຮູບພາບເດັກໃສ່ເຄື່ອງປ້ອງກັນຝົນໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຕົວເລກແຕ່ 1-15 ໄດ້ຖືກຕ້ອງ.
4. ຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດໄດ້ຖືກຕ້ອງ.
5. ຈັບຄູ່ຊື່ເດືອນກັບຕົວເລກ 1-12 ໄດ້ຖືກຕ້ອງ.
6. ອົດທົນໃນເວລາຫຼິ້ນເກມ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
8. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ພິມຝາມືໃສ່ອ່າງດິນຊາຍ, ຂຽນສະຫຼະໃສ່ອ່າງດິນຊາຍຢ່າງມ່ວນຊື່ນ.
3. ແຕ້ມ, ທາສີຮູບພາບດວງອາທິດ, ຂຽນສະຫຼະ ຸ ຕາມຮອຍຈ້ຳ, ຂຽນຕົວເລກໃສ່ຮູບພາບໂມງ, ຈີກຮູບພາບດວງອາທິດຕາມຮອຍຈ້ຳ, ເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ, ຮ້ອຍກະດູມສະຫຼັບກັນຕາມສີໄດ້ຖືກຕ້ອງ.
4. ອ່ານຕາມຮູບພາບໃນປຶ້ມນິທານ, ອ່ານອອກສຽງຄຳສັບທີ່ມີສະຫຼະ ິ ີ ຕາມຕາຕະລາງ, ອ່ານຊື່ເດືອນໃນໜຶ່ງປີໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນນາຍຄູ, ຫຼິ້ນເປັນຕົວລະຄອນໃນບົດເລື່ອງນິທານ, ຫຼິ້ນເປັນແມ່ເປັນລູກ, ເປັນອ້າຍ ແລະ ເອື້ອຍຢ່າງມ່ວນຊື່ນ.
6. ຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ, ບວກຮູບພາບກ້ອນສີ່ແຈ ຈຳນວນ 1-5 ໄດ້ຖືກຕ້ອງ
7. ເກັບມ້ຽນເຄື່ອງຫຼິ້ນໄວ້ເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
8. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
10. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.
11. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳສີພັນດອນ ນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳສີພັນດອນໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳສີພັນດອນ ນ້ຳ.

### III. ສື່ການຮຽນ-ການສອນ

1. ບົດລຳສີພັນດອນ ນ້ຳ.
2. ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນຄໍ, ທ່າວາແຂນອອກສູງພຽງກັບບ່າໄຫຼ່, ເອົາມືທັງສອງເບື້ອງໄຂວ່ກັນຢູ່ທາງໜ້າ.
2. ໃຫ້ເດັກນ້ອຍແລ່ນເຕະຂາໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳ ສີພັນດອນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍ່າງຊ້າໆ ເຮັດທ່າທາງເກັບຂີ້ເຫຍື້ອ
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳ ສີພັນດອນ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳສີພັນດອນ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ກາງເວັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເວລາກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນໄດ້ຖືກຕ້ອງ.
2. ອ່ານຕົວເລກອາຣັບຈາກໂມງ 1-12.

### II. ເນື້ອໃນຕົ້ນຕໍ

1. ກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນ.

- ກາງເວັນ: ເປັນຊ່ວງເວລາທີ່ດວງອາທິດ ຫຼື ຕາເວັນຂຶ້ນຈົນຮອດດວງອາທິດຕົກເຊິ່ງມີ 3 ຕອນ ຄື: ຕອນເຊົ້າ, ຕອນສວາຍ ແລະ  ຕອນແລງ.
- ຊ່ວງໄລຍະເວລາຂອງກາງເວັນຕອນເຊົ້າ: ດວງອາທິດຂຶ້ນເພິ່ນເອີ້ນວ່າຕອນເຊົ້າເລີ້ມເວລາປະມານ 6:00 ໂມງ-10:00 ໂມງ.
- ຊ່ວງໄລຍະເວລາຂອງກາງເວັນຕອນສວາຍ: ເຮົາເຫັນດວງອາທິດຢູ່ຊື່ຫົວເຮົາເພິ່ນເອີ້ນວ່າຕອນທ່ຽງ ຫຼື ຕອນສວາຍ  ເຊິ່ງເລີ້ມແຕ່ເວລາ12:00 ໂມງ-13:00 ໂມງ.
- ຊ່ວງໄລຍະເວລາຂອງກາງເວັນຕອນແລງ: ເຮົາເຫັນດວງອາທິດລົງເພິ່ນເອີ້ນວ່າຕອນແລງເຊິ່ງເລີ້ມແຕ່ 14:00 ໂມງ-18:00 ໂມງ (4:00ໂມງແລງ-6:00ໂມງແລງ).

2. ການອ່ານຕົວເລກອາຣັບຈາກໂມງ 1-12.

### III. ສື່ການຮຽນ-ການສອນ

1. ໂມງໃຫຍ່, ຮູບພາບ: ຕອນເຊົ້າ, ຕອນສວຍ, ຕອນແລງ.
2. ນິດນິທານເລື່ອງ ດວງຕາເວັນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເວລານອນ ແລະ ເວລາຕື່ນນອນຕອນເຊົ້າ.
2. ໃຫ້ເດັກນ້ອຍສັງເກດຮູບພາບ ຕອນເຊົ້າ, ຕອນສວຍ, ຕອນແລງ, ສົນທະນາກ່ຽວກັບເວລາກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນ.
3. ນາຍຄູໃຫ້ເດັກນ້ອຍສັງເກດຕົວເລກໃນໂມງ, ອ່ານຕົວເລກອາຣັບຈາກໂມງ 1-12.
4. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊ່ວງໄລຍະເວລາຂອງກາງເວັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດຕົນໃນເວລາກາງເວັນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເວລາກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນ.
2. ຄວາມຖືກຕ້ອງໃນການອ່ານຕົວເລກອາຣັບຈາກໂມງ1-12

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບດວງອາທິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການແຕ້ມ ແລະ ທາສີຮູບພາບດວງອາທິດໄດ້ຖືກຕ້ອງ.
2. ແຕ້ມ ແລະ ທາສີຮູບພາບດວງອາທິດໃຫ້ສະອາດຈົບງາມ ແລະ ຢູ່ໃນຂອບ.
3. ມີຄວາມອົດທົນໃນການແຕ້ມຮູບພາບດວງອາທິດ.

### II. ເນື້ອໃນຕົ້ນຕໍ

ການແຕ້ມ ແລະ ທາສີຮູບພາບດວງອາທິດ.

### III. ສື່ການຮຽນ-ການສອນ

1. ຢາງລຶບ, ສໍດຳ, ສໍສີໄມ້ ຫຼື ສີທຽນ.
2. ເຈ້ຍຮູບພາບດວງອາທິດ ແລະ ເຈ້ຍຮູບພາບດວງອາທິດທີ່ແຕ້ມ ແລະ ທາສີແຕ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເອົານິ້ວມືສານກັນແອ່ນຝາມືໄປທາງໜ້າ.
2. ໃຫ້ເດັກນ້ອຍສັງເກດຮູບພາບດວງອາທິດ, ສົນທະນາກ່ຽວກັບຮູບຮ່າງ ແລະ ຂັ້ນຕອນການແຕ້ມ ແລະ ທາສີຮູບພາບດວງອາທິດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມ ແລະ ທາສີຮູບພາບດວງອາທິດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການແຕ້ມ ແລະ ທາສີຮູບພາບດວງອາທິດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມ ແລະ ທາສີຮູບພາບດວງອາທິດ.
2. ຄວາມສະອາດຈົບງາມ ແລະ ຢູ່ໃນຂອບຂອງຮູບພາບດວງອາທິດ.
3. ຄວາມອົດທົນໃນການແຕ້ມຮູບພາບດວງອາທິດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນໂພງພາງຕາບອດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນໂພງພາງຕາບອດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນໂພງພາງຕາບອດໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນໂພງພາງຕາບອດ.

### III. ສື່ການຮຽນ-ການສອນ

1. ໝາກຫວິດ, ກອງ ແລະ ບົດຄຳຄ່ອງໂພງພາງຕາບອດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ)

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຄ້ຳແອວ ເຕັ້ນຢູ່ກັບທີ່.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນໂພງພາງຕາບອດ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນໂພງພາງຕາບອດ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນໂພງພາງຕາບອດ.
5. ສຶກສາອົບຮົມເດັກ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ຍູ້ກັນລົ້ມ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍເຮັດທ່າທາງນົກບິນ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນໂພງພາງຕາບອດ.
3. ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ: 6 ໂມງ, 10 ໂມງ, 12 ໂມງ, 1 ໂມງ, 2 ໂມງ, 4 ໂມງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ: 6 ໂມງ, 10 ໂມງ, 12 ໂມງ, 1 ໂມງ, 2 ໂມງ, 4 ໂມງ. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ຈັບຄູ່ທີ່ຄືກັນຮູບພາບກັບຕົວພະຍັນຊະນະ; ຮູບພາບໄກ່ເຖິງເຮືອນ; ຕົວພະຍັນຊະນະແຕ່ ກ ເຖິງ ຮ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງການບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມ, ທາສີຮູບພາບ ແລະ ຂຽນສະຫຼະ x ູ ຕາມຮອຍຈ້ຳໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ ແລະ ບວກຮູບພາບກ້ອນສີ່ແຈຈຳນວນ 1-5 ໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ
2. ແຕ້ມ ແລະ ທາສີຮູບພາບດວງອາທິດ ແລະ ຂຽນສະຫຼະ x ູ ຕາມຮອຍຈ້ຳ
3. ການຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ: 6 ໂມງ, 10 ໂມງ, 12 ໂມງ, 1 ໂມງ, 2 ໂມງ, 4 ໂມງ ແລະ ການບວກຮູບພາບກ້ອນສີ່ແຈຈຳນວນ 1-5.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ຮູບພາບດວງອາທິດ, ປຶ້ມບົດເຝິກຫັດພາສາລາວ ຫຼື ເຈ້ຍຂຽນສະຫຼະ x ູ
2. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ: 6 ໂມງ, 10 ໂມງ, 12 ໂມງ, 1 ໂມງ, 2 ໂມງ, 4 ໂມງ ແລະ ແຜ່ນເກມພື້ນຖານການບວກຮູບພາບກ້ອນສີ່ແຈຈຳນວນ 1-5.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບກາງເວັນ ແລະ ຊ່ວງໄລຍະເວລາຂອງກາງເວັນ.
2. ນາຍຄູແນະນຳວິທີຫຼິ້ນ,ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການ ແຕ້ມ, ທາສີຮູບພາບ, ຂຽນສະຫຼະ x ູ ຕາມຮອຍຈ້ຳ
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ ແລະ ການບວກຮູບພາບກ້ອນສີ່ແຈຈຳນວນ 1-5
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ການປະຕິບັດຕົນໃນຕອນເຊົ້າ, ສວຍ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

## II. ເນື້ອໃນຕົ້ນຕໍ

- ການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າໃນການປະຕິບັດຕົນໃນຕອນເຊົ້າ, ສວຍ:
- ຕອນເຊົ້າ: ໄປໂຮງຮຽນ, ລຽນແຖວ, ຫັດກາຍ.
- ຕອນສວຍ: ລ້າງມື, ເຊັດມື, ກິນເຂົ້າ.

## III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານມື ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແອວ: ທ່າຫັກນິ້ວມືລົງ, ຂຶ້ນເທື່ອລະນິ້ວ ແລະ ທ່າຫງ່ຽງແອວໄປຂວາ-ຊ້າຍ.
2. ໃຫ້ເດັກນ້ອຍເຕັ້ນຂາດຽວເຂົ້າວົງມົນ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄໍ່າພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບບົດເລື່ອງທີ່ນາຍຄູເລົ່າ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດຕົນໃນແຕ່ລະຊ່ວງເວລາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງໄດ້ຖືກຕ້ອງ.
2. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງ.

- ຕອນເຊົ້າ: ມາໂຮງຮຽນໃຫ້ທັນເວລາ, ລຽນແຖວ, ເຄົາລົບທຸງ, ຫັດກາຍ ແລະ ຮຽນໜັງສື.
- ຕອນສວາຍ: ລ້າງມືກ່ອນກິນເຂົ້າ, ກິນເຂົ້າທ່ຽງ, ນອນພັກຜ່ອນ, ມ້ຽນບ່ອນນອນ.
- ຕອນແລງ: ຮຽນໜັງສື, ຫຼິ້ນ ແລະ ກັບເມືອເຮືອນ.

2. ການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ:

- ຄຳສັບ: ລຽນແຖວ, ເຄົາລົບທຸງ, ຫັດກາຍ.
- ປະໂຫຍກ: ເດັກຮຽນໜັງສື, ເດັກນ້ອຍນອນຕອນທ່ຽງ, ເດັກນ້ອຍຍ່າງຫັດກາຍຕອນເຊົ້າ, ເດັກນ້ອຍໄປໂຮງຮຽນ ແຕ່ເຊົ້າ, ເອື້ອຍກວາດເຮືອນຊ່ວຍພໍ່ແມ່, ເດັກນ້ອຍກັບໝູ່ລຽນແຖວເຄົາລົບທຸງຊາດ.

### III. ສື່ການຮຽນ-ການສອນ

ຮູບພາບ: ເດັກນ້ອຍລຽນແຖວເຄົາລົບທຸງ, ເດັກນ້ອຍຫັດກາຍ, ເດັກນ້ອຍຮຽນໜັງສື, ເດັກນ້ອຍຫຼິ້ນ, ເດັກນ້ອຍກິນເຂົ້າ, ເດັກນ້ອຍນອນ, ເດັກນ້ອຍກັບເມືອເຮືອນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊ່ວງໄລຍະເວລາຂອງກາງເວັນ.
2. ໃຫ້ເດັກນ້ອຍເວົ້າກ່ຽວກັບການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວຍ, ຕອນແລງທີ່ເດັກນ້ອຍເຄີຍປະຕິບັດມາ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບການປະຕິບັດຕົນໃນແຕ່ລະຊ່ວງເວລາ.
4. ນາຍຄູພາເດັກນ້ອຍເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງ
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຮັກແພງກັນ ແລະ ການປະຕິບັດຕົນໃນແຕ່ລະຊ່ວງເວລາ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວາຍ ແລະ ຕອນແລງ.
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈີກຮູບພາບດວງອາທິດຕາມຮອຍຈໍ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຈີກຮູບພາບດວງອາທິດຕາມຮອຍຈໍ້າໄດ້ຖືກຕ້ອງ.
2. ເຝິກປະສາດສຳພັນລະຫວ່າງມື ກັບ ຕາໃຫ້ຄ່ອງແຄ້ວ.
3. ອົດທົນໃນການຈີກຮູບພາບດວງອາທິດໃຫ້ຈົບງາມ.

### II. ເນື້ອໃນຕົ້ນຕໍ

ການຈີກຮູບພາບດວງອາທິດຕາມຮອຍຈໍ້າ.

### III. ສື່ການຮຽນ-ການສອນ

1. ເຈ້ຍຮູບພາບດວງອາທິດທີ່ມີຮອຍຈໍ້າ.
2. ເຈ້ຍຮູບພາບດວງອາທິດທີ່ຈີກແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງດີດຄໍ້ວມື ແລະ ເຮັດທ່າທາງຈີກເຈ້ຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບດວງອາທິດທີ່ຈີກແລ້ວ, ສົນທະນາກ່ຽວກັບປະໂຫຍດ ແລະ ຂັ້ນຕອນການຈີກຮູບພາບດວງອາທິດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຈີກຮູບພາບດວງອາທິດຕາມຮອຍຈໍ້າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການຈີກຮູບພາບດວງອາທິດຕາມຮອຍຈໍ້າ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນໃນການຈີກຮູບພາບດວງອາທິດຕາມຮອຍຈໍ້າ.
2. ຄວາມຄ່ອງແຄ້ວໃນການຈີກຮູບພາບດວງອາທິດຕາມຮອຍຈໍ້າ.
3. ຄວາມອົດທົນໃນການຈີກຮູບພາບດວງອາທິດຕາມຮອຍຈໍ້າໃຫ້ຈົບງາມ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງໄດ້ຖືກຕ້ອງ.
3. ມີມາລະຍາດທີ່ດີໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ.

### III. ສື່ການຮຽນ-ການສອນ

1. ເຊືອກ, ໄມ້ນ້ອຍສຳລັບຂີດເສັ້ນ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍແກ່ວງແຂນທັງສອງເບື້ອງໄປທາງໜ້າ ແລະ ທາງຫຼັງສະຫຼັບກັນໄປ, ມາ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນນົກບິນເຂົ້າຮັງ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຄ່ອຍແລ່ນ, ຫຼິ້ນແລ້ວອະນາໄມມື ແລະ ຕີນໃຫ້ສະອາດ.
6. ໃຫ້ເດັກນ້ອຍຄ້ຳແອວ ຍືດຕົວຂຶ້ນສູງໆ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນນົກບິນ ເຂົ້າຮັງ.
3. ມາລະຍາດທີ່ດີໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ: ຮູບພາບເດັກນ້ອຍກັ້ງຄັນຮົ່ມ, ເດັກໃສ່ໝວກ ຫຼື ກຸບ, ເດັກໃສ່ເສື້ອກັນຝົນ, ເດັກໃສ່ເກີບໂບກ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ: ຮູບພາບເດັກນ້ອຍກັ້ງຄັນຮົ່ມ, ເດັກໃສ່ໝວກ ຫຼື ກຸບ, ເດັກໃສ່ເສື້ອກັນຝົນ, ເດັກໃສ່ເກີບໂບກ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບໂມງທີ່ມີເວລາຄືກັນ: 6 ໂມງ, 10 ໂມງ, 12 ໂມງ, 1 ໂມງ, 2 ໂມງ, 4 ໂມງ,

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດກິດຈະກຳຂອງເດັກນ້ອຍໃນໜຶ່ງວັນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເປັນນາຍຄູ ແລະ ຫຼິ້ນເປັນຕົວລະຄອນໃນບົດເລື່ອງນິທານຢ່າງມ່ວນຊື່ນ.
3. ອ່ານອອກສຽງຄຳສັບທີ່ມີສະຫຼະ ິ ແລະ ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
4. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ
2. ການຫຼິ້ນບົດບາດສົມມຸດເປັນນາຍຄູພາເດັກນ້ອຍລຽນແຖວເຄົາລົບທຸງຊາດ ແລະ ເປັນຕົວລະຄອນໃນບົດນິທານເລື່ອງ ດວງຕາເວັນ.
3. ການອ່ານອອກສຽງຄຳສັບທີ່ມີ ສະຫຼະ ິ: ກິ ບິ ປິ ສິ ທິ ຈິ ນິ ຕິ; ອ່ານຕາມຮູບພາບໃນປຶ້ມນິທານດວງຕາເວັນ , ຂ້ອຍເກີດມາຈາກໃສ, ຂ້ອຍແມ່ນໃຜ, ສິ່ງທີ່ຂ້ອຍຕ້ອງການ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ຫຼັກທຸງ ແລະ ທຸງຊາດຈິງ ຫຼື ຈຳລອງ, ໜ້າກາກຕົວລະຄອນໃນບົດນິທານເລື່ອງ ດວງຕາເວັນ.
2. ມຸມອ່ານ: ກະດານສຽບ ຫຼື ຕິດ, ປຶ້ມບົດຝຶກຫັດພາສາລາວ ເຫຼັ້ມ 2 (ໜ້າ 7-8), ປຶ້ມນິທານເລື່ອງ ດວງຕາເວັນ, ຂ້ອຍເກີດມາ ຈາກໃສ, ຂ້ອຍແມ່ນໃຜ, ສິ່ງທີ່ຂ້ອຍຕ້ອງການ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນແຕ່ລະຊ່ວງເວລາຕອນເຊົ້າ, ຕອນສວຍ ແລະ ຕອນແລງ.
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸມ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເປັນນາຍຄູ ແລະ ຫຼິ້ນເປັນຕົວລະຄອນໃນບົດເລື່ອງນິທານ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີສະຫຼະ ິ ແລະ ອ່ານຕາມຮູບພາບໃນປຶ້ມນິທານ.
4. ການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ:

- ເວົ້າຄຳວ່າຕອນເຊົ້າສະແດງທ່າທາງຈັບກະເປົ໋າຍ່າງໄປໂຮງຮຽນ.
- ເວົ້າຄຳວ່າຕອນສວຍສະແດງທ່າທາງກິນເຂົ້າ.
- ເວົ້າຄຳວ່ານອນຕອນແລງສະແດງທ່າທາງເກັບເຄື່ອງຮຽນໃສ່ກະເປົ໋າກັບບ້ານ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າກົ້ມຫົວລົງ, ເງີຍຫົວຂຶ້ນ, ທ່າໂຍ່ງໂຍະຂາລົງ.
2. ໃຫ້ເດັກນ້ອຍແລ່ນຊຸກແຊັກ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### IV. ກິດຈະກຳການຮຽນ - ການສອນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1 ຄວາມຖືກຕ້ອງໃນການປະຕິບັດຂໍ້ຕົກລົງຕາມນາຍຄູແນະນຳ

2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ກາງຄືນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊ່ວງເວລາກາງຄືນ ແລະ ການປະຕິບັດຕົນໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
3. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ປະຕິບັດຕົນໃນເວລາກາງຄືນ.

### II. ເນື້ອໃນຕົ້ນຕໍ

1. ກາງຄືນ ແລະ ການປະຕິບັດຕົນ.
- ກາງຄືນ: ເປັນຊ່ວງເວລາທີ່ດວງອາທິດຕົກຈົນຮອດດວງອາທິດຂຶ້ນເລີ້ມແຕ່ເວລາ18:00ໂມງ-6:00ໂມງ ເຊົ້າ (6:00ໂມງແລງ-6:00ໂມງເຊົ້າ).
- ການປະຕິບັດຕົນໃນຕອນກາງຄືນ: ບໍ່ອອກໄປຫຼິ້ນນອກເຮືອນ, ກິນເຂົ້າແລງ, ຮຽນໜັງສື ແລະ ນອນ.
2. ການເລົ່າຄຳຄ່ອງ ກາງຄືນ ປະກອບທ່າທາງ.
3. ການເວົ້າເປັນປະໂຫຍກຕາມຮູບພາບ: ຕາເວັນຕົກ, ເດັກນ້ອຍຊ່ວຍແມ່ແຕ່ງກິນ, ເດັກນ້ອຍອາບນ້ຳ, ເດັກນ້ອຍກິນເຂົ້າແລງ, ເດັກນ້ອຍຮຽນໜັງສື, ເດັກນ້ອຍລ້າງຕີນກ່ອນເຂົ້ານອນ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເວລາກາງຄືນ, ເດັກນ້ອຍນັ່ງຮຽນໜັງສື, ເດັກນ້ອຍນັ່ງກິນເຂົ້າກັບພໍ່ແມ່, ເດັກນ້ອຍອາບນ້ຳ, ຕາເວັນຕົກ, ເດັກນ້ອຍຊ່ວຍແມ່ແຕ່ງກິນ, ເດັກນ້ອຍລ້າງຕີນກ່ອນເຂົ້ານອນ.
2. ບົດຄຳຄ່ອງ ກາງຄືນ ເບິ່ງໃນປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນຕອນກາງເວັນ.
2. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງປະກອບທ່າທາງ, ສົນທະນາກ່ຽວກັບເນື້ອໃນຂອງບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບເວລາກາງຄືນ, ສົນທະນາກ່ຽວກັບຊ່ວງເວລາກາງຄືນ ແລະ ການປະຕິບັດຕົນ.
4. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວການປະຕິບັດໃນເວລາກາງຄືນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນໃນເວລາກາງຄືນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊ່ວງເວລາກາງຄືນ ແລະ ການປະຕິບັດຕົນ.
2. ຄວາມຖືກຕ້ອງໃນການເລົ່າຄຳຄ່ອງປະກອບທ່າທາງ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
4. ປະຕິບັດຕົນໃນເວລາກາງຄືນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສັງເກດຕົວເລກ ແລະ ຈື່ຈຳຕົວເລກຢູ່ໃນໂມງໄດ້ຖືກຕ້ອງ.
2. ບອກຂັ້ນຕອນໃນການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮ້ອຍຈ້ຳໄດ້ຖືກຕ້ອງ.
3. ຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳໃຫ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 3, 5, 7, 9 ໃສ່ຮູບພາບໂມງຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ຢາງລຶບ, ສໍດຳ ຫຼື ສໍສີໄມ້.
2. ເຈ້ຍຮູບພາບໂມງທີ່ມີຕົວເລກ 3, 5, 7, 9 ຕາມຮອຍຈ້ຳ.
3. ຮູບພາບໂມງທີ່ມີຕົວເລກສົມບູນ.
4. ບົດຄຳຄ່ອງ ກາງຄືນ.

### IV. ກິດຈະກຳການຮຽນ-ການສອນ

1 ໃຫ້ເດັກນ້ອຍເລົ່າບົດຄຳຄ່ອງ ລະດູແລ້ງ ປະກອບທ່າທາງ.

2. ໃຫ້ເດັກນ້ອຍສັງເກດຮູບພາບໂມງ, ອ່ານຕົວເລກໃນໂມງຕາມລຳດັບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສົເໜີຜົນງານ ແລະ ເວົ້າຄືນກ່ຽວກັບວິທີການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດໂມງເວລາ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສັງເກດຕົວເລກ ແລະ ຄວາມຈື່ຈຳຕົວເລກຢູ່ໃນໂມງ.
2. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮ້ອຍຈ້ຳ.
3. ຄວາມຖືກຕ້ອງໃນການຂີດຂຽນຕົວເລກໃສ່ຮູບພາບໂມງຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນຫຼັງຕິດກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຫຼັງຕິດກັນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຫຼັງຕິດກັນໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຫຼັງຕິດກັນ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງກາງຄືນ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ກາງຄືນ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຫຼັງຕິດກັນ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຫຼັງຕິດກັນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຫຼັງຕິດກັນ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຕັ້ງໃຈຟັງ, ຄ່ອຍແລ່ນ, ຫຼິ້ນແລ້ວອະນາໄມຕີນ ແລະ ມື ໃຫ້ສະອາດ .
6. ໃຫ້ເດັກນ້ອຍນັ່ງລົງຢຽດຂາຊື່ແລ້ວໃຊ້ມືຄ່ອຍໆລູບຕາມຂາຂຶ້ນ-ລົງຊ້າໆ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຫຼັງຕິດກັນ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຕົວເລກແຕ່ 1-15

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຕົວເລກແຕ່ 1-15 ໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຕົວເລກແຕ່ 1-15: 1, 2, 3, 4, 5, 6, 7, 8, 9, 10, 11, 12, 13, 14, 15.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຕົວເລກແຕ່ 1-15: 1, 2, 3, 4, 5, 6, 7, 8, 9, 10, 11, 12, 13, 14, 15. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍໃສ່ເຄື່ອງປ້ອງກັນຝົນ: ຮູບພາບເດັກນ້ອຍກັ້ງຄັນຮົ່ມ, ເດັກນ້ອຍໃສ່ໝວກ ຫຼື ກຸບ, ເດັກນ້ອຍໃສ່ເສື້ອກັນຝົນ, ເດັກນ້ອຍໃສ່ເກີບໂບກ.
3. ບົດຄຳຄ່ອງ ກາງຄືນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ກາງຄືນ
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຕົວເລກແຕ່ 1-15.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຕົວເລກແຕ່ 1-15.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ ເຄື່ອງຫຼິ້ນແລະ ວິທີຫຼິ້ນຕາມມຸມ.
2. ຂຽນຕົວເລກຕື່ມໃສ່ຮູບພາບໂມງ ແລະ ຈີກຮູບພາບຕາມຮອຍຈ້ຳໄດ້ຖືກຕ້ອງ.
3. ຫຼິ້ນເປັນແມ່, ລູກ, ເປັນອ້າຍ ແລະ ເອື້ອຍຢ່າງມ່ວນຊື່ນ.
4. ເວົ້າຄຳສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ
2. ການຂຽນຕົວເລກຕື່ມໃສ່ຮູບພາບ ໂມງ: 3, 5, 7, 9 ແລະ ຈີກຮູບພາບດວງອາທິດຕາມຮອຍຈ້ຳ.
3. ຫຼິ້ນບົດບາດສົມມຸດ ເປັນແມ່, ລູກຊ່ວຍກັນປຸງແຕ່ງອາຫານ ແລະ ເປັນອ້າຍ ຫຼື ເອື້ອຍກ່ອມນ້ອງນອນ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍຮູບພາບໂມງທີ່ມີຕົວເລກ: 1, 2, 4, 6, 8, 10, 11, 12. ເຈ້ຍຮູບພາບຮອຍຈ້ຳ ດວງອາທິດ.
2. ມຸມບົດບາດສົມມຸດ: ຊຸດເຄື່ອງໃຊ້ຫ້ອງຄົວຂອງຈິງ ຫຼື ຈຳລອງ. ຕຸກກະຕາ ແລະ ເຄື່ອງນອນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ກາງຄືນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ກາງຄືນປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີ ຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຂຽນຕົວເລກຕື່ມໃສ່ຮູບພາບ ແລະ ຈີກຮູບພາບຕາມຮອຍຈ້ຳ
3. ຄວາມມ່ວນຊື່ນໃນການຫຼິ້ນເປັນແມ່, ລູກ, ເປັນອ້າຍ ແລະ ເອື້ອຍ.
4. ການເວົ້າຄຳສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງ ກາງຄືນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ກາງຄືນ.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ກາງຄືນ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າຍົກແຂນຂຶ້ນເທິງຫົວແກ່ວງມືແລະ ທ່າໝູນຫົວເຂົ່າ.
2. ໃຫ້ເດັກນ້ອຍເຕັ້ນຂາດຽວເບື້ອງຊ້າຍ-ເບື້ອງຂວາໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍ່າງໄປ-ມາຕາມສະບາຍ
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ

# ກິດຈະກຳວົງມົນ

## ຫົວຂໍ້: ວັນໃນໜຶ່ງອາທິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ວັນໃນ 1 ອາທິດ ແລະ ກິດຈະກຳໃນມື້ວານ, ມື້ນີ້, ມື້ອື່ນໄດ້ຖືກຕ້ອງ.
2. ບອກຊື່ວັນເຂົ້າຮຽນ ແລະ ວັນພັກຮຽນໄດ້ຖືກຕ້ອງ.
3. ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ຮ້ອງເພງປະກອບທ່າທາງດ້ວຍຄວາມມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ວັນໃນ 1 ອາທິດ ແລະ ກິດຈະກຳໃນມື້ວານ, ມື້ນີ້, ມື້ອື່ນ.
- ຊື່ວັນໃນ 1 ອາທິດ: ວັນອາທິດ, ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ,ວັນສຸກ ແລະ ວັນເສົາ.
- ກິດຈະກຳໃນມື້ນີ້: ສົນທະນາຕົວຈິງ (ມື້ນີ້ເຮັດຫຍັງ?)
- ກິດຈະກຳໃນມື້ວານ: ສົນທະນາຕົວຈິງ (ມື້ວານນີ້ເຮັດຫຍັງ?)
- ກິດຈະກຳໃນມື້ອື່ນ: ສົນທະນາຕົວຈິງ (ມື້ອື່ນຈະເຮັດຫຍັງ?)

2. ການຮ້ອງເພງ ວັນໃນໜຶ່ງອາທິດ ປະກອບທ່າທາງ.
3. ວັນເຂົ້າຮຽນ ແລະ ວັນພັກຮຽນ: ວັນເຂົ້າຮຽນວັນຈັນຫາວັນສຸກ; ວັນພັກຮຽນວັນເສົາຫາວັນອາທິດ.
4. ການເວົ້າເປັນປະໂຫຍກຕາມຮູບພາບ: ມື້ວັນຈັນເດັກນ້ອຍເຄົາລົບທຸງຊາດ, ມື້ວານນີ້ລາວໄປຕະຫຼາດ ກັບແມ່, ວັນເສົາລາວແຕ້ມຮູບ, ວັນອາທິດລາວຢູ່ເຮືອນກັບແມ່.

### III. ສື່ການຮຽນ-ການສອນ

1. ບົດເພງ ວັນໃນໜຶ່ງອາທິດ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບ: ເດັກນ້ອຍລຽນແຖວເຄົາລົບທຸງຊາດ, ເດັກນ້ອຍໄປຕະຫຼາດກັບແມ່, ເດັກນ້ອຍແຕ້ມຮູບ, ເດັກນ້ອຍຢູ່ເຮືອນກັບແມ່.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວັນທີ່ເດັກນ້ອຍມາໂຮງຮຽນປົກກະຕິຕາມທີ່ເດັກນ້ອຍຮູ້ຈັກ.
2. ນາຍຄູພາເດັກນ້ອຍຮ້ອງເພງປະກອບທ່າທາງ, ສົນທະນາກ່ຽວກັບເນື້ອໃນບົດເພງ, ວັນໃນ 1 ອາທິດ ແລະ ວັນພັກຮຽນ.
3. ໃຫ້ເດັກນ້ອຍເວົ້າກ່ຽວກັບກິດຈະກຳໃນມື້ນີ້, ມື້ວານ, ມື້ອື່ນທີ່ເດັກນ້ອຍໄດ້ເຮັດ.
4. ນາຍຄູໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າເປັນປະໂຫຍກຕາມຮູບພາບ.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ວັນໃນໜຶ່ງອາທິດ, ວັນເຂົ້າຮຽນ ແລະ ວັນພັກຮຽນ.
6. ນາຍຄູສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີກັນ ແລະ ຊ່ວຍວຽກພໍ່ແມ່ໃນວັນພັກຮຽນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການ ບອກຊື່ວັນໃນ 1 ອາທິດ ແລະ ກິດຈະກຳໃນມື້ວານ, ມື້ນີ້, ມື້ອື່ນ.
2. ຄວາມຖືກຕ້ອງໃນການບອກຊື່ວັນເຂົ້າຮຽນ ແລະ ວັນພັກຮຽນ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ.
4. ຄວາມມ່ວນຊື່ນໃນການຮ້ອງເພງປະກອບທ່າທາງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍກະດຸມສະຫຼັບສີ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຮ້ອຍກະດຸມສະຫຼັບສີໄດ້ຖືກຕ້ອງ.
2. ຮ້ອຍກະດຸມສະຫຼັບສີໄດ້ຖືກຕ້ອງ.
3. ພັດທະນາແນວຄິດສ້າງສັນໃນການຮ້ອຍກະດຸມສະຫຼັບສີ.

## II. ເນື້ອໃນຕົ້ນຕໍ

ການຮ້ອຍກະດຸມສະຫຼັບສີ: ສີແດງ, ເຫຼືອງ, ຟ້າ.

## III. ສື່ການຮຽນ-ການສອນ

1. ກະດຸມສີແດງ, ເຫຼືອງ ແລະ ຟ້າ.
2. ເຊືອກຟາງ ຫຼື ເສັ້ນດ້າຍ.
3. ກະດຸມທີ່ຮ້ອຍສະຫຼັບສີແລ້ວ.
4. ບົດເພງ ວັນໃນໜຶ່ງອາທິດ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ວັນໃນໜຶ່ງອາທິດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດກະດຸມທີ່ຮ້ອຍສະຫຼັບສີແລ້ວ, ສົນທະນາກ່ຽວກັບສີຂອງກະດຸມ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຮ້ອຍກະດຸມສະຫຼັບສີ.
4. ໃຫ້ເດັກນ້ອຍຮ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ຄືນກ່ຽວກັບວິທີຮ້ອຍກະດຸມສະຫຼັບສີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຮ້ອຍກະດຸມສະຫຼັບສີ.
2. ຄວາມຖືກຕ້ອງຂອງຮ້ອຍກະດຸມສະຫຼັບສີ.
3. ຄວາມຄິດສ້າງສັນໃນການຮ້ອຍກະດຸມສະຫຼັບສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນຕັ່ງວິເສດ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຕັ່ງວິເສດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຕັ່ງວິເສດໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຕັ່ງວິເສດ.

## III. ສື່ການຮຽນ-ການສອນ

1. ບົດເພງ ວັນໃນໜຶ່ງອາທິດ.
2. ບັດຄຳ, ຕັ່ງ ແລະ ກອງ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງ ວັນໃນໜຶ່ງອາທິດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນຕັ່ງວິເສດ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຕັ່ງວິເສດ, ນາຍຄູຕິດຕາມ ແລະ ຊ່ວຍ ແນະນຳ.
4. ໃຫ້ດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຕັ່ງວິເສດ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຕັ້ງໃຈຟັງ ແລະ ປະຕິບັດຕາມຄຳສັ່ງລະວັງ ບໍ່ແລ່ນຕຳກັນລົ້ມ, ຫຼິ້ນແລ້ວອະນາໄມຕົນ ແລະ ມືໃຫ້ສະອາດ .
6. ໃຫ້ເດັກເຮັດທ່າທາງນົກບິນປີກຂຶ້ນ-ລົງ ຊ້າໆ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຕັ່ງວິເສດ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ: ວັນອາທິດກັບສີແດງ, ວັນຈັນກັບສີເຫຼືອງ, ວັນອັງຄານກັບສີບົວ, ວັນພຸດກັບສີຂຽວ, ວັນພະຫັດກັບສີແສດ (ສີນ້ຳໝາກກ້ຽງ), ວັນສຸກກັບສີຟ້າ, ວັນເສົາກັບສີມ່ວງ (ສຳລັບນາຍຄູ ແລະ ເດັກນ້ອຍ).

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ: ແຜ່ນເກມຊື່ວັນ: ວັນອາທິດ, ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ, ສວັນສຸກ, ວັນເສົາ: ແຜ່ນເກມສີ: ສີແດງ, ສີເຫຼືອງ, ສີບົວ, ສີຂຽວ, ສີແສດ (ນ້ຳໝາກກ້ຽງ), ສີຟ້າ, ສີມ່ວງ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຕົວເລກ ແຕ່ 1-15
3. ບົດເພງ ວັນໃນໜຶ່ງອາທິດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ວັນໃນໜຶ່ງອາທິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ ແລະ ຈັບຄູ່ທີ່ຄືກັນຕົວເລກແຕ່ 1-15 ໄດ້ຖືກຕ້ອງ.
3. ພິມຝ່າມື ແລະ ຂຽນສະຫຼະໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
2. ການຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ: ວັນອາທິດກັບສີແດງ, ວັນຈັນກັບສີເຫຼືອງ, ວັນອັງຄານ ກັບສີບົວ, ວັນພຸດກັບສີຂຽວ, ວັນພະຫັດກັບສີແສດ (ສີນ້ຳໝາກກ້ຽງ), ວັນສຸກກັບສີຟ້າ, ວັນເສົາກັບສີມ່ວງ ແລະ ການຈັບຄູ່ທີ່ຄືກັນຕົວເລກແຕ່ 1-15.
3. ການພິມຝ່າມືໃສ່ອ່າງດິນຊາຍ ແລະ ຂຽນສະຫຼະ ×ະ ×າ ×ິ ×ູ ×ີ ×ິ ໃສ່ອ່າງດິນຊາຍ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ: ແຜ່ນເກມຊື່ວັນ: ວັນອາທິດ, ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ, ວັນສຸກ, ວັນເສົາ ແລະ ແຜ່ນເກມສີ: ສີແດງ, ສີເຫຼືອງ, ສີບົວ, ສີຂຽວ, ສີແສດ (ສີນ້ຳໝາກກ້ຽງ), ສີຟ້າ, ສີມ່ວງ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຕົວເລກແຕ່ 1-15.
2. ມຸມເຄື່ອງຫຼິ້ນສຳຜັດ: ກະດານສຽບ ຫຼື ຕິດ, ອ່າງດິນຊາຍ, ເສື້ອກັນເປື້ອນ, ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.
4. ບົດເພງ ວັນໃນໜຶ່ງອາທິດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ວັນໃນໜຶ່ງອາທິດ ປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ ແລະ ຈັບຄູ່ທີ່ຄືກັນຕົວເລກແຕ່ 1-15.
3. ຄວາມຖືກຕ້ອງໃນການພິມຝ່າມື ແລະ ຂຽນສະຫຼະໃສ່ອ່າງດິນຊາຍ.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ວັນໃນໜຶ່ງອາທິດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ວັນໃນໜຶ່ງອາທິດ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດເພງ ວັນໃນໜຶ່ງອາທິດ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າແຂນຂວາໂຄ້ງໄປທາງຊ້າຍ, ແຂນຊ້າຍໂຄ້ງໄປທາງຂວາ ແລະ ທ່າຢ່ຳເທົ້າ.
2. ໃຫ້ເດັກນ້ອຍໂດດຢຽບເສັ້ນເຊືອກໄລຍະຫ່າງ 20-50 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາເອົາມືທັງສອງຄຶ່ມພື້ນທັງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເດືອນໃນໜຶ່ງປີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເດືອນໃນ 1 ປີ, ເດືອນທີ່ເຂົ້າຮຽນ, ເດືອນພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
3. ນັບຊື່ເດືອນໃນໜຶ່ງປີໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ເດືອນໃນ 1 ປີ, ເດືອນທີ່ເຂົ້າຮຽນ, ພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນ.
- ຊື່ເດືອນໃນ 1 ປີ: ປີໜຶ່ງມີ 12 ເດືອນ: ເດືອນມັງກອນ, ເດືອນກຸມພາ, ເດືອນມີນາ, ເດືອນເມສາ, ເດືອນພຶດສະພາ, ເດືອນມິຖຸນາ, ເດືອນກໍລະກົດ, ເດືອນສິງຫາ, ເດືອນກັນຍາ, ເດືອນຕຸລາ, ເດືອນພະຈິກ ແລະ ເດືອນທັນວາ.
- ເດືອນທີ່ເຂົ້າຮຽນ ແລະ ພັກຮຽນ: ເດືອນທີ່ເຂົ້າຮຽນແມ່ນເດືອນກັນຍາຫາເດືອນມິຖຸນາ; ເດືອນທີ່ພັກຮຽນແມ່ນ ເດືອນກໍລະກົດ ຫາ ເດືອນສິງຫາ.
- ກິດຈະກຳໃນເວລາພັກພາກຮຽນ: ພັກຜ່ອນຢູ່ເຮືອນ, ໄປທ່ຽວຫຼິ້ນກັບພໍ່ ແມ່, ອ້າຍ, ເອື້ອຍ, ນ້ອງ.

2. ການເລົ່າຄຳຄ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ, ເວົ້າເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ: ເດືອນກັນຍາເລີ່ມເຂົ້າໂຮງຮຽນ, ຂ້ອຍພາກພຽນໄປຮຽນບໍ່ຂາດ, ຂ້ອຍສາມາດຮຽນໄດ້ຫຼາຍຢ່າງ, ຄູເພິ່ນຊ່າງອົບຮົມສັ່ງສອນ, ຄູນຳພາຮ້ອງເພງ ແລະ ຟ້ອນ, ເດືອນສິງຫາຂ້ອຍພັກໂຮງຮຽນ.
3. ນັບຊື່ເດືອນໃນໜຶ່ງປີ:

1. ມັງກອນ, 2. ກຸມພາ, 3. ມີນາ, 4. ເມສາ, 5. ພຶດສະພາ, 6. ມິຖຸນາ 7. ກໍລະກົດ, 8. ສິງຫາ, 9. ກັນຍາ, 10. ຕຸລາ, 11. ພະຈິກ, 12. ທັນວາ.

### III. ສື່ການຮຽນ-ການສອນ

ປະຕິທິນເດືອນໃນ 1 ປີ; ບົດຄຳຄ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ ເບິ່ງໃນປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບວັນໃນ 1 ອາທິດ.
2. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດປະຕິທິນເດືອນໃນ 1 ປີ, ສົນທະນາກ່ຽວກັບເດືອນໃນ 1 ປີ, ເດືອນເຂົ້າຮຽນ, ເດືອນພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນ.
4. ນາຍຄູພາເດັກນ້ອຍນັບຊື່ເດືອນໃນໜຶ່ງປີ.
5. ໃຫ້ເດັກເວົ້າຄືນຊື່ເດືອນໃນ 1 ປີ ແລະ ກິດຈະກຳໃນເວລາພັກພາກຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມດຸໝັ່ນໃນການມາໂຮງຮຽນ ແລະ ຊ່ວຍວຽກພໍ່ແມ່ໃນເວລາພັກຮຽນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເດືອນໃນ 1 ປີ, ເດືອນທີ່ເຂົ້າຮຽນ, ພັກຮຽນ ແລະ ກິດຈະກຳໃນເວລາພັກພາກຮຽນ.
2. ຄວາມຖືກຕ້ອງໃນການນັບຊື່ເດືອນໃນໜຶ່ງປີໄດ້.
3. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
4. ການປະຕິບັດຕົນໃນຍາມພັກໂຮງຮຽນ ແລະ ເຂົ້າຮຽນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການໄດ້ຖືກຕ້ອງ.
2. ເປົ່າສີເປັນຮູບພາບຕາມຈິນຕະນາການໃຫ້ສະອາດຈົບງາມ.
3. ລະມັດລະວັງໃນເວລາເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ

### II. ເນື້ອໃນຕົ້ນຕໍ

ເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ສີນ້ຳ, ທໍ່ດູດ.
2. ເຈ້ຍແບບຮູບທີ່ເປົ່າສີແລ້ວ.
3. ບົດຄຳຄ່ອງ ເຄືອນເຂົ້າຮຽນ ແລະ ເຄືອນພັກຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າບົດຄຳຄ່ອງ ເຄືອນເຂົ້າຮຽນ ແລະ ເຄືອນພັກຮຽນ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດເຈ້ຍຮູບທີ່ເປົ່າສີແລ້ວ, ສົນທະນາກ່ຽວກັບຊື່ຮູບພາບໃນແຜ່ນເຈ້ຍ ແລະ ຂັ້ນຕອນການເປົ່າສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມລະມັດລະວັງໃນເວາໃຊ້ນ້ຳສີ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການເປົ່າສີໃຫ້ເປັນຮູບພາບຕ່າງໆຕາມຈິນຕະນາການ.
2. ຄວາມສະອາດຈົບງາມຂອງການເປົ່າສີເປັນຮູບພາບຕາມຈິນຕະນາການ.
3. ຄວາມລະມັດລະວັງໃນເວລາເປົ່າສີເປັນຮູບຕ່າງໆຕາມຈິນຕະນາການ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຍ່າງສາມຂາ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາໄດ້ຖືກຕ້ອງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ.

## III. ສື່ການຮຽນ-ການສອນ

1. ໝາກຫວີດ, ຜ້າຂາວມ້າ, ເຊືອກ, ໄມ້ສຳລັບຂີດເສັ້ນ, ກະແຊັກ ແລະ ກອງ.
2. ບົດຄຳຄ່ອງ ເຕືອນເຂົ້າຮຽນ ແລະ ເຕືອນພັກຮຽນ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເຕືອນເຂົ້າຮຽນ ແລະ ເຕືອນພັກຮຽນ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງຍ່າງບໍ່ໃຫ້ລົ້ມ, ຫຼິ້ນແລ້ວອະນາໄມຕີນ ແລະ ມື ໃຫ້ສະອາດ.
6. ໃຫ້ເດັກນ້ອຍວາແຂນ ແລະ ພັບແຂນເຂົ້າຊ້າໆ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຍ່າງສາມຂາ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຊື່ເດືອນກັບຕົວເລກ 1-12

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຮູບພາບ ແລະ ຕົວເລກທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຊື່ເດືອນກັບຕົວເລກ 1-12 ໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນ

ການຈັບຄູ່ຊື່ເດືອນກັບຕົວເລກ 1-12: ມັງກອນ (ໜຶ່ງ) ກັບຕົວເລກ 1, ກຸມພາ (ສອງ) ກັບຕົວເລກ 2, ມີນາ (ສາມ) ກັບຕົວເລກ 3, ເມສາ (ສີ່) ກັບຕົວເລກ 4, ພຶດສະພາ (ຫ້າ)ກັບຕົວເລກ 5, ມິຖຸນາ (ຫົກ) ກັບຕົວເລກ 6, ກໍລະກົດ(ເຈັດ) ກັບຕົວເລກ 7, ສິງຫາ (ແປດ) ກັບຕົວເລກ 8, ກັນຍາ (ເກົ້າ) ກັບຕົວເລກ 9, ຕຸລາ (ສິບ) ກັບຕົວເລກ 10, ພະຈິກ (ສິບເອັດ) ກັບຕົວເລກ 11, ທັນວາ (ສິບສອງ) ກັບຕົວເລກ 12.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຊື່ເດືອນກັບຕົວເລກ 1-12: ແຜ່ນເກມຊື່ເດືອນ ມັງກອນ (ໜຶ່ງ), ກຸມພາ (ສອງ), ມີນາ (ສາມ), ເມສາ (ສີ່), ພຶດສະພາ (ຫ້າ), ມິຖຸນາ (ຫົກ), ກໍລະກົດ(ເຈັດ), ສິງຫາ (ແປດ), ກັນຍາ (ເກົ້າ), ຕຸລາ (ສິບ) 11 ພະຈິກ (ສິບເອັດ), 12 ທັນວາ (ສິບສອງ), ແຜ່ນເກມຕົວເລກ: 1, 2, 3, 4, 5, 6, 7, 8, 9, 10, 11, 12 (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຊື່ວັນກັບສີປະຈຳວັນໃນໜຶ່ງອາທິດ: ແຜ່ນເກມຊື່ວັນ: ວັນອາທິດ, ວັນຈັນ, ວັນອັງຄານ, ວັນພຸດ, ວັນພະຫັດ, ວັນສຸກ, ວັນເສົາ; ແຜ່ນເກມສີ: ສີແດງດ ສີເຫຼືອງ, ສີບົວດ ສີຂຽວ, ສີແສດ (ນ້ຳໝາກກ້ຽງ, ສີຟ້າ, ສີມ່ວງ.
3. ບົດຄຳຄ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຮູບພາບ ແລະ ຕົວເລກທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຮູບພາບດ ຕົວເລກ ແລະ ການຫຼິ້ນເກມຈັບຄູ່ຊື່ເດືອນກັບຕົວເລກ 1-12
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຮູບພາບ ແລະ ຕົວເລກທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຊື່ເດືອນກັບຕົວເລກ 1-12.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຊື່ເດືອນໃນໜຶ່ງປີ, ອ່ານອອກສຽງຄຳສັບທີ່ມີສະຫຼະ ຊ ຊ ຕາມຕາຕະລາງໄດ້ຢ່າງຊັດເຈນ.
3. ເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ ແລະ ຮ້ອຍກະດຸມສະຫຼັບກັນຕາມສີໃຫ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ
2. ການສັງເກດ ແລະ ອ່ານຊື່ເດືອນໃນໜຶ່ງປີ: 1ມັງກອນ, 2 ກຸມພາ, 3 ມີນາ, 4 ເມສາ, 5 ພຶດສະພາ, 6 ມິຖຸນາ 7 ກໍລະກົດ, 8 ສິງຫາ, 9 ກັນ ຍາ, 10 ຕຸລາ, 11 ພະຈິກ, 12 ທັນວາ ແລະ ອ່ານອອກສຽງຄຳສັບທີ່ມີ ສະຫຼະ ຊ ຊ ຕາມຕາຕະລາງໃນປຶ້ມບົດຝຶກຫັດພາສາລາວ.
3. ການເປົ່າສີໃຫ້ເປັນຮູບພາບຕ່າງໆ ຕາມຈິນຕະນາການ ແລະ ຮ້ອຍກະດຸມສະຫຼັບກັນຕາມສີ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ. ບັດຄຳສັບຊື່ເດືອນໃນໜຶ່ງປີ 1 ມັງກອນ, 2 ກຸມພາ, 3 ມີນາ, 4 ເມສາ, 5 ພຶດສະພາ, 6 ມິຖຸນາ 7 ກໍລະກົດ, 8 ສິງຫາ, 9 ກັນຍາ, 10 ຕຸລາ, 11ພະຈິກ ແລະ 12 ທັນວາ. ປຶ້ມບົດຝຶກຫັດພາສາລາວເຫຼັ້ມ 2 (ໜ້າ 9).
2. ມຸມສິລະປະສ້າງສັນ: ສີນ້ຳ, ທໍ່ດູດ ຫຼື ໄມ້ປ່ອງ. ເຈ້ຍຂາວ. ເສື້ອກັນເປື້ອນ, ຊາມນ້ຳ, ສະບູ, ຜ້າເຊັດມື. ກະດຸມເສື້ອສີແດງ, ເຫຼືອງ, ຟ້າ, ເຊືອກສຳລັບຮ້ອຍ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການຊື່ເດືອນໃນໜຶ່ງປີ, ອ່ານອອກສຽງຄຳສັບທີ່ມີສະຫຼະ ຊ ຊ ຕາມຕາຕະລາງ
3. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບດວງອາທິດແຕ່ນ້ອຍຫາໃຫຍ່ ແລະ ຕໍ່ຮູບພາບເດັກນ້ອຍຫົດນ້ຳຕົ້ນໄມ້
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບອາທິດທີ 4

## ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ, ເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
3. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
4. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
5. ມ່ວນຊື່ນໃນເວລາສະແດງທ່າທາງ.
6. ປອດໄພໃນເວລາສະແດງທ່າທາງ.
7. ເວົ້າຄຳສຸພາບກັບໝູ່ເພື່ອນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລະດູການ ແລະ ລັກສະນະອາກາດໃນລະດູແລ້ງ ແລະ ລະດູຝົນໃນປະເທດລາວໄດ້ຖືກຕ້ອງ.
2. ເວົ້າເປັນປະໂຫຍກໄດ້ຊັດເຈນ.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ, ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ, ຮູບພາບໄດ້ຊັດເຈນ.
4. ບອກຄຸນປະໂຫຍດ, ຜົນສະທ້ອນຂອງລະດູຝົນ ແລະ ລະດູແລ້ງໄດ້ຖືກຕ້ອງ.
5. ປະຕິບັດຕົນໃນລະດູແລ້ງ.
6. ບອກການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນໄດ້ຖືກຕ້ອງ.
7. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
8. ປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ, ການຂີດຂຽນຕົວເລກອາຣັບແຕ່ 0-9 ຕາມ ຮອຍຈໍ້າ, ການຈີກ-ຕິດຮູບພາບຕົ້ນໄມ້ ແລະ ການຕັດ-ຕິດຮູບພາບເສື້ອກັນໜາວໄດ້ຖືກຕ້ອງ.
2. ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກໃຫ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ
4. ຂີດຂຽນຕົວເລກ 14 ຕາມຮອຍຈໍ້າໃຫ້ສະອາດຈົບງາມ.
5. ມີຄວາມອົດທົນໃນການຂຽນຕົວເລກ 14 ຕາມຮອຍຈໍ້າ, ການຂີດຂຽນສະຫຼະ ູ ຕາມຄຳສັບໃຫ້ສຳເລັດ.
6. ຈີກ-ຕິດຮູບພາບຕົ້ນໄມ້, ຂີດຂຽນສະຫຼະ ູ ຕາມຄຳສັບ ຕັດ-ຕິດຮູບພາບ ເສື້ອກັນໜາວໃຫ້ສະອາດຈົບງາມ.
7. ເຝິກສາມະທິໃນການຈີກ-ຕິດຮູບພາບຕົ້ນໄມ້.
8. ບອກທິດທາງ ແລະ ຂຽນສະຫຼະ ູ ຕາມຄຳສັບ.
9. ມີຄວາມລະມັດລະວັງໃນເວລາໃຊ້ມີດຕັດ ແລະ ກາວ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍ ສາມາດ:

1. ການບອກຂັ້ນຕອນ ແລະ ກາຕິກາການຫຼິ້ນແບບຫຼິ້ນເສືອໄລ່ໝູ, ຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າ, ຫຼິ້ນຊາຍ: ຮ່ອນດິນຊາຍ, ການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ ແລະ ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.
2. ຫຼິ້ນແບບຫຼິ້ນເສືອໄລ່ໝູ, ຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຜອງຊາຍ ແລະ ການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ ແລະ ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ, ຈັບຄູ່ທີ່ຄືກັບຮູບພາບຄຸນປະໂຫຍດຂອງລະດູຝົນໄດ້ຖືກຕ້ອງ.
3. ລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກໄດ້ຖືກຕ້ອງ.
4. ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວໄດ້ຖືກຕ້ອງ.
5. ຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບໄດ້ຖືກຕ້ອງ.
6. ເກັບມ້ຽນແຜ່ນເກມ
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

8. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຂຽນສະຫຼະ: xາ, xິ, xີ, xະ ຕາມແບບ, ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ, ເປົ້າສີເປັນຮູບພາບຕ່າງໆຕາມຈິນຕະນາການ, ຂຽນຕົວເລກອາຣັບແຕ່ 0-9, ຕັດຕິດຮູບເສື້ອກັນໜາວໄດ້ຖືກຕ້ອງ.
3. ອ່ານຕາມຮູບພາບໃນປຶ້ມ ນິທານ, ເວົ້າເປັນຄຳສັບຕາມຮູບພາບ ແລະ ເປັນປະໂຫຍກຕາມຮູບພາບ, ອ່ານຕົວເລກໃນໃບເງິນກີບໄດ້ຊັດເຈນ.
4. ຫຼິ້ນບົດບາດສົມມຸດເປັນຊາວນາ, ຊາວສວນ, ຫຼິ້ນເປັນຕົວລະຄອນໃນບົດເລື່ອງນິທານ, ເປັນທ່ານໝໍນ້ອຍຢ່າງມ່ວນຊື່ນ.
5. ຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ, ຈັບຄູ່ຊື່ເດືອນກັບຕົວເລກ 1-12, ລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ, ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນໄດ້ຖືກຕ້ອງ.
6. ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນຖົ່ວ ແລະ ຜັກບົ່ງ, ທົດນ້ຳ, ທົດລອງຊັກຜ້າເຊັດໜ້າໄດ້ຖືກຕ້ອງ.
7. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
8. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
9. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
10. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.
11. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ຝົນຕົກແລ່ນເຂົ້າເຮືອນ, ແດດຮ້ອນກັ້ງຄັນຮົ່ມ, ອາກາດໜາວຫົ່ມເສື້ອກັນໜາວ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແຂນ: ທ່າໝູນຫົວເຂົ່າ ແລະ ທ່າເບີດແຂນໄປເບື້ອງຊ້າຍ-ເບື້ອງ ຂວາ.
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ຂຶ້ນ-ລົງ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຮັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ລະດູການໃນປະເທດລາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລະດູການໃນປະເທດລາວໄດ້ຖືກຕ້ອງ.
2. ເວົ້າເປັນປະໂຫຍກໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ລະດູການໃນປະເທດລາວມີ 2 ລະດູ: ລະດູແລ້ງ ແລະ ລະດູຝົນ.
- ລະດູແລ້ງ: ເລີ່ມແຕ່ເດືອນພະຈິກ ຫາເດືອນເມສາ.
- ລະດູຝົນ: ເລີ່ມແຕ່ເດືອນພຶດສະພາ ຫາ ເດືອນຕຸລາ.
2. ການເວົ້າເປັນປະໂຫຍກ: ລະດູແລ້ງເລີ້ມແຕ່ເດືອນພະຈິກຫາເດືອນເມສາ, ລະດູຝົນເລີ່ມແຕ່ເດືອນພຶດສະພາ ຫາເດືອນຕຸລາ.

### III. ສື່ການຮຽນ-ການສອນ

ແຜນວາດລະດູການ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເດືອນເຂົ້າຮຽນ ແລະ ເດືອນພັກຮຽນ.
2. ໃຫ້ເດັກນ້ອຍສັງເກດແຜນວາດລະດູການ, ສົນທະນາກ່ຽວກັບລະດູການໃນປະເທດລາວ, ໄລຍະຂອງລະດູແລ້ງ ແລະ ລະດູຝົນ.
3. ນາຍຄູພາເດັກນ້ອຍເວົ້າເປັນປະໂຫຍກ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບລະດູການໃນປະເທດລາວ, ໄລຍະຂອງລະດູແລ້ງ ແລະ ລະດູຝົນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນໃນແຕ່ລະລະດູການ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລະດູການໃນປະເທດລາວ.
2. ຄວາມຊັດເຈນໃນການເວົ້າເປັນປະໂຫຍກ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມໄດ້ຖືກຕ້ອງ.
2. ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກໃຫ້ຈົບງາມ ແລະ ຢູ່ໃນຂອບ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກ.

### III. ສື່ການຮຽນ-ການສອນ

1. ເຈ້ຍຮູບພາບເດັກນ້ອຍກັ້ງຄັນຮົ່ມໃນເວລາຝົນຕົກ, ເຈ້ຍຮູບພາບເດັກນ້ອຍກັ້ງຄັນຮົ່ມທີ່ທາສີແລ້ວ
2. ສໍສີໄມ້ ຫຼື ສີທຽນ.
3. ບົດຄຳຄ່ອງ ກາງຄືນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າບົດຄຳຄ່ອງ ກາງຄືນ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບເດັກນ້ອຍກັ້ງຄັນຮົ່ມທີ່ທາສີແລ້ວ, ສົນທະນາກ່ຽວກັບຮູບຮ່າງຂອງຄັນຮົ່ມ ແລະ ຂັ້ນຕອນການທາສີຮູບຄັກຮົ່ມ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ.
6. ສຶກສາອົບຮົມເດັກກ່ຽວກັບຄວາມອົດທົນ ແລະ ການແບ່ງປັນເຄື່ອງໃຊ້ໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນໃນການທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມ.
2. ຄວາມຈົບງາມ ແລະ ຢູ່ໃນຂອບຂອງຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນເສືອໄລ່ໝູ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນເສືອໄລ່ໝູໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເສືອໄລ່ໝູໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນເສືອໄລ່ໝູ.

## III. ສື່ການຮຽນ-ການສອນ

1. ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).
3. ຄຳຄ່ອງ ເສືອໄລ່ໝູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໝູນເອົ່າ, ບິວແອວ ແລະ ຍ່າງຊ້າໆ ຕາມສຽງຕົບມື.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນເສືອໄລ່ໝູ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນເສືອໄລ່ໝູ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນເສືອໄລ່ໝູ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຄ່ອຍແລ່ນບໍ່ໃຫ້ຕຳກັນກັບໝູ່, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍນັ່ງສາມະທິຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນເສືອໄລ່ໝູ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ: ເສື້ອແຂນຍາວ, ເສື້ອກັນໜາວ, ໝວກ, ເກີບ, ຖົງມື, ຖົງຕີນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ: ເສື້ອແຂນຍາວ, ເສື້ອກັນໜາວ, ໝວກ, ເກີບ, ຖົງມື, ຖົງຕີນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຊື່ເດືອນກັບຕົວເລກ 1-12.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລະດູການໃນປະເທດລາວ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຄ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ..

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ທາສີຮູບພາບ, ເປົ່າສີເປັນຮູບພາບຕາມຈິນຕະນາການ
3. ຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ ແລະ ຈັບຄູ່ທີ່ຄືກັນຊື່ເດືອນກັບຕົວເລກ 1-12 ໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ
2. ທາສີຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກ ແລະ ເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການ
3. ການຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ: ເສື້ອແຂນຍາວ, ເສື້ອກັນໜາວ, ໝວກ, ເກີບ, ຖົງມື, ຖົງຕີນ ແລະ ຈັບຄູ່ຊື່ເດືອນກັບຕົວເລກ 1-12: ມັງກອນ (ໜຶ່ງ) ກັບຕົວເລກ 1, ກຸມພາ (ສອງ) ກັບຕົວເລກ 2, ມີນາ (ສາມ) ກັບຕົວເລກ 3, ເມສາ (ສີ່) ກັບຕົວເລກ 4, ພຶດສະພາ (ຫ້າ)ກັບຕົວເລກ 5, ມິຖຸນາ (ຫົກ) ກັບຕົວເລກ 6, ກໍລະກົດ(ເຈັດ) ກັບຕົວເລກ 7, ສິງຫາ (ແປດ) ກັບຕົວເລກ 8, ກັນຍາ (ເກົ້າ) ກັບຕົວເລກ 9, ຕຸລາ (ສິບ) ກັບຕົວເລກ 10, ພະຈິກ (ສິບເອັດ) ກັບຕົວເລກ 11, ທັນວາ (ສິບສອງ) ກັບຕົວເລກ 12.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ກະດານສຽບ ຫຼື ຕິດ, ສໍສີໄມ້ ຫຼື ສີທຽນ. ເຈ້ຍຮູບພາບເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກ. ເຈ້ຍສີ, ສີນ້ຳ, ທໍ່ດູດ
2. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ: ເສື້ອແຂນຍາວ, ເສື້ອກັນໜາວ, ໝວກ, ເກີບ, ຖົງມື, ຖົງຕີນ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຊື່ເດືອນກັບຕົວເລກ 1-12
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລະດູການໃນປະເທດລາວມີ 2 ລະດູ.
2. ນາຍຄູແນະນຳວິທີຫຼິ້ນ,ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍໃນການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການທາສີຮູບພາບ, ເປົ່າສີເປັນຮູບພາບຕາມຈິນຕະນາການ
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງປ້ອງກັນອາກາດໜາວ ແລະ ຈັບຄູ່ທີ່ຄືກັນຊື່ເດືອນກັບຕົວເລກ 1-12.
4. ການເກັບມ້ຽນເຄື່ອງຫຼິ້ນໄວ້ຖືກບ່ອນທີ່ກຳນົດ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດລຳລ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ເດືອນເຂົ້າຮຽນ ແລະ ເດືອນພັກຮຽນ.
2. ທ່າຫັດກາຍະບໍລິຫານແອວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານ ແອວ ແລະ ຂາ: ທ່າຫງ່ຽງແອວອ້າງຊ້າຍ-ຂວາ ແລະ ທ່າຢືນຂາດຽວຍົກຂາຂຶ້ນທາງໜ້າເອົາມືສອງເບື້ອງຈັບໄວ້.
2. ໃຫ້ເດັກນ້ອຍຍ່າງໄປທາງໜ້າ-ຖອຍຫຼັງ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກໍາວົງມົນ

## ຫົວຂໍ້: ລັກສະນະອາກາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລັກສະນະອາກາດໃນລະດູແລ້ງ ແລະ ລະດູຝົນໄດ້ຖືກຕ້ອງ.
2. ເລົ່າຄໍາຄ່ອງ, ເວົ້າເປັນຄໍາສັບ ແລະ ເປັນປະໂຫຍກຕາມເນື້ອໃນຄໍາຄ່ອງໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ລັກສະນະຂອງອາກາດ

- ລັກສະນະຂອງອາກາດໃນລະດູແລ້ງ: ໃນລະຫວ່າງເດືອນພະຈິກ ຫາ ເດືອນກຸມພາອາກາດໜາວເຢັນ, ບາງຄັ້ງມີນໍ້າໝອກ, ມີລົມພັດ; ໃນລະຫວ່າງເດືອນມີນາ ຫາ ເດືອນເມສາອາກາດຮ້ອນອົບເອົ້າ, ແດດກ້າ ແລະ ບາງຄັ້ງອາດມີລົມພາຍຸ.
- ລັກສະນະຂອງອາກາດໃນລະດູຝົນ: ໃນລະດູຝົນອາກາດຈະຊຸ່ມຊື່ນດີ; ກ່ອນຝົນຈະຕົກທ້ອງຟ້າມືດເຕັມໄປດ້ວຍກ້ອນຂີ້ເຝື້ອ, ມີລົມພັດແຮງ, ມີຟ້າຮ້ອງຟ້າແມບເຫຼື້ອມ ແລະ ມີຝົນຕົກລົງມາ.

2. ການເລົ່າຄໍາຄ່ອງ ລັກສະນະອາກາດ, ເວົ້າເປັນຄໍາສັບ ແລະ ເປັນປະໂຫຍກຕາມເນື້ອໃນຄໍາຄ່ອງ.

- ຄໍາສັບ: ເດືອນພະຈິກ, ເດືອນກຸມພາ, ລົມ, ອາກາດ, ໜາວເຢັນ, ນໍ້າໝອກ, ເດືອນເມສາ, ຮ້ອນເອົ້າ, ແດດກ້າ, ລົມພາຍຸ, ທ້ອງຟ້າ, ຂີ້ເຝື້ອ, ຝົນ, ຊຸ່ມຊື່ນ.
- ປະໂຫຍກ: ລົມພະຍຸພັດແຮງ, ເດືອນເມສາອາກາດຮ້ອນອົບເອົ້າ, ບາງຄັ້ງມີນໍ້າໝອກຕົກມາ, ເດືອນກຸມພາອາກາດໜາວເຢັນ, ກ່ອນຝົນຈະຕົກທ້ອງຟ້າມືດ, ຝົນຕົກໃສ່ທົ່ງນາ.

### III. ສື່ການຮຽນ-ການສອນ

ບົດຄໍາຄ່ອງ ລັກສະນະອາກາດ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລະດູການໃນປະເທດລາວ.
2. ນາຍຄູພາເດັກນ້ອຍເລົ່າຄໍາຄ່ອງ, ສົນທະນາ, ເວົ້າເປັນຄໍາສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄໍາຄ່ອງ.
3. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລັກສະນະອາກາດໃນລະດູແລ້ງ ແລະ ລະດູຝົນ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບລັກສະນະອາກາດໃນລະດູແລ້ງໃນລະຫວ່າງເດືອນພະຈິກ ຫາ ເດືອນກຸມພາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດຕົນໃນແຕ່ລະລະດູການ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລັກສະນະອາກາດໃນລະດູແລ້ງ ແລະ ລະດູຝົນ.
2. ຄວາມຊັດເຈນໃນການເລົ່າຄໍາຄ່ອງ, ເວົ້າເປັນຄໍາສັບ ແລະ ເປັນປະໂຫຍກຕາມເນື້ອໃນຄໍາຄ່ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ 14 ຕາມຮອຍຈ້ຳ

### I. ຈຸດປະສົງ

ຈຸດປະສົງເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຂີດຂຽນຕົວເລກ 14 ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ 14 ຕາມຮອຍຈ້ຳໃຫ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂຽນຕົວເລກ 14 ຕາມຮອຍຈ້ຳໃຫ້ສຳເລັດ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກ 14 ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ປື້ມບົດເຝິກຫັດຄະນິດສາດເຫຼັ້ມ 1 (ໜ້າ 14) ຫຼື ເຈ້ຍຕົວເລກ 14 ທີ່ມີຮອຍຈ້ຳ, ເຈ້ຍຕົວເລກ14 ທີ່ຂຽນແລ້ວ.
2. ຢາງລຶບ, ສໍດຳ ຫຼື ສໍສີໄມ້.
3. ບົດຄຳຄ່ອງ ລັກສະນະອາກາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າບົດຄຳຄ່ອງ ລັກສະນະອາກາດ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຕົວເລກແລ້ວອ່ານຕົວເລກ 14.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກ 14 ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການຂີດຂຽນຕົວເລກ 14 ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 14 ຕາມຮອຍຈ້ຳ.
2. ຄວາມສະອາດຈົບງາມຂອງການຂີດຂຽນຕົວເລກ 14 ຕາມຮອຍຈ້ຳ.
3. ຄວາມອົດທົນໃນການຂຽນຕົວເລກ 14 ຕາມຮອຍຈ້ຳໃຫ້ສຳເລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລັກສະນະອາກາດ.
2. ຢາງບ້ວງ ແລະ ໝາກປຸມເປົ້າ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລັກສະນະອາກາດ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າ, ນາຍຄູຕິດຕາມ ແລະ ຊ່ວຍ ແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ຍາດກັນຢຽບ, ມີຄວາມອົດທົນ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຢືນເອົາມືຄ້ຳແອວແລ້ວຫາຍໃຈເຂົ້າ-ອອກຊ້າໆ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນກັບຢຽບໝາກປຸມເປົ້າ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກໄດ້ຖືກຕ້ອງ.
3. ເກັບມ້ຽນແຜ່ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ: ຮູບພາບທ້ອງຟ້າມືດ, ຟ້າເຫຼື້ອມ, ລົມພັດ, ຝົນຕົກ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຮູບພາບທ້ອງຟ້າມືດ, ຟ້າເຫຼື້ອມ, ລົມພັດ, ຝົນຕົກ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບ: ເສື້ອແຂນຍາວ, ເສື້ອກັນໜາວ, ໝວກ, ເກີບ, ຖົງມື, ຖົງຕີນ.
3. ບົດຄຳຄ່ອງ ລັກສະນະອາກາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລັກສະນະອາກາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ເກັບມ້ຽນແຜ່ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ.
3. ເກັບມ້ຽນແຜ່ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ທົດລອງຊັກ ແລະ ຕາກຜ້າເຊັດໜ້າ, ສັງເກດການເຕີບໃຫຍ່ຂອງຕົ້ນໝາກຖົ່ວ, ຜັກບົ້ງ ແລະ ຫົດນ້ຳໄດ້ຖືກຕ້ອງ.
3. ຂຽນຕົວເລກອາຣັບແຕ່ 0-9 ຕາມແບບ ແລະ ທາສີຮູບພາບໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມວິທະຍາສາດທຳມະຊາດ ແລະ ມຸມສິລະປະສ້າງສັນ
2. ການສັງເກດ ແລະ ທົດລອງຊັກຜ້າເຊັດໜ້າຕາກແດດ. ສັງເກດການເຕີບໃຫຍ່ຂອງຕົ້ນໝາກຖົ່ວ, ຜັກບົ້ງ ແລະ ຫົດນ້ຳ.
3. ການຂຽນຕົວເລກອາຣັບຕາມແບບ ແຕ່ 0 ຫາ 9 ແລະ ທາສີຮູບພາບເດັກນ້ອຍກັ້ງ ຄັນຣົ່ມເວລາຝົນຕົກ.

### III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ຊາມນ້ຳ, ຜ້າເຊັດໜ້າ, ແຟັບ ຫຼື ສະບູ, ເສື້ອກັນເປື້ອນ, ຮາວ ຫຼື ເຊືອກຕາກເຄື່ອງ,ຜ້າເຊັດມື. ຕົ້ນໝາກຖົ່ວ, ຜັກບົ້ງທີ່ປູກໃນມື້ກ່ອນ.
2. ມຸມສິລະປະສ້າງສັນ: ກະດານສຽບ ຫຼື ຕິດ. ສໍສີໄມ້ ຫຼື ສີທຽນ, ສໍດຳ ແລະ ຢາງ ລຶບ. ປຶ້ມບົດເຝິກຫັດຄະນິດສາດ ຫຼື ເຈ້ຍຕົວເລກອາຣັບແຕ່ 0 ຫາ 9: ເຈ້ຍຮູບພາບ ເດັກນ້ອຍກັ້ງຄັນຮົ່ມເວລາຝົນຕົກ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ລັກສະນະອາກາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລັກສະນະອາກາດ ປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນ ການທົດລອງຊັກ ແລະ ຕາກຜ້າເຊັດໜ້າ, ສັງເກດການ ເຕີບໃຫຍ່ຂອງຕົ້ນໝາກ ຖົ່ວ, ຜັກບົ້ງ ແລະ ຫົດນ້ຳ.
3. ຄວາມຖືກຕ້ອງໃນການຂຽນຕົວເລກອາຣັບແຕ່ 0-9 ຕາມແບບ ແລະ ທາສີຮູບພາບ
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງ ລຸນປະໂຫຍດຂອງລະດູຝົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ: ຝົນຕົກຊາວນາຫວ່ານກ້າ, ໄຖນາ ແລະ ດຳນາ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານ ແຂນ ແລະ ຂາ: ທ່າຍົກແຂນຂຶ້ນເທິງຫົວ, ພັບແຂນສອກເຂົ້າປາຍນິ້ວມືຈຸບ່າໄຫຼ່ ແລະ ທ່າຢືນຂາດຽວຍົກຂາຄູ້ເຂົ້າໄປທາງຫຼັງເອົາມືເບື້ອງຫຼັງຈັບໄວ້.
2. ໃຫ້ເດັກນ້ອຍແລ່ນຊິກແຊັກ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍ່າງເຮັດທ່າທາງເກັບຂີ້ເຫຍື່ອ
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ລະດູຝົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນໄດ້ຖືກຕ້ອງ.
2. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ປະຕິບັດຕົນໃນລະດູຝົນ.

### II. ເນື້ອໃນຕົ້ນຕໍ

1. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ.

- ຄຸນປະໂຫຍດຂອງລະດູຝົນ: ຝົນຕົກລົງມາເຮັດໃຫ້ດິນຊຸ່ມ, ຕົ້ນໄມ້ຂຽວງາມ, ຊາວນາ, ຊາວສວນມີນ້ຳປູກເຂົ້າ, ປູກຜັກ; ຄົນ, ສັດມີນ້ຳກິນ ແລະ ນ້ຳໃຊ້.
- ຜົນສະທ້ອນຂອງລະດູຝົນ: ໄປມາບໍ່ສະດວກ, ເປິເປື້ອນ, ມີນ້ຳຂັງ, ມີຍຸງຫຼາຍ, ພະຍາດໄຂ້ຍຸງລະບາດ, ຝົນຕົກຫຼາຍນ້ຳຖ້ວມ.

2. ການເວົ້າເປັນຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ຊາວນາ, ຝົນຕົກ, ດຳນາ, ຊາວສວນ, ປູກຜັກ, ຍຸງ, ນ້ຳຂັງ, ເປິເປື້ອນ.
- ປະໂຫຍກ: ຄົນດື່ມນ້ຳ, ສັດກິນນ້ຳ, ຝົນຕົກເຮັດໃຫ້ທາງເປິເປື້ອນ, ຊາວນາປູກເຂົ້າ, ຊາວສວນປູກຜັກ, ຕົ້ນໄມ້ປົ່ງໃບອ່ອນ, ຕົ້ນໄມ້ອອກດອກ ແລະ ໝາກ.

### III. ສື່ການຮຽນ-ການສອນ

ຮູບພາບ: ຍຸງ, ຊາວນາດຳນາ, ຊາວສວນປູກຜັກ, ຕົ້ນໄມ້ຂຽວງາມ, ຫົນທາງເປິເປື້ອນ, ນ້ຳຖ້ວມ, ຄົນດື່ມນ້ຳ, ສັດກິນນ້ຳ, ຕົ້ນໄມ້ປົ່ງໃບອ່ອນ, ຕົ້ນໄມ້ອອກດອກ ແລະ ໝາກ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລັກສະນະອາກາດໃນລະດູຝົນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ.
3. ນາຍຄູພາເດັກນ້ອຍເວົ້າເປັນຄຳສັບຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນໃນລະດູຝົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ.
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
3. ການປະຕິບັດຕົນໃນລະດູຝົນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈີກ-ຕິດຮູບພາບຕົ້ນໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຈີກ-ຕິດຮູບພາບຕົ້ນໄມ້ໄດ້ຖືກຕ້ອງ.
2. ຈີກ-ຕິດຮູບພາບຕົ້ນໄມ້ໃຫ້ສະອາດຈົບງາມ.
3. ເຝິກສາມະທິໃນການຈີກ-ຕິດຮູບພາບຕົ້ນໄມ້.

### II. ເນື້ອໃນຕົ້ນຕໍ

ການຈີກ-ຕິດຮູບພາບຕົ້ນໄມ້ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ. ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
2. ເຈ້ຍຮູບພາບຕົ້ນໄມ້ທີ່ມີຮອຍຈ້ຳ, ເຈ້ຍຮູບພາບຕົ້ນໄມ້ທີ່ຕິດແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຢຸບປາຍນິ້ວມືເຂົ້າ-ອອກ.
2. ໃຫ້ເດັກນ້ອຍສັງເກດຮູບພາບຕົ້ນໄມ້ທີ່ຕິດແລ້ວ, ສົນທະນາກ່ຽວກັບຂັ້ນຕອນການຈີກ-ຕິດຮູບພາບຕົ້ນໄມ້ຕາມຮອຍຈ້ຳ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການການຈີກ-ຕິດຮູບພາບຕົ້ນໄມ້ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການຈີກ-ຕິດຮູບພາບຕົ້ນໄມ້ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ຄວາມລະມັດລະວັງໃນເວລາໃຊ້ກາວ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຈີກ-ຕິດຮູບພາບຕົ້ນໄມ້.
2. ຄວາມສະອາດຈົບງາມຂອງການຈີກ-ຕິດຮູບພາບຕົ້ນໄມ້.
3. ສາມະທິໃນການຈີກ-ຕິດຮູບພາບຕົ້ນໄມ້.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນຣ່ອນດິນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ແບບຫຼິ້ນ, ອຸປະກອນ ແລະ ກະຕິກາການຫຼິ້ນໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນ: ແບບຫຼິ້ນຣ່ອນດິນຊາຍ.

### III. ສື່ການຮຽນ-ການສອນ

1. ດິນຊາຍ, ຊວ້ານນ້ອຍ, ເຂີງນ້ອຍ ແລະ ຜາຖາດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຕັ້ນໄປທາງຂ້າງຊ້າຍ ແລະ ຂ້າງຂວາຊ້າໆ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນ: ແບບຫຼິ້ນຣ່ອນດິນຊາຍ.
3. ໃຫ້ເດັກນ້ອຍຫຼິ້ນຊາຍ: ຣ່ອນດິນຊາຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນຣ່ອນດິນຊາຍ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ຫວ່ານຊາຍໃສ່ຕາກັນ, ຫຼິ້ນແລ້ວອະນາໄມຕີນ, ມືໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍຍົກແຂນຂຶ້ນເທິງຫົວແລ້ວແກວ່ງໄປ-ມາຊ້າໆ ຫຼັງຈາກນັ້ນ ປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ແບບຫຼິ້ນ, ອຸປະກອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ: ຊາວນາໄຖນາ, ຊາວນາດຳນາ, ຝົນຕົກໃສ່ຕົ້ນໄມ້, ຄວາຍ ລົງອາບນ້ຳ, ງົວກິນນ້ຳໃນໜອງ, ຕົ້ນໝາກມ່ວງເປັນໝາກ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ: ຮູບພາບຊາວນາໄຖນາ, ຊາວນາດຳນາ, ຝົນຕົກໃສ່ຕົ້ນໄມ້, ຄວາຍລົງອາບນ້ຳ, ງົວກິນນ້ຳໃນໜອງ, ຕົ້ນໝາກມ່ວງເປັນໝາກ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຮູບພາບປະກົດການກ່ອນຝົນຈະຕົກ: ຮູບພາບທ້ອງຟ້າມືດ, ຟ້າເຫຼື້ອມ, ລົມພັດ, ຝົກຕົກ.
3. ບົດຄຳຄ່ອງ ລັກສະນະອາກາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລັກສະນະອາກາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ່.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເປັນຊາວນາ ແລະ ຊາວສວນຢ່າງມ່ວນຊື່ນ.
3. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ
4. ມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ
2. ສົມມຸດເປັນຊາວນາໄຖນາ, ປູກເຂົ້າ ແລະ ເປັນຊາວສວນຂຸດດິນ ແລະ ປູກຜັກ.
3. ເວົ້າເປັນຄຳສັບຕາມຮູບພາບ: ຊາວນາ, ຝົນຕົກ, ຊາວສວນ, ປູກຜັກ, ຍຸງ, ນໍ້າຂັງ, ເປິເປື້ອນ ແລະ ເວົ້າເປັນປະໂຫຍກຕາມຮູບພາບ: ຄົນດື່ມນໍ້າ, ສັດກິນນໍ້າ, ຝົນຕົກເຮັດໃຫ້ທາງເປິເປື້ອນ, ຊາວນາປູກເຂົ້າ, ຊາວສວນປູກຜັກ, ຕົ້ນໄມ້ປົ່ງໃບອ່ອນ, ຕົ້ນໄມ້ອອກດອກ ແລະ ໝາກ, ຄົນດຳນາ

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງມືຊາວນາ, ຊາວສວນຈຳລອງ. ຕົ້ນເຂົ້າ ແລະ ຕົ້ນຜັກຈຳລອງ.
2. ມຸມອ່ານ: ກະດານສຽບ ຫຼື ຕິດ. ຮູບພາບ: ຄົນດື່ມນໍ້າ, ສັດກິນນໍ້າ, ຫົນທາງເປິເປື້ອນ, ຊາວນາປູກເຂົ້າ, ຊາວສວນປູກຜັກ, ຕົ້ນໄມ້ປົ່ງໃບອ່ອນ, ຕົ້ນໄມ້ອອກດອກ ແລະ ໝາກ, ຊາວນາ, ຝົນຕົກ, ຄົນດຳນາ, ຊາວສວນ, ປູກຜັກ, ຍຸງ, ນໍ້າຂັງ, ເປິເປື້ອນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາເດັກນ້ອຍກ່ຽວກັບຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູຝົນ.
2. ນາຍຄູແນະນຳວິທີຫຼິ້ນ,ໃຫ້ເດັກເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເປັນຊາວນາ ແລະ ຊາວສວນ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ  ເວົ້າປະໂຫຍກຕາມຮູບພາບ, .
4. ການມີມາລະຍາດໃນການອ່ານ ແລະ ຫຼິ້ນ.

# ກິດຈະກໍາເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຕາມຄໍາສັ່ງຕາມນາຍຄູແນະນໍາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຕາມຄໍາສັ່ງຂອງນາຍຄູແນະນໍາໄດ້ຖືກຕ້ອງ.
2. ຟັງຄໍາສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຕາມຄໍາສັ່ງຂອງນາຍຄູແນະນໍາ: ກັ້ງຄັນຮົ່ມ, ຕາກເຄື່ອງ ແລະ ຂີ່ເຮືອ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານຂາ ແລະ ແອວ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າໂຍ່ງໂຍະຂາລົງ, ທ່າທ້ອງ-ຫຼັງ.
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກເບື້ອງຊ້າຍ-ຂວາ.
3. ນາຍຄູແນະນໍາ ແລະ ສາທິດການປະຕິບັດຕາມຄໍາສັ່ງຂອງນາຍຄູແນະນໍາ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຕາມຄໍາສັ່ງຂອງນາຍຄູແນະນໍາ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄໍາສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຕາມຄໍາສັ່ງຂອງນາຍຄູແນະນໍາ.
2. ຄວາມຕັ້ງໃຈຟັງຄໍາສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ລະດູແລ້ງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງໄດ້ຊັດເຈນ.
3. ປະຕິບັດຕົນໃນລະດູແລ້ງ.

### II. ເນື້ອໃນຕົ້ນຕໍ

1. ຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ.
- ຄຸນປະໂຫຍດຂອງລະດູແລ້ງ: ຕົ້ນໄມ້ປົ່ງໃບອ່ອນ, ຜັກ ແລະ ດອກໄມ້ງາມ; ມີແສງແດດໃຫ້ແສງສະຫວ່າງ ການໄປ-ມາສະດວກ, ຕາກເຄື່ອງແຫ້ງໄວ, ຕົ້ນໄມ້ອອກດອກ ແລະ ໝາກ.
- ຜົນສະທ້ອນຂອງລະດູແລ້ງ: ອາກາດໜາວ: ຜິວໜັງແຕກແຫ້ງ; ຄົນເຈັບຄໍ ແລະ ເປັນໄຂ້ຫວັດ; ອາກາດຮ້ອນ: ດິນແຫ້ງແລ້ງ; ອາກາດອົບເອົ້າ; ອາຫານບູດໄວ; ແມງວັນຫຼາຍ; ພະຍາດຖອກທ້ອງລະບາດ.

2. ການເລົ່າຄຳຄ່ອງ ລະດູແລ້ງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກເນື້ອໃນຄຳຄ່ອງ.
- ຄຳສັບ: ລະດູແລ້ງ, ຕົ້ນໄມ້, ດອກໄມ້, ແສງແດດ, ຕາກ, ເຄື່ອງ, ແຫ້ງ, ແມງວັນ, ໄປ, ມາ, ສະດວກ.
- ປະໂຫຍກ: ລະດູແລ້ຕົ້ນໄມ້ປົ່ງໃບ, ດອກໄມ້ມີສີສວຍງາມ, ມີແສງແດດຕາກເຄື່ອງແຫ້ງໄວ, ເຮົາເຄື່ອນໄຫວໄປມາສະດວກ, ແມງວັນຈັບຕອມອາຫານ, ເຮົາກິນອາຫານບູດຈະເຈັບທ້ອງ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍຕາກເຄື່ອງ, ຕົ້ນໄມ້ອອກດອກ ແລະ ໝາກ, ດິນແຫ້ງແລ້ງ.
2. ບົດຄຳຄ່ອງ ລະດູແລ້ງ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຄຸນປະໂຫຍດຂອງລະດູແລ້ງ.
2. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບບຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ.
4. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດຕົນໃນລະດູແລ້ງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຄຸນປະໂຫຍດ ແລະ ຜົນສະທ້ອນຂອງລະດູແລ້ງ
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ.
3. ການປະຕິບັດຕົນໃນລະດູແລ້ງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຄຳສັບທີ່ປະສົມສະຫຼະ xູ̥

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກທິດທາງ ແລະ ຂຽນຄຳສັບທີ່ປະສົມສະຫຼະ xູ ໄດ້ຖືກຕ້ອງ.
2. ຂຽນຄຳສັບທີ່ປະສົມສະຫຼະ xູ ໄດ້ຖືກຕ້ອງ.
3. ມີຄວາມອົດທົນໃນການຂີດຂຽນຄຳສັບທີ່ປະສົມສະຫຼະ xູ .

### II. ເນື້ອໃນຕົ້ນຕໍ

ການຂຽນຄຳສັບທີ່ປະສົມສະຫຼະ xູ: ຄູ ຊູ ຍູ ງູ.

### III. ສື່ການຮຽນ-ການສອນ

1. ຢາງລຶບ, ສໍດຳ ຫຼື ສໍສີ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 2 (ໜ້າ 2) ຫຼື ເຈ້ຍຄຳສັບທີ່ປະສົມສະຫຼະ xູ: ຄູ ຊູ ຍູ ງູ.
3. ບົດຄຳຄ່ອງ ລະດູແລ້ງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າບົດຄຳຄ່ອງ ລະດູແລ້ງ ປະກອບທ່າທາງ.
2. ນາຍຄູພາເດັກນ້ອຍອ່ານປະໂຫຍກສັ້ນແລ້ວໃຫ້ເດັກນ້ອຍສັງເກດຄຳສັບທີ່ປະສົມສະຫຼະ xູ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຄຳສັບທີ່ປະສົມສະຫຼະ xູ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບວິທີຂີດຂຽນຄຳສັບທີ່ປະສົມສະຫຼະ xູ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກທິດທາງ ແລະ ຂຽນຄຳສັບທີ່ປະສົມສະຫຼະ xູ.
2. ຄວາມຖືກຕ້ອງໃນການຂີດຂຽນຄຳສັບທີ່ປະສົມສະຫຼະ xູ.
3. ຄວາມອົດທົນໃນການຂີດຂຽນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.

### III. ສື່ການຮຽນ-ການສອນ

1. ກອງ ແລະ ເພງປະກອບໜ່ວຍການສອນ.
2. ບົດຄຳຄ່ອງ ລະດູແລ້ງ.
3. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລະດູແລ້ງ ປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນ ແລະ ສາທິດວິທີຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ, ນາຍຄູຕິດຕາມ ແລະ ຊ່ວຍ ແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຄ່ອຍເຕັ້ນ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ .
6. ໃຫ້ເດັກນັ່ງລົງແລ້ວຢຽດຂາຊື່ໃຊ້ສອງມືຕຸບຂາຂຶ້ນ-ລົງຄ່ອຍໆ ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນນ້ຳຂຶ້ນ-ນ້ຳລົງ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ
2. ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ: ເສື້ອກັນໜາວ, ໂສ້ງຂາຍາວ, ຖົງຕີນ, ໝວກ, ຜ້າພັນຄໍ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ: ເສື້ອກັນໜາວ, ໂສ້ງຂາຍາວ, ຖົງຕີນ, ໝວກ, ຜ້າພັນຄໍ. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ
3. ບົດຄຳຄ່ອງ ລະດູແລ້ງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລະດູແລ້ງ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເປັນທ່ານໝໍນ້ອຍ ແລະ ເປັນຕົວລະຄອນໃນບົດນິທານຢ່າງມ່ວນຊື່ນ.
3. ຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ ແລະ ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນໄດ້ຖືກຕ້ອງ
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ
2. ການຫຼິ້ນບົດບາດສົມມຸດເປັນທ່ານໝໍນ້ອຍກວດເດັກນ້ອຍເຈັບທ້ອງ ແລະ ເປັນຕົວລະຄອນໃນບົດນິທານເລື່ອງດວງຕາເວັນ.
3. ການຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ: ເສື້ອກັນໜາວ, ໂສ້ງຂາຍາວ, ຖົງມື, ຖົງຕີນ. ໝວກ, ຜ້າພັນຄໍ ແລະ ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ: ຊາວນາໄຖນາ, ຊາວນາດຳນາ, ຝົນຕົກ ໃສ່ຕົ້ນໄມ້, ຄວາຍລົງອາບນໍ້າ, ງົວກິນນໍ້າໃນໜອງ, ຕົ້ນໝາກມ່ວງເປັນໝາກ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ຊຸດເຄື່ອງມືແພດຈຳລອງ. ໜ້າກາກຕົວລະຄອນໃນບົດນິ ທານເລື່ອງ ດວງຕາເວັນ.
2. ມຸມເກມການສຶກສາ: ກະດານສຽບ ຫຼື ຕິດແຜ່ນເກມໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ: ເສື້ອກັນໜາວ, ໂສ້ງຂາຍາວ, ຖົງມື, ຖົງຕີນ. ໝວກ, ຜ້າພັນຄໍ ແລະ ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ: ຊາວນາໄຖນາ, ຊາວນາດຳນາ, ຝົນຕົກໃສ່ຕົ້ນໄມ້, ຄວາຍລົງອາບນໍ້າ, ງົວກິນນໍ້າໃນໜອງ, ຕົ້ນໝາກມ່ວງເປັນໝາກ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ ແລະ ບົດຄຳຄ່ອງ ລະດູແລ້ງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ລະດູແລ້ງປະກອບທ່າທາງຕາມຈິນຕະນາການ
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເປັນທ່ານໝໍນ້ອຍ ແລະ ເປັນຕົວລະຄອນໃນບົດນິທານ
3. ຄວາມຖືກຕ້ອງໃນການຕໍ່ໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ ແລະ ຈັບຄູ່ທີ່ຄືກັນຮູບພາບຄຸນປະໂຫຍດຂອງລະດູຝົນ
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດໄດ້ຖືກຕ້ອງ.
2. ເວົ້າຄຳສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ: ອາບນໍ້າ, ນຸ່ງເຄື່ອງ, ໃສ່ເກີບ, ໃສ່ໝວກ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແອວ ແລະ ຕີນ (ເບິ່ງປື້ມຄູ່ມືຄູ)

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແອວ ແລະ ຕີນ: ທ່າໝູນແອວໄປອ້ອມຮອບ ແລະ ທ່າເຢ່ງເຢ້ຂຶ້ນ-ລົງ.
2. ໃຫ້ເດັກນ້ອຍຍ່າງເຕະຂາໄປທາງໜ້າ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຮັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມນາຍຄູກຳນົດ.
2. ການເວົ້າຄຳສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
3. ເວົ້າເປັນຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.
- ການປະຕິບັດຕົນໃນລະດູແລ້ງ: ຍາມໜາວ: ນຸ່ງເຄື່ອງກັນໜາວ, ໃສ່ເກີບສຸບ, ໃສ່ໝວກ, ດື່ມ ແລະ ອາບນ້ຳອຸ່ນ. ຍາມຮ້ອນ: ນຸ່ງເຄື່ອງທີ່ບາງ, ອາບນ້ຳ, ຫຼິ້ນຢູ່ບ່ອນຮົ່ມ, ເວລາເດີນທາງ ໄປມາຄວນ ໃສ່ໝວກ ຫຼື ກັ້ງຄັນຮົ່ມ.
- ການປະຕິບັດຕົນໃນລະດູຝົນ: ການເດີນທາງໄປມາໃນເວລາຝົນຕົກຄວນກັ້ງຄັນຮົ່ມ ຫຼື ນຸ່ງເສື້ອກັນຝົນ, ບໍ່ນຸ່ງເຄື່ອງປຽກຝົນ ແລະ ເວລາຝົນຕົກຄວນຢູ່ເຮືອນ.
2. ການຟັງນິທານເລື່ອງ ອ້ອຍຈະເຮັດຫຍັງນໍ.
3. ການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ:
- ຄຳສັບ: ເສື້ອກັນໜາວ, ໝວກ, ເກີບສຸບ, ຄັນຮົ່ມ, ອາບນ້ຳ.
- ປະໂຫຍກ: ນາງນ້ຳຫອມໃສ່ເກີບຜ້າ, ນາງນ້ຳຫອມໃສ່ໝວກ, ນາງນ້ຳຫອມນຸ່ງເຄື່ອງກັນໜາວ, ນາງນ້ຳຫອມດື່ມ ແລະ ອາບນ້ຳອຸ່ນ, ແມ່ກັ້ງຄັນຮົ່ມໃນເວລາຝົນຕົກ, ນາງນ້ຳຫອມນຸ່ງເສື້ອກັນຝົນໃນເວລາຝົນຕົກ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍຫົ່ມເສື້ອກັນໜາວ, ເດັກນ້ອຍໃສ່ເກີບ, ເດັກນ້ອຍໃສ່ໝວກ, ເດັກນ້ອຍດື່ມນ້ຳອຸ່ນ, ແມ່ກັ້ງຄັນຮົ່ມ, ເດັກນ້ອຍຫຼິ້ນຢູ່ບ່ອນຮົ່ມ.
2. ບົດນິທານເລື່ອງ ອ້ອຍຈະເຮັດຫຍັງນໍ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຜົນສະທ້ອນຂອງລະດູແລ້ງ.
2. ນາຍຄູເລົ່ານິທານ, ສົນທະນາກ່ຽວກັບເນື້ອໃນຂອງບົດນິທານ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.
4. ນາຍຄູພາເດັກນ້ອຍເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
5. ນາຍຄູໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດຕົນໃນລະດູຝົນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ
2. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
4. ການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ-ຕິດຮູບພາບເສື້ອກັບໝາວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນໃນການຕັດ-ຕິດຮູບພາບເສື້ອກັບໝາວໄດ້ຖືກຕ້ອງ.
2. ຕັດ-ຕິດຮູບພາບເສື້ອກັບໝາວໃຫ້ສະອາດຈົບງາມ.
3. ມີຄວາມລະມັດລະວັງໃນເວລາໃຊ້ມີດຕັດ ແລະ ກາວ.

### II. ເນື້ອໃນຕົ້ນຕໍ

ການຕັດ, ຕິດຮູບພາບເສື້ອກັບໝາວ.

### III. ສື່ການຮຽນ-ການສອນ

1. ມີດຕັດປາຍມົນ, ເຈ້ຍຂາວ, ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
2. ເຈ້ຍຮູບພາບເສື້ອກັບໝາວ, ເຈ້ຍຮູບພາບເສື້ອກັບໝາວທີ່ຕິດແລ້ວ.
3. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຕັດເຈ້ຍເທິງກາງຫາວ.
2. ໃຫ້ເດັກນ້ອຍສັງເກດຮູບພາບເສື້ອກັບໝາວທີ່ຕິດແລ້ວ, ສົນທະນາກ່ຽວກັບຂັ້ນຕອນການຕັດ-ຕິດຮູບພາບເສື້ອກັບໝາວ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ-ຕິດຮູບພາບເສື້ອກັບໝາວ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນກ່ຽວກັບຂັ້ນຕອນການຕັດ-ຕິດເສື້ອກັບໝາວ.
6. ສຶກສາອົບຮົມເດັກກ່ຽວກັບຄວາມລະມັດລະວັງ ແລະ ຄວາມສາມັກຄີໃນການເກັບມ້ຽນອຸປະກອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕັດ-ຕິດຮູບພາບເສື້ອກັບໝາວ.
2. ຄວາມສະອາດຈົບງາມຂອງການຕັດ-ຕິດຮູບພາບເສື້ອກັບໝາວ.
3. ຄວາມລະມັດລະວັງໃນເວລາໃຊ້ມີດຕັດ ແລະ ກາວ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.

### III. ສື່ການຮຽນ-ການສອນ

1. ເຊືອກຟາງ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຍ່າງຕາມສຽງເຄາະຊ້າໆ.
2. ນາຍຄູສະເໜີ ແລະ ສາທິດວິທີຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ອົດທົນລໍຖ້າຫຼິ້ນຕາມລຳດັບ, ຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍເອົາມືຄ້ຳແອວແລ້ວຮ່ອນແອວຂ້າງໆຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນເຕັ້ນຂ້າມຫ້ວຍ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງພະຍັນຊະນະ ແລະ ສະຫຼະຕາມຄຳສັບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບ: ປາ, ຂາ, ງາ, ຈ, ຫາ, ດາ, ພາ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບ: ປາ, ຂາ, ງາ, ຈ, ຫາ, ດາ, ພາ; ແຜ່ນເກມ ສະຫຼະ ×າ ແລະ ແຜ່ນເກມພະຍັນຊະນະ ປ ຂ ງ ຈ ຫ ດ ພ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມໂດມິໂນເຄື່ອງນຸ່ງປ້ອງກັນອາກາດໜາວ: ເສື້ອກັນໜາວ, ໂສ້ງຂາຍາວ, ຖົງຕີນ, ໝວກ, ຜ້າພັນຄໍ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຊື່ເກມ ແລະ ການຫຼິ້ນເກມຈັບຄູ່ພະຍັນຊະນະ ແລະ ສະຫຼະຕາມຄຳສັບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນເກມໃຫ້ໝູ່ເພື່ອນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງພະຍັນຊະນະ ແລະ ສະຫຼະຕາມຄຳສັບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ພະຍັນຊະນະຕາມຄຳສັບ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານຕາມຮູບພາບໃນປຶ້ມນິທານ ແລະ ນັບຮູບພາບບັນທັດ, ສໍດຳ, ຢາງລຶບ ແລະ ບວກຈຳນວນ 12 13 16 ອັນ ໄດ້ຖືກຕ້ອງ.
3. ຕັດ, ຕິດຮູບ ແລະ ຂຽນ ສະຫຼະ xາ, xິ, xີ. xະ , xູ , xິ ໄດ້ຢ່າງຖືກຕ້ອງ
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ
2. ການສັງເກດ ແລະ ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ ຂ້ອຍຈະເຮັດຫຍັງບໍ. ນັບຮູບພາບບັນທັດ, ສໍດຳ, ຢາງລຶບ ແລະ ບວກຈຳນວນ 12 13 16 ອັນ .
3. ການຕັດ, ຕິດຮູບເສື້ອກັນໜາວ ແລະ ຂຽນສະຫຼະ xາ, xິ, xີ. xະ, xິ, xູ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ກະດານສຽບ ຫຼື ຕິດ. ບັດຮູບພາບບັນທັດ 12 ອັນ, ສໍດຳ 13 ກ້ານ, ຢາງລຶບ 16 ອັນ. ປຶ້ມນິທານເລື່ອງ ຂ້ອຍຈະເຮັດຫຍັງບໍ. ປຶ້ມບົດເຝິກຫັດພາສາລາວ ຫຼື ເຈ້ຍແບບ ຂຽນສະຫຼະ xາ, xິ, xີ. xະ, xິ, xູ.
2. ມຸມສິລະປະສ້າງສັນ: ມີດຕັດປາຍມົນ ແລະ ກາວສຳລັບ ຕິດ. ສໍດຳ ແລະ ຢາງລຶບ, ເຈ້ຍຮູບພາບເສື້ອກັນໜາວ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນລະດູແລ້ງ ແລະ ລະດູຝົນ.
2. ນາຍຄູແນະນຳວິທີຫຼິ້ນໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມອ່ານ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບກັບຫມູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການອ່ານຕາມຮູບພາບໃນປຶ້ມນິທານ ແລະ ນັບຮູບພາບບັນທັດ, ສໍດຳ, ຢາງລຶບ ແລະ ບວກຈຳນວນ 12 13 16 ອັນ.
3. ຄວາມຖືກຕ້ອງໃນການຕັດ, ຕິດຮູບ ແລະ ຂຽນສະຫຼະ xາ, xິ, xີ. xະ, xິ xູ.
4. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນໃນເວລາຫຼິ້ນ.

# ເອກະສານອ້າງອີງ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ


1. ປຶ້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປຶ້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 1 ປີ 2008.
3. ປຶ້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 2 ປີ 2009.
4. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.


## ກິດຈະກຳວົງມົນ


6. ຄູ່ມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.
8. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.


## ກິດຈະກຳສິລະປະສ້າງສັນ


9. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
10. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນຊັ້ນອະນຸບານ ປີ 2005.
11. ກະຊວງສຶກສາທິການ, ປຶ້ມຫຼັກການສອນອະນຸບານລະບົບ 11+2 ປີ 2008 (ໜ້າ 93).


## ກິດຈະກຳການຫຼິ້ນກາງແຈ້ງ


12. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
13. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
14. ປຶ້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).


## ກິດຈະກຳເກມການສຶກສາ


15. ປຶ້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປຶ້ມແຜນຈັດປະສົບການຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
16. ປຶ້ມວິຊາ: ຫຼັກການສອນ 11+3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).


## ກິດຈະກຳການຫຼິ້ນຕາມມຸມ


17. ປຶ້ມວິຊາຊອກຮູ້ສະພາບແວດລ້ອມ 11+3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
18. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປຶ້ມແຜນຈັດປະສົບການຊັ້ນອະນຸບານສຶກສາປີທີ 1, ພິມປີ 2014.
19. ປຶ້ມການພັດທະນາໂຮງຮຽນຄຸນນະພາບ, ຄູ່ມືຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).